ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 296 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 29.08.2022

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 (ສະບັບປັບປຸງ)

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິຂອງກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກຸມພາ ປີ 2022 ສະບັບເລກທີ 02/ລບ, ລົງວັນທີ 28 ກຸມພາ 2022;
- ອີງຕາມ ໜັງສືສະເໜີ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 11/ຄຄຊ, ລົງວັນທີ 12 ສິງຫາ 2022.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

**ມາດຕາ 1** ຮັບຮອງ ແລະ ປະກາດໃຊ້ "ຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 (ສະບັບປັບປຸງ)".

**ມາດຕາ 2** ມອບໃຫ້ຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນເຈົ້າການໃນການປະສານສົມທົບກັບບັນດາພາກສ່ວນກ່ຽວຂ້ອງ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 (ສະບັບປັບປຸງ) ໃຫ້ໄດ້ຮັບຜົນດີ.

**ມາດຕາ 3** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ພັນຄຳ ວິພາວັນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

# ຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 (ສະບັບປັບປຸງ)

ນະຄອນຫຼວງວຽງຈັນ, ສິງຫາ 2022

## ສາລະບານ


ຄຳນຳ... v

ອະທິບາຍຄຳສັບ vii

**ພາກທີ I ສະພາບພື້ນເດັ່ນການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃນໄລຍະ 10 ປີ ຜ່ານມາ (2011-2020)** 1

I. **ຜົນສຳເລັດ** 4

1. ສັງລວມສະພາບການພັດທະນາຕະຫຼາດທຶນ ສາກົນ ແລະ ພາກພື້ນ 4

2. ຜົນສຳເລັດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2011-2020) 5

2.1 ການລະດົມທຶນຜ່ານຕະຫຼາດທຶນ, ການສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ 5

2.1.1 ການລະດົມທຶນຜ່ານຕະຫຼາດທຶນ 5

2.1.2 ການສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດຈົດທະບຽນ 7

2.1.3 ການພັດທະນາຜະລິດຕະພັນຫຼັກຊັບ 9

2.2 ການສ້າງ ແລະ ປັບປຸງນິຕິກຳ ແລະ ນະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ 9

2.3 ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ 10

2.3.1 ການສ້າງຄວາມເຂັ້ມແຂງຂອງ ຄຄຊ ແລະ ສຄຄຊ 10

2.3.2 ການພັດທະນາລະບົບເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ 11

2.3.3 ການຮ່ວມມືສາກົນ 11

2.4 ການສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ 13

2.4.1 ພັດທະນາຕະຫຼາດຫຼັກຊັບ 13

2.4.2 ການສ້າງ ແລະ ພັດທະນາສະຖາບັນສື່ກາງດ້ານຫຼັກຊັບ 16

2.5 ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ.. 18

2.5.1 ການຂະຫຍາຍຖານຜູ້ລົງທຶນ ........ 18

2.5.2 ການປົກປ້ອງຜູ້ລົງທຶນ ........ 19

2.5.3 ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ........ 20

**II. ຂໍ້ຄົງຄ້າງ** ........ 21

**III. ບົດຮຽນທີ່ຖອດຖອນໄດ້** ........ 24

**ພາກທີ II ຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ ໄລຍະ 10 ປີຕໍ່ໜ້າ (2021-2030) ແລະ ວິໄສທັດ ຮອດປີ 2035** ........ 26

**I. ສະພາບການພັດທະນາຕະຫຼາດທຶນສາກົນ, ພາກພື້ນ ແລະ ພາຍໃນປະເທດ** ........ 26

1. ກາລະໂອກາດ ........ 27

2. ສິ່ງທ້າທາຍ ........ 27

**II. ວິໄສທັດ ຮອດປີ 2035** ........ 28

**III. ທິດທາງລວມ, ຄາດໝາຍລວມ ແລະ ຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ໄລຍະ 10 ປີ (2021-2030)** ........ 28

1. ທິດທາງລວມ ........ 28

2. ຄາດໝາຍລວມ ........ 29

3. ຍຸດທະສາດ ........ 30

**ພາກທີ III ແຜນພັດທະນາຕະຫຼາດທຶນຂອງ ສປປ ລາວ ໄລຍະ 5 ປີ (2021-2025)** ........ 31

**I. ທິດທາງລວມ** ........ 31

**II. ຄາດໝາຍລວມ** ........ 32

ຍຸດທະສາດ ທີ I: ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ (2 ແຜນງານ) ........ 34

ຍຸດທະສາດ ທີ II: ສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ (1 ແຜນງານ) ........ 37

ຍຸດທະສາດ ທີ III: ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາ ຜະລິດຕະພັນຫຼັກຊັບ (1 ແຜນງານ)........................................................................ 39

ຍຸດທະສາດ ທີ IV: ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມ ໃນຕະຫຼາດທຶນ (1 ແຜນງານ) ............................................................................... 42

**ພາກທີ IV ມາດຕະການຈັດຕັ້ງປະຕິບັດ**......................................................................................45

ເອກະສານຊ້ອນທ້າຍ.....................................................................................................................47

**ຄໍານໍາ**

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 02 ທັນວາ 1975 ໂດຍສະເພາະ ພາຍຫຼັງທີ່ ພັກ ແລະ ລັດຖະບານ ໄດ້ຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ຢ່າງມີຫຼັກການຂອງພັກ ນັບແຕ່ປີ 1986 ເປັນຕົ້ນມາ, ເສດຖະກິດ ຂອງ ສປປ ລາວ ໄດ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ ຊຶ່ງຂະແໜງການທະນາຄານ ໄດ້ປະກອບສ່ວນອັນສໍາຄັນ ຕໍ່ການຂະຫຍາຍຕົວດັ່ງກ່າວ.

ອີງໃສ່ຄວາມຈໍາເປັນ ໃນການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່, ການສະໜອງທຶນຈາກທະນາຄານທຸລະກິດພຽງຢ່າງດຽວ ບໍ່ສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການລະດົມທຶນໃນໄລຍະໃໝ່ ໂດຍສະເພາະແມ່ນ ການລະດົມທຶນໄລຍະຍາວ ເປັນຈໍານວນຫຼາຍ ເຮັດໃຫ້ການປະກອບສ່ວນເຂົ້າໃນການພັດທະນາພື້ນຖານການຜະລິດ ມີຂໍ້ຈໍາກັດ. ສະນັ້ນ, ພັກຈຶ່ງໄດ້ກໍານົດທິດທາງຢ່າງຈະແຈ້ງ ໃນມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກປະຊາຊົນປະຕິວັດລາວ ຄື: ໃຫ້ ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າ ສ້າງ ແລະ ພັດທະນາຕະຫຼາດການເງິນ ເພື່ອລະດົມທຶນໄລຍະຍາວ ແລະ ເປີດກວ້າງການໃຫ້ສິນເຊື່ອໄລຍະຍາວ ເພື່ອສ້າງພື້ນຖານໂຄງລ່າງໃຫ້ມີຄວາມໜັກແໜ້ນ. ອີງໃສ່ທິດທາງດັ່ງກ່າວ ລັດຖະບານ ຈຶ່ງໄດ້ກໍານົດໃຫ້ສ້າງຕັ້ງຕະຫຼາດທຶນຂຶ້ນ (ຕະຫຼາດຫຼັກຊັບລາວ) ໃນໄລຍະທ້າຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI (2006-2010).

ຜ່ານການເອົາໃຈໃສ່ຊີ້ນໍາ-ນໍາພາຢ່າງເລິກເຊິ່ງຈາກຂັ້ນເທິງ ປະກອບກັບຄວາມເປັນເຈົ້າການຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ (ຄຄຊ) ທີ່ມີສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ) ເປັນເສນາທິການ, ການຊີ້ນໍາ-ນໍາພາຢ່າງເປັນລະບົບຕໍ່ເນື່ອງ ຂອງ ລັດຖະບານ ແລະ ການສະໜັບສະໜູນຈາກທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ, "ຕະຫຼາດຫຼັກຊັບລາວ" ໄດ້ຮັບການສ້າງຕັ້ງຂຶ້ນດ້ວຍການຮ່ວມທຶນລະຫວ່າງ ທະນາຄານແຫ່ງ ສປປ ລາວ (ຕາງໜ້າໃຫ້ລັດຖະບານ) ຖືຮຸ້ນ 51% ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ ຖືຮຸ້ນ 49% ໃນວັນທີ 10 ຕຸລາ 2010 ແລະ ເລີ່ມດໍາເນີນການເຄື່ອນໄຫວແຕ່ ວັນທີ 11 ມັງກອນ 2011 ເປັນຕົ້ນມາ. ການສ້າງຕັ້ງ ຕລຊລ ແມ່ນຈຸດເລີ່ມຕົ້ນຂອງການສ້າງ ແລະ ພັດທະນາຕະຫຼາດທຶນດ້ວຍກົນໄກໃໝ່ ເພື່ອປະກອບສ່ວນສໍາຄັນຕໍ່ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.

ໃນໄລຍະຕົ້ນ (2010-2015), ການເຄື່ອນໄຫວຂອງຕະຫຼາດທຶນລາວ ຍັງຂາດແຜນຍຸດທະສາດການພັດທະນາຕະຫຼາດທຶນ ຢ່າງເປັນລະບົບ ເຮັດໃຫ້ການເຄື່ອນໄຫວຂອງຜູ້ມີສ່ວນຮ່ວມຕະຫຼາດທຶນ ກໍ່ຄື ຜູ້ຄຸ້ມຄອງວຽກງານຫຼັກຊັບ ບໍ່ຄ່ອງຕົວ ແລະ ຂາດຈຸດສຸມ ໃນການພັດທະນາ ສົ່ງຜົນໃຫ້ການເຄື່ອນໄຫວຂອງລະບົບຕະຫຼາດທຶນລາວ ບໍ່ສາມາດຕອບສະໜອງໄດ້ຢ່າງເຕັມສ່ວນກັບການພັດທະນາເສດຖະກິດ-ສັງຄົມຂອງປະເທດ ໂດຍສະເພາະແມ່ນ ການສ້າງຊ່ອງທາງລະດົມທຶນໄລຍະຍາວ ໃຫ້ແກ່ວິສາຫະກິດ ທີ່ມີຕົ້ນທຶນບໍ່ສູງ. ສະນັ້ນ, ເພື່ອພັດທະນາລະບົບຕະຫຼາດທຶນໃຫ້ເປັນແຫຼ່ງລະດົມທຶນໄລຍະຍາວຢ່າງແທ້ຈິງ, ເປັນສະໜາມຝຶກຝົນຫຼໍ່ຫຼອມວິສາຫະກິດໃຫ້ມີຄວາມເຂັ້ມແຂງ ແລະ ມີຄວາມອາດສາມາດແຂ່ງຂັນກັບສາກົນ ທັງເປັນການປູພື້ນຖານໃຫ້ແກ່ການກ້າວສູ່ສັງຄົມນິຍົມ ຈຶ່ງໄດ້ສ້າງແຜນຍຸດທະສາດພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ ແຕ່ປີ 2016-2025 ສະບັບທໍາອິດຂຶ້ນ ເຊິ່ງລັດຖະບານໄດ້ອອກດໍາລັດຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດດັ່ງກ່າວ ໃນວັນທີ 10 ມີນາ 2015. ແຜນຍຸດທະສາດສະບັບດັ່ງກ່າວ ແມ່ນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໂດຍສະເພາະແມ່ນ ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 5, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ທັງເປັນການສະໜັບສະໜູນຍຸດທະສາດ

ການພັດທະນາລະບົບສະຖາບັນການເງິນ-ເງິນຕາຂອງ ສປປ ລາວ ໄລຍະ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030.

ເຖິງແນວໃດກໍ່ຕາມ ເພື່ອຮັບປະກັນການພັດທະນາລະບົບຕະຫຼາດທຶນ ໃຫ້ເດີນໄປຄຽງຄູ່ກັບຕະຫຼາດເງິນຢ່າງໝັ້ນທ່ຽງ ແນໃສ່ປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ພ້ອມທັງ ໃຫ້ແທດເໝາະກັບສະພາບການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃນແຕ່ລະໄລຍະ ແລະ ໃຫ້ສາມາດເຊື່ອມໂຍງກັບສາກົນເທື່ອລະກ້າວ ມີຄວາມຈຳເປັນຢ່າງຍິ່ງຕ້ອງມີການຕີລາຄາການຈັດຕັ້ງປະຕິບັດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີຜ່ານມາ (2011-2020) ແລະ ທົບທວນຄືນຍຸດທະສາດການພັດທະນາຕະຫຼາດທຶນ 10 ປີຕໍ່ໜ້າ (2021-2030).

ການປັບປຸງແຜນຍຸດທະສາດໃນຄັ້ງນີ້ ໄດ້ອີງໃສ່ບາງປັດໄຈຕົ້ນຕໍ ດັ່ງນີ້:

1) ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ;
2) ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ທຫລ (2021-2025);
3) ອີງໃສ່ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025);
4) ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ (2021-2023)
5) ຂໍ້ຄົງຄ້າງຂອງການເຄື່ອນໄຫວ ຂອງຕະຫຼາດທຶນໃນ 10 ປີ ຜ່ານມາ (2011-2020);
6) ແຜນປະຕິບັດງານກ່ຽວກັບຕະຫຼາດທຶນແບບຍືນຍົງອາຊຽນ (Roadmap for ASEAN Sustainable Capital Markets);
7) ອີງໃສ່ ທ່າອ່ຽງລວມຂອງ ສາກົນ, ພາກພື້ນ ແລະ ສະພາບຄວາມຫຍຸ້ງຍາກດ້ານການເງິນ-ເງິນຕາ ພາຍໃນປະເທດ.

ໂຄງປະກອບຍຸດທະສາດສະບັບນີ້ ແບ່ງອອກເປັນ 4 ພາກຄື:

ພາກທີ I: ສະພາບພົ້ນເດັ່ນການພັດທະນາຕະຫຼາດທຶນ ຢູ່ ສປປ ລາວ ໃນໄລຍະ 10 ປີ ຜ່ານມາ (2011-2020)

ພາກທີ II: ຍຸດທະສາດການພັດທະນາຕະຫຼາດທຶນຢູ່ ສປປ ລາວ ໄລຍະ 10 ປີຕໍ່ໜ້າ (2021-2030) ແລະ ວິໄສທັດຮອດປີ 2035;

ພາກທີ III: ແຜນງານໂຄງການພັດທະນາຕະຫຼາດທຶນ ໄລຍະ 5 ປີ (2021-2025);

ພາກທີ IV ມາດຕະການຈັດຕັ້ງປະຕິບັດ.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ແຜນຍຸດທະສາດສະບັບນີ້ ຈະເປັນເອກະສານອ້າງອີງສຳຄັນ ໃຫ້ແຕ່ລະພາກສ່ວນກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ຕາມພາລະບົດບາດໜ້າທີ່ຂອງຕົນ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນສູງສຸດຂອງວຽກງານ.

ຂ້າພະເຈົ້າ ຕາງໜ້າໃຫ້ຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນ ທີ່ໄດ້ເອົາໃຈໃສ່ປະກອບສ່ວນສ້າງແຜນຍຸດທະສາດສະບັບນີ້ ໃຫ້ສຳເລັດຕາມການມອບໝາຍ ແລະ ມີປະສິດທິຜົນເປັນຢ່າງດີ.

ນະຄອນຫຼວງວຽງຈັນ, ວັນທີ

**ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ**

## ອະທິບາຍຄຳສັບ

| | |
|---|---|
| ຕະຫຼາດການເງິນ | ໝາຍເຖິງ ຕະຫຼາດທີ່ດຳເນີນການເຊື່ອມໂຍງ ລະຫວ່າງ ຜູ້ທີ່ມີທຶນສະສົມ ແລະ ຜູ້ທີ່ຕ້ອງການນຳໃຊ້ທຶນ ເຊິ່ງແບ່ງອອກເປັນ 2 ປະເພດ ຄື: ຕະຫຼາດເງິນ ແລະ ຕະຫຼາດທຶນ. |
| ຕະຫຼາດເງິນ | ໝາຍເຖິງ ຕະຫຼາດທີ່ດຳເນີນທຸລະກຳທາງການເງິນ ດ້ວຍການນຳໃຊ້ເຄື່ອງມືທາງການເງິນ ເຊັ່ນ: ການຝາກເງິນ, ການປ່ອຍສິນເຊື່ອ ແລະ ອື່ນໆ ໂດຍຜ່ານສື່ກາງທາງດ້ານການເງິນ ເປັນຕົ້ນ: ທະນາຄານ ແລະ ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ. |
| ຕະຫຼາດທຶນ | ໝາຍເຖິງ ຕະຫຼາດທີ່ດຳເນີນທຸລະກຳທາງດ້ານການເງິນ ດ້ວຍການຈັດສັນທຶນໄລຍະຍາວ ແບບທາງກົງ ລະຫວ່າງ ຜູ້ທີ່ຕ້ອງການນຳໃຊ້ທຶນ ແລະ ຜູ້ທີ່ມີທຶນສະສົມ. |
| ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) | ໝາຍເຖິງ ການຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງເປັນການຈັດຕັ້ງສູງສຸດຂອງອົງການຄຸ້ມຄອງວຽກງານຫຼັກຊັບ ມີພາລະບົດບາດເປັນຜູ້ຄຸ້ມຄອງວຽກງານຫຼັກຊັບຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍແມ່ນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຜູ້ຮັບຜິດຊອບ ໂດຍກົງໃນການ ຄຸ້ມຄອງ, ຕິດຕາມກວດກາ ວຽກງານຫຼັກຊັບ ບົນພື້ນຖານການປະ ສານສົມທົບ ແລະ ແລກປ່ຽນຂໍ້ມູນກັບພາກສ່ວນອື່ນທີ່ກ່ຽວຂ້ອງ. |
| ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) | ໝາຍເຖິງ ການຈັດຕັ້ງໜຶ່ງ ທີ່ມີພາລະບົດບາດ ເປັນເສນາທິການໃຫ້ແກ່ ຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຫຼັກຊັບ ແລະ ມີຖານະທຽບເທົ່າກົມ ໂດຍແມ່ນທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງທາງດ້ານການຈັດຕັ້ງ-ພະນັກ ງານ. |
| ຕະຫຼາດຫຼັກຊັບລາວ (ຕລຊລ) | ໝາຍເຖິງ ສະຖາບັນການເງິນທີ່ດຳເນີນທຸລະກິດກ່ຽວກັບການຈົດທະບຽນຫຼັກຊັບ, ຊື້ ຂາຍຫຼັກຊັບ ແລະ ໄລ່ລຽງທຸລະກຳຫຼັກຊັບ. |
| ບໍລິສັດຫຼັກຊັບ | ໝາຍເຖິງ ສະຖາບັນການເງິນ ທີ່ດຳເນີນທຸລະກິດຫຼັກຊັບ. |
| ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ | ໝາຍເຖິງ ສະຖາບັນການເງິນ ທີ່ດຳເນີນທຸລະກິດໃນການສ້າງຕັ້ງ ແລະ ບໍລິຫານກອງທຶນເພື່ອການລົງທຶນ. |
| ບໍລິສັດປະເມີນມູນຄ່າຊັບສິນ | ໝາຍເຖິງ ນິຕິບຸກຄົນ ພາຍໃນ ຫຼື ຕ່າງປະເທດ ທີ່ໃຫ້ບໍລິການປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ. |
| ທະນາຄານດູແລຊັບສິນ | ໝາຍເຖິງ ທະນາຄານທຸລະກິດ ທີ່ສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍ ຫຼື ທະນາຄານທຸລະກິດຕ່າງປະເທດ ທີ່ໃຫ້ບໍລິການ ເກັບຮັກສາ, ຄຸ້ມຄອງຊັບສິນ ແລະ ເປັນຕົວແທນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ. |

| | |
|---|---|
| ບໍລິສັດກວດສອບ | ໝາຍເຖິງ ວິສາຫະກິດທີ່ສ້າງຕັ້ງຂຶ້ນ ແລະ ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ເພື່ອໃຫ້ບໍລິການກວດສອບ. |
| ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື | ໝາຍເຖິງ ນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຫຼື ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຂອງຕ່າງປະເທດ ທີ່ໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືກ່ຽວກັບ ລະດັບຄຸນນະພາບ ແລະ ຄວາມສ່ຽງຂອງບໍລິສັດ ແລະ ຫຼັກຊັບໃນວຽກງານຫຼັກຊັບ. |
| ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ | ໝາຍເຖິງ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ ທີ່ສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ ຫຼື ທະນາຄານທຸລະກິດ, ບໍລິສັດຫຼັກຊັບຕ່າງປະເທດ ທີ່ໃຫ້ບໍລິການເປັນຜູ້ຕາງໜ້າໃຫ້ແກ່ຜູ້ລົງທຶນ ໃນການຕິດຕາມການປະຕິບັດສິດ ແລະ ໜ້າທີ່ຂອງຜູ້ອອກຈຳໜ່າຍຮຸ້ນກູ້ ແລະ ພັນທະບັດລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ. |
| ວຽກງານຫຼັກຊັບ | ໝາຍເຖິງ ການອອກຈຳໜ່າຍ ຮຸ້ນ ແລະ ຮຸ້ນກູ້, ການເຄື່ອນໄຫວຂອງ ບໍລິສັດອອກຈຳໜ່າຍ ຮຸ້ນ ແລະ ຮຸ້ນກູ້, ບໍລິສັດຈົດທະບຽນ, ກອງທຶນເພື່ອການລົງທຶນ, ສະຖາບັນສື່ກາງດ້ານຫຼັກຊັບ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ສະມາຄົມວຽກງານຫຼັກຊັບ, ຕະຫຼາດຫຼັກຊັບ, ສູນຮັບຝາກຫຼັກຊັບ ແລະ ການຊື້ ຂາຍຫຼັກຊັບທີ່ບໍ່ຍຸຕິທຳ. |
| ຫຼັກຊັບ | ໝາຍເຖິງ ເຄື່ອງມືທາງດ້ານການເງິນ ປະກອບດ້ວຍ ຮຸ້ນ, ຮຸ້ນກູ້, ພັນທະບັດລັດຖະບານ, ໜ່ວຍລົງທຶນ, ອະນຸພັນ ແລະ ຫຼັກຊັບປະເພດອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງຜູ້ຖືຄອງມີສິດ ແລະ ຜົນປະໂຫຍດ ຕາມຄຸນລັກສະນະຂອງຫຼັກຊັບແຕ່ລະປະເພດ. |
| ຮຸ້ນ | ໝາຍເຖິງ ຫຼັກຊັບປະເພດທຶນ ທີ່ບໍລິສັດມະຫາຊົນ ນຳໃຊ້ເປັນເຄື່ອງມືລະດົມທຶນ ຊຶ່ງແບ່ງເປັນໜ່ວຍ ແຕ່ລະໜ່ວຍມີມູນຄ່າເທົ່າກັນ, ຜູ້ຖືຮຸ້ນ ມີຖານະເປັນເຈົ້າຂອງບໍລິສັດສ່ວນໃດສ່ວນໜຶ່ງ ແລະ ມີສິດໄດ້ຮັບຜົນປະໂຫຍດ ຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງ. |
| ຮຸ້ນກູ້ | ໝາຍເຖິງ ຫຼັກຊັບປະເພດໜີ້ ທີ່ບໍລິສັດນຳໃຊ້ເປັນເຄື່ອງມືລະດົມທຶນ ຊຶ່ງແບ່ງເປັນໜ່ວຍ ແຕ່ລະໜ່ວຍມີມູນຄ່າເທົ່າກັນ, ກຳນົດຜົນຕອບແທນໄວ້ລ່ວງໜ້າໃນອັດຕາສ່ວນເທົ່າກັນ ແລະ ຜູ້ຖືຮຸ້ນກູ້ ມີຖານະເປັນເຈົ້າໜີ້ຂອງບໍລິສັດ. |

| | |
|---|---|
| ພັນທະບັດລັດຖະບານ | ໝາຍເຖິງ ຫຼັກຊັບປະເພດໜີ້ ທີ່ລັດຖະບານນຳໃຊ້ເປັນເຄື່ອງມືເພື່ອລະດົມທຶນ ຊຶ່ງແບ່ງເປັນໜ່ວຍແຕ່ລະໜ່ວຍມີມູນຄ່າເທົ່າກັນ, ກຳນົດຜົນຕອບແທນໄວ້ລ່ວງໜ້າໃນອັດຕາສ່ວນເທົ່າກັນ ແລະ ຜູ້ຖືພັນທະບັດ ມີຖານະເປັນເຈົ້າໜີ້. |
| ຜູ້ລົງທຶນ | ໝາຍເຖິງ ຜູ້ລົງທຶນປະເພດ ບຸກຄົນ ແລະ ສະຖາບັນ ທັງພາຍໃນ ແລະ ຕ່າງ ປະເທດທີ່ລົງທຶນຊື້ ຂາຍ ຫຼັກຊັບ. |
| ນັກວິຊາຊີບທຸລະກິດຫຼັກຊັບ | ໝາຍເຖິງ ພະນັກງານຂອງບໍລິສັດຫຼັກຊັບ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ທີ່ມີ ວຸດທິການສຶກສາ, ປະສົບການ ແລະ ໄດ້ຮັບໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ເຊິ່ງປະກອບມີ: ນາຍໜ້າຊື້ ຂາຍຫຼັກຊັບ, ຜູ້ຄ້າຫຼັກຊັບ, ທີ່ປຶກສາດ້ານການເງິນ, ທີ່ປຶກສາດ້ານການລົງທຶນ, ຜູ້ວິເຄາະຫຼັກຊັບ, ຜູ້ບໍລິຫານກອງທຶນເພື່ອການລົງທຶນ ແລະ ນັກວິຊາຊີບທຸລະກິດຫຼັກຊັບອື່ນຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ. |
| ຜູ້ລົງທຶນປະເພດສະຖາບັນ | ໝາຍເຖິງ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ກອງທຶນເພື່ອການລົງທຶນ, ບໍລິສັດປະກັນໄພ, ກອງທຶນປະກັນສັງຄົມ ແລະ ສະຖາບັນ ຫຼື ນິຕິບຸກຄົນອື່ນ ຕາມການກຳນົດຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ. |
| ທຸລະກິດຫຼັກຊັບ | ໝາຍເຖິງ ການເປັນນາຍໜ້າຊື້ ຂາຍຫຼັກຊັບ, ການເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ, ທີ່ປຶກສາດ້ານການເງິນ ແລະ ການບໍລິຫານກອງທຶນເພື່ອການລົງທຶນ. |
| ບໍລິສັດຈົດທະບຽນ | ໝາຍເຖິງ ບໍລິສັດທີ່ໄດ້ນຳເອົາຮຸ້ນຂອງຕົນເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ. |
| ການຄຸ້ມຄອງບໍລິຫານ (Coporate Governance: CG) | ໝາຍເຖິງ ຂະບວນການບໍລິຫານບໍລິສັດໃຫ້ມີປະສິດທິພາບ ແນໃສ່ຮັບປະກັນຄວາມຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳ ຕໍ່ກັບຜູ້ມີສ່ວນຮ່ວມໃນບໍລິສັດ. |

# ພາກທີ I
# ສະພາບພົ້ນເດັ່ນການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃນໄລຍະ 10 ປີ ຜ່ານມາ (2011-2020)

ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງຕະຫຼາດທຶນລາວ ໃນ 10 ປີທີ່ຜ່ານມາ, ແມ່ນເຫດການສຸດທີ່ມີຄວາມໝາຍສຳຄັນເປັນຢ່າງຍິ່ງ, ເປັນຂີດໝາຍແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງຂະແໜງຕະຫຼາດທຶນ ທີ່ໄດ້ປະກອບສ່ວນໃນການປະຕິບັດແນວທາງປ່ຽນແປງໃໝ່ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ແນໃສ່ພັດທະນາປະເທດ ໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ໂດຍຊຸກຍູ້ການເຕີບໂຕຢ່າງຕໍ່ເນື່ອງ, ສົມດູນ ແລະ ຍືນຍົງ ແລະ ສືບຕໍ່ສູ້ຊົນຂ້າມຜ່ານຈາກສະຖານະພາບດັ່ງກ່າວ ໃຫ້ໄດ້ຢ່າງຂາດຕົວໃນປີ 2025 ພ້ອມທັງສ້າງບາດລ້ຽວໃໝ່ໃນການພັດທະນາປະເທດ ໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງ-ລະດັບສູງຕາມທິດສະດີເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ.

ການເຄື່ອນໄຫວໄລຍະຕົ້ນຂອງຕະຫຼາດທຶນລາວ (2010-2015) ເຖິງວ່າບໍ່ມີແຜນຍຸດທະສາດໃນການພັດທະນາຕະຫຼາດທຶນກໍ່ຕາມ ແຕ່ພວກເຮົາສາມາດສ້າງລະບົບ, ກົນໄກ, ລະບຽບການ ແລະ ກົງຈັກການຈັດຕັ້ງ ເພື່ອຮອງຮັບການເຄື່ອນໄຫວຂອງຜູ້ຄຸ້ມຄອງວຽກງານຫຼັກຊັບ ແລະ ໄດ້ມີຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເປັນລະບົບຄົບຊຸດພໍສົມຄວນ; ໄດ້ສ້າງໂອກາດໃຫ້ວິສາຫະກິດ ທັງພາກລັດ ແລະ ເອກະຊົນຈຳນວນໜຶ່ງ ສາມາດລະດົມທຶນດ້ວຍຕົ້ນທຶນທີ່ບໍ່ສູງ ເພື່ອນຳໄປຕໍ່ຍອດທຸລະກິດຂອງຕົນ ແລະ ໄດ້ສ້າງໃຫ້ວິສາຫະກິດດັ່ງກ່າວ ຄ່ອຍໆມີຄວາມເຂັ້ມແຂງດ້ານກົງຈັກການຈັດຕັ້ງ, ການເງິນ ແລະ ການຄຸ້ມຄອງບໍລິຫານ. ນອກຈາກນີ້, ຕະຫຼາດທຶນລາວ ຍັງໄດ້ສ້າງໝັ້ນແໜງຄວາມສົມດູນຂອງຕະຫຼາດການເງິນໃນ ສປປ ລາວ ຢ່າງເປັນຮູບປະທຳ.

ພາຍຫຼັງລັດຖະບານ ໄດ້ຮັບຮອງເອົາ ແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2016-2025), ການພັດທະນາຕະຫຼາດທຶນລາວ ໄດ້ມີບ່ອນອີງທີ່ໜັກແໜ້ນເຂັ້ມແຂງ ແລະ ເປັນລະບົບຫຼາຍຂຶ້ນ ໂດຍໄດ້ຜັນຂະຫຍາຍເປັນແຜນງານ ແລະ ໂຄງການ ເຊິ່ງປະກອບມີ 12 ແຜນງານ ແລະ 38 ໂຄງການ. ດ້ວຍຄວາມເອົາໃຈໃສ່ຂອງ ຄຄຊ ໃນການຊີ້ນຳ-ນຳພາຢ່າງໃກ້ສິດ ແລະ ການປະກອບສ່ວນດ້ວຍຄວາມຮັບຜິດຊອບສູງຂອງພະນັກງານໃນຂະແໜງຕະຫຼາດທຶນ ເຮັດໃຫ້ການຈັດຕັ້ງປະຕິບັດແຜນງານ ແລະ ໂຄງການ ຕາມທິດທາງທີ່ຍຸດທະສາດໄດ້ກຳນົດໄວ້ ໃນຊ່ວງໄລຍະປີ 2016-2020 ສາມາດປະຕິບັດໄດ້ ຫຼາຍກວ່າ 90%.

ຕະຫຼອດໄລຍະ 10 ປີ ທີ່ຜ່ານມາ, ລະບົບຕະຫຼາດທຶນ ໄດ້ມີຜົນສຳເລັດພົ້ນເດັ່ນ ດັ່ງນີ້:

1) ມີຊ່ອງທາງໃໝ່ ໃນການລະດົມທຶນ ແລະ ການລົງທຶນ ຂອງພາກລັດ ແລະ ເອກະຊົນ ເຊິ່ງການເຂົ້າເຖິງແຫຼ່ງທຶນດັ່ງກ່າວ ໄດ້ຮັບການຄຸ້ມຄອງຢ່າງມີປະສິດທິຜົນ. ຮອດທ້າຍປີ 2020, ວິສາຫະກິດທັງພາກລັດ ແລະ ເອກະຊົນ

ສາມາດລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ດ້ວຍການອອກຈຳໜ່າຍຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ ຜ່ານຕະຫຼາດທຶນ ໄດ້ທັງໝົດ 23.016 ຕື້ກີບ ກວມເອົາ 14,03% ຂອງ GDP;

2) ສ້າງໄດ້ບໍລິສັດຈົດທະບຽນ ຈຳນວນ 11 ແຫ່ງ ທີ່ມີວິໄນທາງດ້ານການເງິນຫຼາຍຂຶ້ນ, ຖືບັນຊີຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການກວດສອບບັນຊີຈາກຜູ້ກວດສອບຢ່າງເປັນປົກກະຕິ, ການຄຸ້ມຄອງບໍລິຫານ ໄດ້ຫັນເປັນມືອາຊີບຫຼາຍຂຶ້ນ ເຊິ່ງທັງໝົດເຫຼົ່ານີ້ ໄດ້ຊ່ວຍຕິດຕາມການຮົ່ວໄຫຼຂອງງົບປະມານລັດ. ພ້ອມນີ້, ຍັງເພີ່ມໂອກາດໃນການເຂົ້າເຖິງແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ແລະ ສາມາດສ້າງເຄືອຂ່າຍທາງທຸລະກິດໄດ້ເພີ່ມຂຶ້ນ;

3) ລັດຖະບານ ມີລາຍຮັບຈາກການເກັບອາກອນເພີ່ມຂຶ້ນໃນແຕ່ລະປີ, ແຕ່ປີ 2011-2020 ລັດຖະບານ ສາມາດເກັບອາກອນຈາກບໍລິສັດຈົດທະບຽນ ໄດ້ທັງໝົດ 3.239,02 ຕື້ກີບ, ສະເພາະປີ 2020 ລັດຖະບານສາມາດເກັບອາກອນຈາກບໍລິສັດຈົດທະບຽນ ທັງໝົດ 719 ຕື້ກີບ ເພີ່ມຂຶ້ນ 2,12 ເທົ່າຕົວ ເມື່ອທຽບກັບເກັບໄດ້ສະເລ່ຍຕໍ່ປີ ກ່ອນບໍລິສັດເຂົ້າຈົດທະບຽນ ເຊິ່ງມີພຽງແຕ່ປະມານ 230 ກວ່າຕື້ກີບຕໍ່ປີ;

4) ໄດ້ມີດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ (ປີ 2010) ແລະ ຖືກຍົກຂຶ້ນມາເປັນກົດໝາຍວ່າດ້ວຍຫຼັກຊັບ ໃນປີ 2012 ແລະ ໄດ້ປັບປຸງຄືນ ໃນປີ 2019 ແລະ ໄດ້ສ້າງ ແລະ ປັບປຸງລະບຽບການໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນ 73 ສະບັບ;

5) ມີກົງຈັກໃນການຄຸ້ມຄອງວຽກງານຫຼັກຊັບຢ່າງເປັນລະບົບ, ໄດ້ເປີດກວ້າງການຮ່ວມມືໃນຮູບແບບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຊ່ວຍເຫຼືອດ້ານວິຊາການ;

6) ມີນະໂຍບາຍອາກອນ ເພື່ອດຶງດູດຜູ້ລະດົມທຶນ ແລະ ຜູ້ລົງທຶນ ໃນຕະຫຼາດທຶນ ເປັນຕົ້ນ ການຫຼຸດອາກອນກຳໄລໃຫ້ແກ່ບໍລິສັດຈົດທະບຽນ 5% ເຫຼືອ 19% (ຈາກອັດຕາເດີມ 24%) ເປັນເວລາ 4 ປີຕໍ່ເນື່ອງ (ໃນປີ 2010) ແລະ ໄດ້ຫຼຸດເພີ່ມຕື່ມອີກ 7% ເຫຼືອ 13% (ຈາກອັດຕາເດີມ 20%) ເປັນເວລາ 4 ປີຕໍ່ເນື່ອງ ( ໃນປີ 2020). ສຳລັບຜູ້ລົງທຶນໃນຮຸ້ນ ມີການຍົກເວັ້ນອາກອນກຳໄລຈາກການຊື້-ຂາຍຮຸ້ນ (Capital Gain Tax) ຈາກ 10% ເຫຼືອ 0% ແລະ ອາກອນເງິນປັນຜົນຈາກ 10% ເຫຼືອ 0% (ໃນປີ 2011);

7) ຕລຊລ ໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງເປັນກ້າວໆ ໂດຍສະເພາະແມ່ນດ້ານ ບຸກຄະລາກອນ, ລະບົບໄອທີ, ກົນໄກການເຄື່ອນໄຫວທຸລະກິດ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຄຸ້ມຄອງສະມາຊິກ, ການຊື້-ຂາຍຫຼັກຊັບ ແລະ ການໃຫ້ບໍລິການຮັບຝາກຫຼັກຊັບ;

8) ສະຖາບັນສື່ກາງດ້ານຫຼັກຊັບ ໄດ້ຮັບການພັດທະນາ ແລະ ມີຄວາມຄົບຖ້ວນ ເພື່ອເອື້ອອຳນວຍໃຫ້ແກ່ ການດຳເນີນທຸລະກິດຫຼັກຊັບ ເຊິ່ງປັດຈຸບັນມີທັງໝົດ 24 ແຫ່ງ;

9) ພະນັກງານໃນຂະແໜງຕະຫຼາດທຶນ ມີຄວາມຮູ້ ຄວາມສາມາດກ່ຽວກັບວຽກງານຕະຫຼາດທຶນ, ສ້າງນັກວິຊາຊີບທຸລະກິດຫຼັກຊັບ ຈຳນວນ 72 ຄົນ ແລະ ໄດ້ຮັບການຝຶກອົບຮົມດ້ານວິຊາຊີບທຸລະກິດຫຼັກຊັບ ຢ່າງຕໍ່ເນື່ອງ ແລະ ມີຈັນຍາບັນ ໃນການໃຫ້ການບໍລິການໂດຍພື້ນຖານ, ໄດ້ມີຊ່ອງທາງໃນການໂຄສະນາເຜີຍແຜ່ວຽກງານຫຼັກຊັບທີ່ຫຼາກຫຼາຍ ເຮັດໃຫ້ມວນຊົນໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບຕະຫຼາດທຶນຫຼາຍຂຶ້ນ ແລະ ໄດ້ປະກອບສ່ວນຊື້-ຂາຍຫຼັກຊັບ ຕາມຄວາມສາມາດດ້ານການເງິນຂອງຕົນ;

10) ນອກຈາກນີ້, ຂະແໜງຕະຫຼາດທຶນ ໄດ້ປະກອບສ່ວນເຂົ້າໃນວຽກງານການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ໂດຍໄດ້ຕິດຕາມກວດກາຜ່ານກົນໄກການຮູ້ຈັກລູກຄ້າ (KYC ແລະ CDD) ຢ່າງເຄັ່ງຄັດ ຕໍ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ທີ່ມາລົງທຶນຢູ່ຕະຫຼາດທຶນລາວ.

**ລາຍລະອຽດຂອງຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ມີດັ່ງລຸ່ມນີ້:**

## I. ຜົນສຳເລັດ

### 1. ສັງລວມສະພາບການພັດທະນາຕະຫຼາດທຶນ ສາກົນ ແລະ ພາກພື້ນ

ໄລຍະປີ 2011-2020 ຕະຫຼາດທຶນສາກົນ ໄດ້ມີການພັດທະນາຢ່າງຕໍ່ເນື່ອງ ໂດຍການໝູນໃຊ້ເຕັກໂນໂລຊີທີ່ທັນສະໄໝຫຼາຍຂຶ້ນ ເຂົ້າໃນການໃຫ້ບໍລິການ, ການອອກຈຳໜ່າຍຜະລິດຕະພັນຫຼັກຊັບ ມີຫຼາຍຮູບແບບ ແລະ ສະຫຼັບສັບຊ້ອນ ເປັນຕົ້ນ: ການອອກຈຳໜ່າຍຫຼຽນດິຈິຕອນ ຄັ້ງທຳອິດ (Initial Coin Offering ຫຼື ICO), ການລົງທຶນໃນຊັບສິນດິຈິຕອນ. ນອກຈາກນີ້, ບັນດາສະຖາບັນສີກາງດ້ານຫຼັກຊັບ ແລະ ຕະຫຼາດຫຼັກຊັບຫຼາຍແຫ່ງ ຕ່າງກໍ່ເລີ່ມສົນໃຈນຳເອົາເຕັກໂນໂລຊີ Block chain ເຂົ້າຊ່ວຍໃນການພັດທະນາຄຸນນະພາບການບໍລິການຂອງຕົນ. ສະນັ້ນ, ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ ອົງການຄຸ້ມຄອງວຽກງານຫຼັກຊັບ ກໍ່ໄດ້ມີການປັບຕົວຢ່າງແຂງແຮງ ໃນການປັບປຸງໂຄງສ້າງອົງກອນພາຍໃນ ພ້ອມທັງ ສ້າງ ແລະ ປັບປຸງນິຕິກຳ ແລະ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ທັນສະໄໝຂຶ້ນກວ່າເກົ່າ ເພື່ອຮອງຮັບທິດທາງການປ່ຽນແປງໃໝ່ດັ່ງກ່າວ.

ສຳລັບ ບັນດາຕະຫຼາດທຶນທີ່ກຳລັງພັດທະນາ (Frontier Market) ໄດ້ຫັນໄປສູ່ການ ພັດທະນາ ແລະ ຍົກລະດັບຄຸນນະພາບການບໍລິການຂອງຕົນ ເພື່ອເພີ່ມຄວາມສາມາດໃນການແຂ່ງຂັນ. ສ່ວນຕະຫຼາດເກີດໃໝ່ (Emerging Market) ໄດ້ສະດຸ້ງໄວເພື່ອປັບຕົວໄປໃນທິດທາງດຽວກັນກັບສາກົນ ຕາມສະພາບຄວາມເປັນຈິງຂອງແຕ່ລະປະເທດ ໂດຍໄດ້ສຸມໃສ່ພັດທະນາຄຸນນະພາບ ແລະ ການບໍລິການ ເພື່ອດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ແລະ ໄດ້ສະໜັບສະໜຸນທຸລະກິດນະວັດຕະກຳ ແລະ ກຸ່ມທຸລະກິດທີ່ສ້າງຕັ້ງຂຶ້ນໃໝ່ (Startup Business) ເປັນອັນຕົ້ນຕໍ.

ສຳລັບຕະຫຼາດທຶນຂອງພາກພື້ນອາຊຽນ ໄດ້ມີການກຳນົດແຜນງານໃນການພັດທະນາ ໂດຍໄດ້ສຸມໃສ່ ການປັບປຸງໂຄງສ້າງພື້ນຖານ ແລະ ການເຊື່ອມໂຍງຕະຫຼາດໃນພາກພື້ນຫຼາຍຂຶ້ນ, ຊຸກຍູ້ການປັບປຸງບັນດາລະບຽບ ແລະ ຫຼັກການຂອງປະເທດສະມາຊິກມີຄວາມສອດຄ່ອງກັນ, ສົ່ງເສີມປະເພດຫຼັກຊັບຂອງອາຊຽນ ເພື່ອດຶງດູດການລົງທຶນ, ການສົ່ງເສີມການໃຫ້ບໍລິການຂ້າມແດນຂອງນັກວິຊາຊີບທຸລະກິດຫຼັກຊັບ, ການດຶງດູດການມີສ່ວນຮ່ວມຂອງຜູ້ລົງທຶນ ພ້ອມທັງ ຊຸກຍູ້ການສົ່ງເສີມການປະສານງານ ແລະ ຮ່ວມມືຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນຫຼາຍຂຶ້ນ. ຄຽງຄູ່ກັນນີ້ ກໍ່ມີການພັດທະນາສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຊື້-ຂາຍຫຼັກຊັບ ແລະ ຊຸກຍູ້ການອອກຈຳໜ່າຍ ແລະ ລົງທຶນໃນພັນທະບັດ ແລະ ຮຸ້ນກູ້ ເພີ່ມຂຶ້ນ ໂດຍສະເພາະການລົງທຶນໃນຜະລິດຕະພັນການເງິນສີຂຽວ ແລະ ຍືນຍົງ ເພື່ອຟື້ນຟູ ແລະ ປົກປັກຮັກສາສິ່ງແວດລ້ອມ.

## 2. ຜົນສຳເລັດການພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2011-2020)

### 2.1 ການລະດົມທຶນຜ່ານຕະຫຼາດທຶນ, ການສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດຈົດທະບຽນ ແລະ ພັດທະນາ ຜະລິດຕະພັນຫຼັກຊັບ

### 2.1.1 ການລະດົມທຶນຜ່ານຕະຫຼາດທຶນ

ມາຮອດປີ 2020 ລັດຖະບານ, ວິສາຫະກິດຂອງລັດ ແລະ ເອກະຊົນ ສາມາດລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ຜ່ານກົນໄກຕະຫຼາດທຶນ ໄດ້ເຖິງ 23.016 ຕື້ກີບ ກວມເອົາ 14,03% ຂອງ GDP ໂດຍການອອກຈຳໜ່າຍ ພັນທະບັດລັດຖະບານ, ຮຸ້ນສາມັນ ແລະ ຮຸ້ນກູ້ຢູ່ຕ່າງປະເທດ.

ແຫຼ່ງທຶນທີ່ໄດ້ຈາກການອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້ ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງໃນການຂະຫຍາຍທຸລະກິດ ແລະ ການບໍລິການຂອງວິສາຫະກິດ ໂດຍໄດ້ຖືກນຳໃຊ້ເຂົ້າໃນເປົ້າໝາຍຕ່າງໆ ເປັນຕົ້ນ ສ້າງເຂື່ອນໄຟຟ້າ, ສ້າງປໍ້ານໍ້າມັນ, ສູນການຄ້າ, ຜະລິດຊີມັງ, ຜະລິດນໍ້າມັນປາມ, ຂະຫຍາຍທຸລະກິດເຊົ່າສິນເຊື່ອ, ນຳໃຊ້ເປັນທຶນໝູນວຽນໃນການເຄື່ອນໄຫວທຸລະກິດ ແລະ ອື່ນໆ. ປັດຈຸບັນ ຕລຊລ ມີບໍລິສັດຈົດທະບຽນ 11 ແຫ່ງ ຈາກຫຼາຍຂະແໜງການ ເປັນຕົ້ນ ສະຖາບັນການເງິນ, ພະລັງງານ, ກະສິກຳ-ປ່າໄມ້, ອຸດສະຫະກຳ, ການຄ້າ-ການບໍລິການ.

ຕາຕະລາງ 1 : ສະຖິຕິກ່ຽວກັບການອອກຈຳໜ່າຍຫຼັກຊັບ ແຕ່ປີ 2010-2020

ຫົວໜ່ວຍ: ຕື້ກີບ

| ລ/ດ | ຜູ້ອອກຈຳໜ່າຍຫຼັກຊັບ | 2010-2016 | 2017 | 2018 | 2019 | 2020 | ລວມທັງໝົດ |
|---|---|---|---|---|---|---|---|
| ການອອກຈຳໜ່າຍພັນທະບັດລັດຖະບານ | | | | | | | |
| 1 | ກະຊວງການເງິນ | | | 285,13 | 1372,83 | 1.392,89 | 3.050,85 |
| ລວມຍອດ | | | | | | | 3.050,85 |
| ການອອກຈຳໜ່າຍຮຸ້ນພາຍໃນປະເທດ | | | | | | | |
| 1 | ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 305,39 | 360,06 | | 115,11 | | 780,56 |
| 2 | ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ | 5.297,14 | | | | | 5.297,14 |
| 3 | ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ | | 98,20 | | | | 98,20 |
| 4 | ບໍລິສັດ ລາວເວີນ ມະຫາຊົນ | 40,35 | | | | | 40,35 |
| 5 | ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ | 240,00 | | | | | 240,00 |

| | | | | | | | |
|---|---|---|---|---|---|---|---|
| 6 | ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ | 77,50 | | | | | 77,50 |
| 7 | ບໍລິສັດ ຊີມັງລາວ ມະຫາຊົນ | | | 28,80 | | | 28,80 |
| 8 | ບໍລິສັດ ມະຫະທຶນເຊົ່າສິນເຊື່ອ ມະຫາຊົນ | | | 25,61 | | | 25,61 |
| 9 | ບໍລິສັດ ລາວອາໂກເທັກ ມະຫາຊົນ | | | 14,00 | | | 14,00 |
| 10 | ບໍລິສັດ ວຽງຈັນເຊັນເຕີ ມະຫາຊົນ | | | | 53,76 | | 53,76 |
| 11 | ບໍລິສັດ ລາວ ອາຊຽນເຊົ່າສິນເຊື່ອ ມະຫາຊົນ | | | | 162,81 | | 162,81 |
| ລວມຍອດ | | | | | | | 6.818,73 |
| ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ | | | | | | | |
| 1 | ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ | 5.070 | | 4.098,12 | | | 9.168,12 |
| 2 | ບໍລິສັດ ໄຟຟ້ານ້ຳງື່ມ 2 ຈຳກັດ | | 1.800,00 | 900,00 | 2.951,88 | 180,00 | 5.831,88 |
| | | | | | | | 15.000,00 |
| ລວມທັງໝົດ | | 11.030,38 | 2.258,26 | 5.351,66 | 4.656,39 | 1.572,89 | 24.869,58 |
| ທຽບໃສ່ GDP | | 9,14% | 1,61% | 3,5% | 2,86% | 0,91% | 14,41% |

ແຜນວາດທີ 1: ຍອດສະສົມການລະດົມທຶນ ຢູ່ພາຍໃນ ແລະ ຕ່າງປະເທດ ແຕ່ປີ 2010-2020 ທຽບໃສ່ GDP



ນອກຈາກການລະດົມທຶນທີ່ກ່າວມາຂ້າງເທິງແລ້ວ, ມີບໍລິສັດຈຳນວນໜຶ່ງ ໄດ້ດຳເນີນການກະກຽມຄວາມພ້ອມໃນການລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແຕ່ບໍ່ສາມາດລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນ ຕລຊລ ຈຳນວນ 8 ກໍລະນີ ຊຶ່ງປະກອບມີ ວິສາຫະກິດລັດລົງທຶນ 5 ກໍລະນີ, ວິສາຫະກິດເອກະຊົນ 3 ກໍລະນີ ເນື່ອງຈາກປັດໄຈພາຍໃນຂອງວິສາຫະກິດເອງ ເປັນຕົ້ນ ລະບົບບັນຊີບໍ່ໄດ້ຮັບການກວດສອບຈາກບໍລິສັດກວດສອບທີ່ໄດ້ມາດຖານສາກົນ, ການຄຸ້ມຄອງບໍລິຫານ ຍັງບໍ່ເຂັ້ມແຂງ, ຄະນະຜູ້ບໍລິຫານຂອງລັດວິສາຫະກິດຍັງໃຊ້ຕະຫຼາດເງິນເປັນເຄື່ອງມືໃນການລະດົມທຶນ ຫຼາຍກວ່າຕະຫຼາດທຶນ. ນອກຈາກນີ້, ຄວາມສົນໃຈໃນການຈອງຊື້ຮຸ້ນທີ່ອອກໂດຍວິສາຫະກິດເອກະຊົນ ຈາກມວນຊົນທົ່ວໄປ ເຫັນວ່າ ຍັງບໍ່ສູງ ແລະ ບໍ່ໄດ້ຕາມເປົ້າໝາຍທີ່ກຳນົດໄວ້ໃນລະບຽບການ ເຮັດໃຫ້ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນບໍ່ສຳເລັດ. ນອກຈາກນັ້ນ, ຜ່ານມາມີວິສາຫະກິດຈຳນວນໜຶ່ງ ໄດ້ກະກຽມລະດົມທຶນດ້ວຍການອອກຈຳໜ່າຍຮຸ້ນກູ້ ຢູ່ ສປປ ລາວ ທັງສະກຸນເງິນກີບ ແລະ ເປັນເງິນຕາຕ່າງປະເທດ ແຕ່ບໍ່ສາມາດອອກຈຳໜ່າຍຮຸ້ນກູ້ສຳເລັດ ຈຳນວນ 3 ກໍລະນີ. ອີງຕາມການກະກຽມອອກຈຳໜ່າຍຮຸ້ນກູ້ເຫັນວ່າສະພາບແວດລ້ອມບໍ່ເອື້ອອຳນວຍ ແລະ ຍັງພົບຂໍ້ຫຍຸ້ງຍາກ ເປັນຕົ້ນແມ່ນ ຜົນການຈັດລຳດັບຄວາມໜ້າເຊື່ອຖືບໍ່ດີເທົ່າທີ່ຄວນ, ຄວາມສາມາດໃນການສະໜອງເງິນ ໂດຍສະເພາະເງິນຕາຕ່າງປະເທດຂອງຕະຫຼາດພາຍໃນ ບໍ່ສາມາດຕອບສະໜອງໄດ້ ຖ້າທຽບໃສ່ທຶນທີ່ຕ້ອງການລະດົມ ແລະ ຄ່າໃຊ້ຈ່າຍຕິດພັນກັບການອອກຈຳໜ່າຍຮຸ້ນກູ້ສູງ ຖ້າທຽບໃສ່ການກູ້ຢືມຈາກທະນາຄານ.

ສະນັ້ນ, ເພື່ອຊຸກຍູ້ສົ່ງເສີມບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ ແລະ ເຂົ້າຈົດທະບຽນໃນ ຕລຊລ, ສຄຄຊ ໄດ້ສົມທົບກັບ ກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຄັດເລືອກເອົາວິສາຫະກິດທີ່ລັດລົງທຶນຈຳນວນໜຶ່ງ ເພື່ອປະເມີນ ແລະ ກະກຽມຄວາມພ້ອມຮອບດ້ານໃນການອອກຈຳໜ່າຍຫຼັກຊັບ ເຊິ່ງລັດຖະບານໄດ້ເຫັນດີໃຫ້ນຳໃຊ້ຄັງຂະຫຍາຍການຜະລິດ ແລະ ຄັງສະສົມຕາມລະບຽບການຂອງວິສາຫະກິດ ເພື່ອປັບປຸງຄວາມເຂັ້ມແຂງຂອງຕົນ ເປັນຕົ້ນດ້ານການຈັດຕັ້ງ, ການດຳເນີນທຸລະກິດ ແລະ ການຄຸ້ມຄອງບໍລິຫານ ແນໃສ່ໃຫ້ລັດວິສາຫະກິດ ມີຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ.

### 2.1.2 ການສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດຈົດທະບຽນ

ໄດ້ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ໂດຍຜ່ານກົນໄກການຄຸ້ມຄອງ, ການຈັດຕັ້ງປະຕິບັດລະບົບບັນຊີ ທີ່ໄດ້ມາດຕະຖານສາກົນ ແລະ ການຄຸ້ມຄອງບໍລິຫານ ທີ່ເປັນມືອາຊີບຫຼາຍຂຶ້ນ (CG) ດັ່ງລາຍລະອຽດລຸ່ມນີ້:

1) **ການຄຸ້ມຄອງບໍລິສັດຈົດທະບຽນ**

ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດຈົດທະບຽນ ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ ແລະ ຕິດຕາມການເຄື່ອນໄຫວໃນແຕ່ລະໄລຍະຢ່າງໃກ້ຊິດ ໂດຍສະເພາະ ແມ່ນຕິດຕາມການລາຍງານ ແລະ ການເປີດເຜີຍຂໍ້ມູນ ບົດລາຍງານການດຳເນີນທຸລະກິດ ແລະ ເອກະສານລາຍງານການເງິນ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ, ການຈ່າຍເງິນປັນຜົນ, ການນຳໃຊ້ທຶນທີ່ລະດົມໄດ້ ແລະ ອື່ນໆ ຢ່າງເປັນປົກກະຕິ. ພ້ອມທັງ ໄດ້ສຳເລັດການຄົ້ນຄວ້າກ່ຽວກັບນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ.

**2) ການນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (IFRS)**

ເພື່ອຮັບປະກັນໃຫ້ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ສາມາດສ້າງເອກະສານລາຍງານການເງິນຂອງຕົນໃຫ້ສອດຄ່ອງກັບມາດຕະຖານສາກົນ, ສຄຄຊ ໂດຍການປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໄດ້ສຳເລັດການທົບທວນໄລຍະຂ້າມຜ່ານສູ່ IFRS ຄືນໃໝ່ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຢ່າງມີປະສິດທິພາບ ໂດຍໄດ້ອອກແຈ້ງການ ກ່ຽວກັບການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າສ້າງແຜນປະຕິບັດງານ, ແຜນຂ້າມຜ່ານ ແລະ ຄຳແນະນຳ ຈັດຕັ້ງປະຕິບັດ IFRS ສຳລັບຂະແໜງການຫຼັກຊັບ.

**3) ການປັບປຸງການຄຸ້ມຄອງບໍລິຫານ (CG)**

ພ້ອມນີ້ ກໍ່ໄດ້ເອົາໃຈໃສ່ ການພັດທະນາວຽກງານການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ ຊຶ່ງພາຍຫຼັງສຳເລັດການສ້າງຄຳແນະນຳກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ (CG Guideline) ໃຫ້ສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ ຍິ່ງຂຶ້ນ ໂດຍໄດ້ກຳນົດຫຼັກການຄຸ້ມຄອງບໍລິຫານທີ່ຈຳເປັນ ແລ້ວ, ສຄຄຊ ໄດ້ດຳເນີນການເຜີຍແຜ່ຄຳແນະນຳດັ່ງກ່າວໃຫ້ບໍລິສັດຈົດທະບຽນຮັບຊາບ ແລະ ເຂົ້າໃຈ ພ້ອມທັງ ໄດ້ຈັດສຳມະນາ ໃຫ້ແກ່ ຜູ້ບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ຂອງບໍລິສັດຈົດທະບຽນ ກ່ຽວກັບ ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ, ຄະນະກຳມະການຂອງສະພາບໍລິຫານ, ສິດຂອງຜູ້ຖືຮຸ້ນ ແລະ ອື່ນໆ. ນອກຈາກນັ້ນ, ໄດ້ດຳເນີນການສຳຫຼວດຜົນການຈັດຕັ້ງປະຕິບັດຄຳແນະນຳດັ່ງກ່າວຂອງ ບໍລິສັດຈົດທະບຽນ. ຜ່ານການເຜີຍແຜ່ ແລະ ສຳຫຼວດດັ່ງກ່າວ ເຫັນວ່າ ຜູ້ບໍລິຫານ ແລະ ພະນັກງານທີ່ກ່ຽວຂ້ອງຂອງບໍລິສັດຈົດທະບຽນ ໄດ້ຄ່ອຍຮັບຮູ້ ແລະ ເຂົ້າໃຈ ພ້ອມທັງ ເຫັນຄວາມສຳຄັນຂອງວຽກງານ CG ຫຼາຍຍິ່ງຂຶ້ນ. ຄຽງຄູ່ກັນນີ້ ໄດ້ສຳເລັດການຮ່າງບັດປະເມີນການຈັດຕັ້ງປະຕິບັດຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ (Lao CG Scorecard) ເບື້ອງຕົ້ນ ເພື່ອເປັນເຄື່ອງມືໃນການຕິດຕາມກວດກາການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນ.

ບົນພື້ນຖານການສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນດັ່ງກ່າວ ໄດ້ຍົກລະດັບມາດຕະຖານການຄຸ້ມຄອງບໍລິຫານ, ການບັນຊີ ສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ ໃຫ້ສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ. ໃນນີ້ ໄດ້ກຳນົດແນວທາງໃນການຈັດຕັ້ງປະຕິບັດ ສຳລັບ ຜູ້ຖືຮຸ້ນ, ສະພາບໍລິຫານ, ຄະນະອຳນວຍການ ແລະ ຫົວໜ້າໜ່ວຍງານຕ່າງໆ ຂອງບໍລິສັດຈົດທະບຽນ ໃຫ້ເຄື່ອນໄຫວວຽກງານໃຫ້ມີປະສິດທິພາບ, ເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ ພ້ອມທັງ ຍົກສູງການປະຕິບັດໜ້າທີ່ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ບໍລິສຸດສັດຊື່ ເພື່ອຜົນປະໂຫຍດໂດຍລວມຂອງບໍລິສັດ ເວົ້າສະເພາະ ກໍ່ເພື່ອຮັກສາຜົນປະໂຫຍດຂອງຜູ້ຖືຮຸ້ນທັງໝົດ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນ.

ຄຽງຄູ່ກັນນີ້ ຜ່ານການຕິດຕາມກວດກາ ເຫັນວ່າ ບໍລິສັດຈົດທະບຽນ ເຄື່ອນໄຫວສອດຄ່ອງກັບລະບຽບການເປັນຢ່າງດີ ແລະ ສາມາດປະກອບສ່ວນພັດທະນາວຽກງານຕະຫຼາດທຶນໄດ້ດີພໍສົມຄວນ ແຕ່ບາງບໍລິສັດຈົດທະບຽນຍັງບໍ່ສາມາດປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ ການລາຍງານ ແລະ ການເປີດເຜີຍຂໍ້ມູນລ່າຊ້າ ເຊິ່ງ

ໄລຍະຜ່ານມາ ໄດ້ມີການປະຕິບັດມາດຕະການທາງບໍລິຫານ (ປັບໄໝ) ຕໍ່ກັບ ບໍລິສັດຈົດທະບຽນຈຳນວນໜຶ່ງທີ່ລະເມີດລະບຽບການດັ່ງກ່າວ.

### 2.1.3 ການພັດທະນາຜະລິດຕະພັນຫຼັກຊັບ

ເພື່ອພັດທະນາຜະລິດຕະພັນຫຼັກຊັບໃຫ້ມີຄວາມຫຼາກຫຼາຍ ແນໃສ່ຕອບສະໜອງຄວາມຕ້ອງການລະດົມທຶນໃນສັງຄົມ ແລະ ເພີ່ມທາງເລືອກໃນການລົງທຶນ, ສຄຄຊ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງສຳເລັດການສ້າງກົນໄກ, ນິຕິກຳ, ວິທີການ, ຂັ້ນຕອນ ແລະ ລະບົບໄອທີ ເພື່ອຮອງຮັບການອອກຈຳໜ່າຍພັນທະບັດລັດຖະບານຜ່ານ ຕລຊລ ເຊິ່ງຮອດປີ 2018 ລັດຖະບານສາມາດອອກຈຳໜ່າຍພັນທະບັດຂອງຕົນ ຜ່ານ ຕລຊລ. ກົນໄກດັ່ງກ່າວ ໄດ້ເຮັດໃຫ້ການຂາຍພັນທະບັດລັດຖະບານ ຄ່ອຍໆຫັນເຂົ້າສູ່ລະບົບຕະຫຼາດທຶນຫຼາຍຂຶ້ນ. ຄຽງຄູ່ກັນນັ້ນ, ໄດ້ສຳເລັດການຄົ້ນຄວ້າຜະລິດຜະລິດຕະພັນໃໝ່ ຄື: ຮຸ້ນກູ້, ກອງທຶນຮ່ວມ (CIS), ການນຳເອົາຮຸ້ນໄປເປັນຮຸ້ນອ້າງອີງ ເພື່ອອອກໃບຢັ້ງຢືນສິດ (Depository Receipt: DR). ເຖິງຢ່າງໃດກໍ່ຕາມ, ພາຍຫຼັງປະກາດນຳໃຊ້ລະບຽບການຄຸ້ມຄອງກ່ຽວກັບຜະລິດຕະພັນໃໝ່ ຮອດປັດຈຸບັນ ຍັງບໍ່ມີການອອກຈຳໜ່າຍຜະລິດຕະພັນໃໝ່ດັ່ງກ່າວ ເນື່ອງຈາກຍັງບໍ່ມີອຸປະສົງຈາກບັນດາຫົວໜ່ວຍວິສາຫະກິດ, ສະຖາບັນສີກາງດ້ານຫຼັກຊັບຍັງບໍ່ຄົບຖ້ວນ ແລະ ຕົ້ນທຶນການອອກຈຳໜ່າຍ ຍັງຂ້ອນຂ້າງສູງ.

ພ້ອມນັ້ນ ກໍ່ໄດ້ສຳເລັດຄົ້ນຄວ້າຜະລິດຕະພັນປະເພດ ຮຸ້ນບູລິມະສິດ, ຮຸ້ນກູ້ແປສະພາບ ແລະ ໃບຢັ້ງຢືນສິດໃນການຊື້ຮຸ້ນ (Warrant) ເພື່ອສ້າງທາງເລືອກໃຫ້ແກ່ບັນດາຫົວໜ່ວຍວິສາຫະກິດ ສາມາດນຳໃຊ້ເຄື່ອງມືທາງການເງິນໃນການລະດົມທຶນ ແລະ ທັງເປັນການພັດທະນາຜະລິດຕະພັນຫຼັກຊັບຂອງຕະຫຼາດທຶນລາວ ໃຫ້ມີຄວາມຫຼາກຫຼາຍ. ເຖິງຢ່າງໃດກໍ່ຕາມ ຜ່ານການຄົ້ນຄວ້າ ເຫັນວ່າສະພາບຕະຫຼາດທຶນໃນໄລຍະນີ້ ຍັງບໍ່ເອື້ອອຳນວຍຕໍ່ການອອກຈຳໜ່າຍຜະລິດຕະພັນດັ່ງກ່າວ.

## 2.2 ການສ້າງ ແລະ ປັບປຸງນິຕິກຳ ແລະ ນະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ

ເພື່ອໃຫ້ອົງການຄຸ້ມຄອງວຽກງານຫຼັກຊັບມີນິຕິກຳໃນການ ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວວຽກງານຫຼັກຊັບໜັກແໜ້ນຂຶ້ນກວ່າເກົ່າ ພ້ອມທັງ ຮັບປະກັນໃຫ້ບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນມີການເຄື່ອນໄຫວຢ່າງ ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ແນໃສ່ເຮັດໃຫ້ວຽກງານຕະຫຼາດທຶນຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ດ້ວຍບາດກ້າວທີ່ໜັກແໜ້ນ ສຄຄຊ ໄດ້ສຳເລັດການຄົ້ນຄວ້າປັບປຸງ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເພື່ອໃຫ້ມີເນື້ອໃນສອດຄ່ອງກັບສະພາບການໃນປັດຈຸບັນຫຼາຍຍິ່ງຂຶ້ນ ເຊິ່ງສະພາແຫ່ງຊາດໄດ້ມີມະຕິຮັບຮອງເອົາກົດໝາຍດັ່ງກ່າວ ໃນວັນທີ 14 ມັງກອນ 2020. ພ້ອມດຽວກັນນີ້, ເພື່ອປັບປຸງພາລະບົດບາດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານຫຼັກຊັບໃຫ້ຮັດກຸມຂຶ້ນກ່ວາເກົ່າ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ), ສຄຄຊ ໄດ້ດຳເນີນການຄົ້ນຄວ້າປັບປຸງ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄຄຊ, ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຄຄຊ ຄືນໃໝ່. ນອກນີ້, ໃນໄລຍະປີ 2011-2020 ສຄຄຊ ຍັງໄດ້ສົມທົບກັບພາກສ່ວນກ່ຽວຂ້ອງສຳເລັດການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນ 73 ສະບັບ (ນຳໃຊ້ພາຍໃນ 10 ສະບັບ) ເພື່ອເປັນບ່ອນອີງສຳຄັນໃຫ້ແກ່ການເຄື່ອນໄຫວວຽກງານຫຼັກຊັບ. (ລາຍລະອຽດນິຕິກຳ ໃນເອກະສານຊ້ອນທ້າຍ 1)

ດ້ານນະໂຍບາຍມະຫາພາກຕໍ່ກັບວຽກງານຫຼັກຊັບ ໃນໄລຍະ 10 ປີຜ່ານມາ ເພື່ອດຶງດູດ ແລະ ຊຸກຍູ້ການໃຫ້ມີການເຂົ້າຮ່ວມ ແລະ ປະກອບສ່ວນພັດທະນາວຽກງານຕະຫຼາດທຶນ, ອີງການຄຸ້ມຄອງວຽກງານຫຼັກຊັບ ໂດຍສົມທົບກັບຂະແໜງການກ່ຽວຂ້ອງ ໄດ້ຄົ້ນຄວ້າສະເໜີປັບປຸງນະໂຍບາຍທາງດ້ານອາກອນ ແລະ ລັດຖະບານໄດ້ຫຼຸດອັດຕາອາກອນກຳໄລ ຈາກອັດຕາປົກກະຕິ 20% ມາເປັນ 13% ເປັນເວລາ 4 ປີ ຕໍ່ເນື່ອງ ໃຫ້ແກ່ບໍລິສັດຈົດທະບຽນ, ເຫັນດີໃຫ້ ລັດວິສາຫະກິດ ນຳໃຊ້ຄັງຂະຫຍາຍການຜະລິດ ແລະ ຄັງສະສົມຕາມລະບຽບການຂອງວິສາຫະກິດ ເພື່ອປັບປຸງຄວາມເຂັ້ມແຂງຂອງຕົນ. ສຳລັບຜູ້ລົງທຶນໃນຮຸ້ນ ໄດ້ຍົກເວັ້ນຄ່າທຳນຽມຊື້-ຂາຍໃນສ່ວນຂອງລັດຖະບານ, ໄດ້ປັບຫຼຸດອັດຕາຄ່າທຳນຽມຊື້-ຂາຍຫຼັກຊັບໃນສ່ວນຂອງ ສຄຄຊ, ຕລຊລ ແລະ ບໍລິສັດຫຼັກຊັບ ເຮັດໃຫ້ຄ່າທຳນຽມໃນການຊື້-ຂາຍຫຼັກຊັບ ໃນ ຕລຊລ ຫຼຸດລົງຈາກ 1% ໃນປີ 2017 ມາເປັນ 0,7% ໃນປີ 2020. ພ້ອມນີ້, ລັດຖະບານໄດ້ຍົກເວັ້ນອາກອນກຳໄລຈາກການຊື້-ຂາຍຮຸ້ນ (Capital Gain Tax) ຈາກ 10% ເຫຼືອ 0% ແລະ ອາກອນເງິນປັນຜົນຈາກ 10% ເຫຼືອ 0% (ໃນປີ 2013) ເພື່ອດຶງດູດຜູ້ລົງທຶນໃນຕະຫຼາດທຶນ.

ນອກຈາກນີ້, ໄດ້ຄົ້ນຄວ້າບາງເນື້ອໃນທີ່ຕິດພັນກັບບໍລິສັດມະຫາຊົນ ເປັນຕົ້ນແມ່ນ: ການໂອນຮຸ້ນ, ການຄຸ້ມຄອງບໍລິຫານ, ການເປີດເຜີຍຂໍ້ມູນ, ລາຍການທີ່ກ່ຽວພັນ, ການຄອບ ແລະ ການແຍກກິດຈະການ ແລະ ບັນຫາອື່ນໆຈຳນວນໜຶ່ງ ເພື່ອບັນຈຸເຂົ້າໃນກົດໝາຍວິສາຫະກິດ (ສະບັບປັບປຸງ).

### 2.3 ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ

#### 2.3.1 ການສ້າງຄວາມເຂັ້ມແຂງຂອງ ຄຄຊ ແລະ ສຄຄຊ

ເພື່ອຮັບປະກັນແບບແຜນວິທີເຮັດວຽກຂອງ ຄຄຊ ແລະ ສຄຄຊ ໃຫ້ມີປະສິດທິຜົນ ໄດ້ແຍກພາລະບົດບາດລະຫວ່າງ ຄຄຊ ແລະ ສຄຄຊ ໂດຍໄດ້ສ້າງເປັນດຳລັດວ່າດ້ວຍ ຄຄຊ ແລະ ຂໍ້ຕົກລົງວ່າດ້ວຍ ສຄຄຊ ເຊິ່ງສອງນິຕິກຳດັ່ງກ່າວ ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານໄດ້ຢ່າງຄ່ອງຕົວ. ບົນພື້ນຖານນິຕິກຳດັ່ງກ່າວ, ຄຄຊ ແລະ ສຄຄຊ ໄດ້ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນ ໃນການຄຸ້ມຄອງ ແລະ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ມີປະສິດທິພາບ ໂປ່ງໃສ, ຍຸຕິທຳ ແລະ ຫຼຸດຜ່ອນຄວາມສ່ຽງ ຕໍ່ລະບົບການເງິນ ໂດຍປະສານສົມທົບແໜ້ນ ແລະ ຮ່ວມມືກັບບັນດາຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເປັນຢ່າງດີ ເພື່ອພັດທະນາຕະຫຼາດທຶນ ກໍ່ຄືການພັດທະນາເສດຖະກິດຂອງ ສປປ ລາວ ໃຫ້ເຕີບໃຫຍ່ຂະຫຍາຍຕົວເທື່ອລະກ້າວ. ປະຈຸບັນ ຄຄຊ ມີໂຄງປະກອບການຈັດຕັ້ງ ຄືດັ່ງນີ້: ປະທານ, ຮອງປະທານ ຈຳນວນ 2 ທ່ານ, ກຳມະການ ຈຳນວນ 9 ທ່ານ ແລະ ເລຂາ ຄຄຊ ລວມທັງໝົດ 13 ທ່ານ. ສຄຄຊ ໃນຖານະເປັນເສນາທິການໃຫ້ແກ່ ຄຄຊ ໃນການຄົ້ນຄວ້ານະໂຍບາຍ, ລະບຽບການ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງວຽກງານຫຼັກຊັບ ແລະ ຕະຫຼາດຫຼັກຊັບ ມີ 6 ພະແນກຄື: ພະແນກຈັດຕັ້ງ ແລະ ບໍລິຫານ, ພະແນກນິຕິກຳ, ພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ, ພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ, ພະແນກຄຸ້ມຄອງຕະຫຼາດຫຼັກຊັບ, ແລະ ພະແນກຝຶກອົບຮົມ ແລະ ໂຄສະນາເຜີຍແຜ່; ມີພະນັກງານທັງໝົດ ຈຳນວນ 42 ທ່ານ (ຍິງ 21 ທ່ານ), ໃນນີ້ ປະກອບດ້ວຍຄະນະ ສຄຄຊ 4 ທ່ານ (ຍິງ 2 ທ່ານ), ຄະນະພະແນກ 12 ທ່ານ (ຍິງ 4 ທ່ານ) ແລະ ວິຊາການ 26 ທ່ານ (ຍິງ 15 ທ່ານ). ທາງດ້ານການສຶກສາ ມີໂຄງປະກອບຄື: ປະລິນຍາໂທ 26 ຄົນ (ຍິງ 14 ຄົນ), ປະລິນຍາຕີ 15 ຄົນ (ຍິງ 7 ຄົນ) ແລະ ຊັ້ນກາງ 1 ຄົນ.

ນອກນີ້, ເພື່ອສ້າງພື້ນຖານໃຫ້ແກ່ການຫັນເປັນເອກະລາດທາງດ້ານການເງິນຂອງ ສຄຄຊ, ຂັ້ນເທິງໄດ້ເຫັນດີໃຫ້ ສຄຄຊ ເປັນອົງການບໍລິຫານງົບປະມານລາຍຮັບ-ລາຍຈ່າຍດ້ວຍຕົນເອງ ນັບແຕ່ປີ 2017 ເປັນຕົ້ນມາ ແລະ ໄດ້ສຳເລັດການປັບປຸງ ແລະ ນຳໃຊ້ອາຄານ ສຄຄຊ ນັບແຕ່ເດືອນ ພຶດສະພາ 2019 ເປັນຕົ້ນມາ.

### 2.3.2 ການພັດທະນາລະບົບເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ

ເພື່ອເຮັດໃຫ້ພາລະບົດບາດຂອງ ສຄຄຊ ໄດ້ຮັບການພັດທະນາ ແລະ ເຮັດໃຫ້ການເຄື່ອນໄຫວວຽກງານຕະຫຼາດທຶນສາມາດດຳເນີນໄດ້ຢ່າງຄ່ອງຕົວ, ມີຄວາມທັນສະໄໝ, ປອດໄພ ແລະ ມີປະສິດທິຜົນ ແນໃສ່ອຳນວຍຄວາມສະດວກ ແລະ ຕອບສະໜອງຄວາມຕ້ອງການໃນການຄຸ້ມຄອງວຽກງານຫຼັກຊັບ, ສຄຄຊ ໄດ້ເອົາໃຈໃສ່ສ້າງ ແລະ ພັດທະນາເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ຊຶ່ງມີອັນພົ້ນເດັ່ນ ຄື: ສຄຄຊ ບົນພື້ນຖານສົມທົບກັບກົມກ່ຽວຂ້ອງພາຍໃນ ທະນາຄານແຫ່ງ ສປປ ລາວ ໄດ້ສຳເລັດການສ້າງ ແລະ ພັດທະນາລະບົບ ເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ ເພື່ອຄຸ້ມຄອງວຽກງານຫຼັກຊັບ ຈຳນວນ 6 ລະບົບ ແລະ ອຳນວຍຄວາມສະດວກວຽກງານບໍລິຫານພາຍໃນ ສຄຄຊ ຈຳນວນ 7 ລະບົບ. ຜ່ານການນຳໃຊ້ລະບົບດັ່ງກ່າວ ໄດ້ຊ່ວຍໃນການຄຸ້ມຄອງບໍລິຫານຂໍ້ມູນຂ່າວສານວຽກງານຫຼັກຊັບ, ຊ່ວຍອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານພາຍໃນ ສຄຄຊ, ຊ່ວຍຄຸ້ມຄອງຂໍ້ມູນ ແລະ ການລາຍງານເປັນລະບົບຫຼາຍຂຶ້ນ, ມີຄວາມຊັດເຈນ, ຄ່ອງຕົວ ແລະ ວ່ອງໄວ. ລາຍລະອຽດລະບົບ ເພື່ອຄຸ້ມຄອງວຽກງານຫຼັກຊັບ ດັ່ງນີ້:

| ລຳດັບ | ຊື່ລະບົບ | ປີສຳເລັດ |
|---|---|---|
| 1 | ລະບົບຮັບສົ່ງລາຍງານອອນລາຍ ຈາກ ບໍລິສັດຈົດທະບຽນ | 2016 |
| 2 | ລະບົບຮັບຄຳຮ້ອງຟ້ອງຮ້ອງຮຽນຈາກສັງຄົມ ຜ່ານທາງອອນລາຍ | 2017 |
| 3 | ລະບົບຮັບສົ່ງລາຍງານການຊື້ຂາຍຮຸ້ນຂອງຜູ້ລົງທຶນຜ່ານບໍລິສັດຫຼັກຊັບ | 2018 |
| 4 | ລະບົບການຍື່ນຄຳຮ້ອງ ແລະ ອະນຸມັດການອອກຈຳໜ່າຍຫຼັກຊັບ | 2019 |
| 5 | ລະບົບລາຍງານການຊື້-ຂາຍຮຸ້ນ | 2020 |
| 6 | ລະບົບຍື່ນເອກະສານຂໍອະນຸຍາດສ້າງຕັ້ງ ຫຼື ຮັບຮອງສະຖາບັນສື່ກາງດ້ານຫຼັກຊັບ | 2020 |

ພ້ອມດຽວກັນນີ້, ໄດ້ສ້າງລະບົບເຕັກໂນໂລຊີ ເພື່ອຮັບໃຊ້ວຽກງານໂຄສະນາເຜີຍແຜ່ ໂດຍສະເພາະແມ່ນພື້ນຖານທາງດ້ານເຕັກນິກ ເພື່ອເອື້ອອຳນວຍໃຫ້ແກ່ການສ້າງລາຍການໂທລະພາບ ເຊັ່ນ: ຫ້ອງອັດລາຍການໂທລະພາບ ແລະ ອຸປະກອນຮັບໃຊ້ຕ່າງໆຄົບຖ້ວນ. ນອກຈາກນີ້, ສຄຄຊ ກໍ່ໄດ້ມີການພັດທະນາ ແລະ ປັບປຸງເວັບໄຊທ໌ຂອງຕົນໃນແຕ່ລະໄລຍະ ເພື່ອໃຫ້ມີຄວາມທັນສະໄໝ ແນໃສ່ເປັນສູນລວມຂໍ້ມູນ-ຂ່າວສານວຽກງານຫຼັກຊັບໃຫ້ແກ່ສັງຄົມຕາມພາລະບົດບາດ ຂອງຕົນ ຢ່າງເປັນປົກກະຕິ.

### 2.3.3 ການຮ່ວມມືສາກົນ

ສຄຄຊ ໄດ້ສືບຕໍ່ເອົາໃຈໃສ່ວຽກງານຮ່ວມມືກັບສາກົນ ໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ກັບອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ ແລະ ແລກປ່ຽນຂໍ້ມູນຂ່າວສານ ຢ່າງເປັນປົກກະຕິ.

ໃນຮູບແບບສອງຝ່າຍ, ສຄຄຊ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈສອງຝ່າຍກ່ຽວກັບ ຄຄຊ ສສ.ຫວຽດນາມ, ໄທ ແລະ ສປ.ຈີນ ແລະ ໄດ້ເຊັນຂໍ້ຕົກລົງວ່າດ້ວຍການຮ່ວມມືສອງຝ່າຍຮ່ວມກັບ ສະຖາບັນ CPA Australia. ນອກຈາກນີ້, ສຄຄຊ ຍັງໄດ້ຮ່ວມມືສອງຝ່າຍກັບ ຄຄຊ ສ.ເກົາຫຼີ, ຄຄຊ ຍີ່ປຸ່ນ, ສະຖາບັນສົ່ງເສີມກຳມະການບໍລິສັດໄທ (Thai IOD), ສະຖານທູດລຸກຊຳບວກປະຈຳ ສປປ ລາວ, ສະຖາບັນນັກວິຊາຊີບການບັນຊີອົດສະຕາລີ (CPA Australia), ສະຖາບັນຄົ້ນຄວ້າໂນມູລະ, ຕະຫຼາດຫຼັກຊັບໄທ ແລະ ອື່ນໆ.

ໃນຮູບແບບຫຼາຍຝ່າຍ, ສຄຄຊ ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆທີ່ຕິດພັນ ຢູ່ໃນຂອບ ອາຊຽນ (ASEAN), ແລະ ອາຊຽນ+3 (ASEAN+3) ເປັນຕົ້ນແມ່ນ ກອງປະຊຸມໂຄງການການພັດທະນາຕະຫຼາດທຶນອາຊຽນ ຂັ້ນຫົວໜ້າ ສຄຄຊ ແລະ ຮອງຫົວໜ້າ ສຄຄຊ (ACMF Chair ແລະ ACMF Deputies), ກອງປະຊຸມຄະນະກຳມະການພັດທະນາຕະຫຼາດທຶນອາຊຽນ (WC-CMD), ກອງປະຊຸມການພັດທະນາພື້ນຖານໂຄງລ່າງຂອງການຊຳລະ-ສະສາງຂ້າມແດນ (CSIF), ຄະນະເຮັດວຽກພາຍໃຕ້ຂອບການເປີດເສລີການບໍລິການທາງດ້ານການເງິນອາຊຽນ (WC-FSL), ຄະນະເຮັດວຽກການເປີດເສລີບັນຊີທຶນອາຊຽນ (WC-CAL) ແລະ ກອງປະຊຸມການພັດທະນາຕະຫຼາດພັນທະບັດອາຊຽນ (ABMF). ພ້ອມນີ້, ສຄຄຊ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືຫຼາຍຝ່າຍ ລະຫວ່າງ ຄຄຊ 5 ປະເທດ ເຂດອ່າງແມ່ນໍ້າຂອງ.

ໃນຮູບແບບການພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ, ໃນເດືອນ ກັນຍາ 2018 ຄຄຊ ໄດ້ຖືກຮັບຮອງເປັນສະມາຊິກສຳຮອງຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ຊຶ່ງເປັນການຍົກບົດບາດວຽກງານຫຼັກຊັບ ຂອງ ສປປ ລາວ ໃນເວທີສາກົນ. ພ້ອມນີ້ ໃນຂອບການຮ່ວມມືດັ່ງກ່າວ ຄຄຊ ແລະ ສຄຄຊ ໄດ້ເຂົ້າຮ່ວມກອງປະຊຸມປະຈຳປີ ຂອງ ອົງການ IOSCO ແລະ ປະກອບສ່ວນເຂົ້າໃນຄະນະກຳມະການຕ່າງໆຂອງ ອົງການ IOSCO ເປັນຕົ້ນ ຄະນະກຳມະການຕະຫຼາດທີ່ກຳລັງພັດທະນາ ແລະ ຂະຫຍາຍຕົວ (GEMC) ແລະ ຄະນະກຳມະການພາກພື້ນອາຊີ-ປາຊີຟິກ (APRC) ແລະ ສຳມະນາທາງວິຊາການໃນຫົວຂໍ້ຕ່າງໆ ຢ່າງເປັນປົກກະຕິ. ນອກຈາກນີ້, ໄດ້ມີການຮ່ວມມືກັບ ທະນາຄານໂລກ, ອົງການການເງິນສາກົນ (IFC) ແລະ ທະນາຄານພັດທະນາອາຊີ.

ພາຍໃຕ້ການຮ່ວມມືສາກົນດັ່ງກ່າວ ສຄຄຊ ສາມາດຍາດແຍ່ງການຊ່ວຍເຫຼືອ ທາງດ້ານວິຊາການ ເປັນຕົ້ນ: ສົ່ງພະນັກງານໄປຍົກລະດັບວິຊາສະເພາະ ໄລຍະຍາວ ຢູ່ຕ່າງປະເທດ ຈຳນວນ 4 ຄັ້ງ, ລົງຝຶກງານຕົວຈິງໄລຍະສັ້ນຢູ່ ຄຄຊ ຕ່າງປະເທດ ຫຼາຍກວ່າ 15 ຄັ້ງ, ໄດ້ສຳເລັດການຈັດສຳມະນາຢູ່ນະຄອນຫຼວງວຽງຈັນ ຫຼາຍກວ່າ 80 ຄັ້ງ ແລະ ສົ່ງພະນັກງານໄປຖອດຖອນບົດຮຽນ ຢູ່ປະເທດດັ່ງກ່າວ ຫຼາຍກວ່າ 150 ຄັ້ງ ໃນຮູບແບບເຂົ້າຮ່ວມກັບທີ່ ແລະ ອອນລາຍ ພ້ອມທັງ ໄດ້ຮັບທຶນສະໜັບສະໜູນ ຈາກໂຄງການຮ່ວມມື 3 ຝ່າຍ ລະຫວ່າງ ສຄຄຊ, ຄຄຊ ສສ.ຫວຽດນາມ ແລະ ສະຖານທູດລຸກຊຳບວກ ປະຈຳ ສປປ ລາວ ມູນຄ່າ 500.000 ຢູໂຣ ແລະ ທຶນສະໜັບສະໜູນ ໃນການວ່າຈ້າງຊ່ຽວຊານໃຫ້ຄຳປຶກສາທາງດ້ານວິຊາການ ແລະ ໂຄງການຊ່ວຍເຫຼືອທາງດ້ານວິຊາການອື່ນໆ ຈຳນວນໜຶ່ງເຂົ້າໃນການພັດທະນາຕະຫຼາດທຶນຂອງ ສປປ ລາວ.

ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ສາມາດກໍ່ສ້າງບຸກຄະລາກອນຂອງ ສຄຄຊ ໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາການ, ແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບວຽກງານຕະຫຼາດທຶນໃນຫົວຂໍ້ຕ່າງໆ, ນຳເອົາບົດຮຽນ ແລະ ມາດຕະຖານຂອງ ຄຄຊ ຕ່າງປະເທດ ຈາກພາກພື້ນ ແລະ ສາກົນ ເພື່ອນຳມາເປັນບ່ອນອີງໃນການສ້າງ ແລະ ປັບປຸງບັນດານິຕິກຳ ແລະ ກົນໄກຂອງຕະຫຼາດທຶນ ສປປ ລາວ ເປັນຕົ້ນ ການປັບປຸງວຽກງານການຄຸ້ມຄອງບໍລິຫານ (CG) ໃຫ້ແກ່ ບໍລິສັດເປົ້າໝາຍຈົດທະບຽນ ແລະ ບໍລິສັດຈົດທະບຽນ ຢູ່ ຕະຫຼາດຫຼັກຊັບ, ການພັດທະນາວຽກງານບັນຊີ (IFRS), ຜະລິດຕະພັນຫຼັກຊັບ (ຮຸ້ນ, ຮຸ້ນກູ້, ພັນທະບັດ ແລະ ກອງທຶນເພື່ອການລົງທຶນ) ແລະ ການຄົ້ນຄວ້າເບື້ອງຕົ້ນກ່ຽວກັບວຽກງານການເງິນແບບຍືນຍົງ, ພັດທະນາວຽກງານການສ້າງເງື່ອນໄຂໃຫ້ SME ສາມາດລະດົມທຶນຜ່ານຕະຫຼາດທຶນ, ການໃຫ້ຄວາມຮູ້ແກ່ມວນຊົນ ແລະ ການກະກຽມການເຂົ້າເປັນສະມາຊິກຂອງອົງການ IOSCO.

## 2.4 ການສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ

ພື້ນຖານໂຄງລ່າງຕະຫຼາດທຶນ ປະກອບດ້ວຍ ຕະຫຼາດຫຼັກຊັບ ແລະ ສະຖາບັນສື່ກາງດ້ານຫຼັກຊັບ.

### 2.4.1 ພັດທະນາຕະຫຼາດຫຼັກຊັບ

**1) ສ້າງຄວາມເຂັ້ມແຂງຂອງຕະຫຼາດຫຼັກຊັບ**

❖ **ການຄຸ້ມຄອງ ແລະ ການເຄື່ອນໄຫວ ຂອງຕະຫຼາດຫຼັກຊັບ**

ຕລຊລ ຖືກສ້າງຕັ້ງຂຶ້ນພາຍໃຕ້ການຮ່ວມທຶນລະຫວ່າງ ທະນາຄານແຫ່ງ ສປປ ລາວ (ຕາງໜ້າໃຫ້ລັດຖະບານ) ແລະ ຕະຫຼາດຫຼັກຊັບ ສ.ເກົາຫຼີ. ຕລຊລ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນ ໃນການສະໜອງການບໍລິການຊື້-ຂາຍຫຼັກຊັບ ແລະ ບໍລິການໄລ່ລຽງ ແລະ ຫັກບັນຊີຫຼັກຊັບ, ພ້ອມທັງ ເຮັດໜ້າທີ່ຄຸ້ມຄອງບໍລິຫານການເຄື່ອນໄຫວຊື້-ຂາຍ ຂອງນັກລົງທຶນຢ່າງເຂັ້ມງວດ ແລະ ໄດ້ຕິດຕາມກວດກາ ການເຄື່ອນໄຫວວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນຢ່າງໃກ້ຊິດ. ນອກຈາກນີ້, ເພື່ອກຳນົດທິດທາງໃນການເຄື່ອນໄຫວທຸລະກິດ ແລະ ພິຈາລະນາຮັບຮອງເອົາບັນຫາທີ່ສຳຄັນ ຕລຊລ ກໍ່ໄດ້ຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນໃນແຕ່ລະໄລຍະ.

ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງຕິດຕາມ ການເຄື່ອນໄຫວຂອງ ຕລຊລ ດ້ວຍການກວດກາກັບທີ່ ແລະ ກວດກາຕາມເອກະສານ ເພື່ອຮັບປະກັນໃຫ້ຕະຫຼາດມີຄວາມຍຸຕິທຳ ແລະ ໂປ່ງໃສ ແລະ ຮັບປະກັນຄວາມຕໍ່ເນື່ອງຂອງລະບົບ. ຜ່ານການຕິດຕາມຕົວຈິງ ເຫັນວ່າ ຕລຊລ ເຄື່ອນໄຫວຕາມລະບຽບການທີ່ໄດ້ກຳນົດໄວ້ ແລະ ປະກອບສ່ວນຢ່າງຕັ້ງໜ້າໃນວຽກງານການພັດທະນາຕະຫຼາດທຶນ.

❖ **ການປັບປຸງກົນໄກການຊື້-ຂາຍ**

ຕລຊລ ໄດ້ປັບປຸງ ແລະ ຍົກລະດັບກົນໄກການຊື້-ຂາຍຮຸ້ນ ເພື່ອອຳນວຍຄວາມສະດວກ ແລະ ເພີ່ມໂອກາດໃຫ້ຜູ້ລົງທຶນສາມາດຊື້-ຂາຍຫຼັກຊັບ ຄ່ອງຕົວຍິ່ງຂຶ້ນ ເຊັ່ນ: ໄດ້ເປີດນຳໃຊ້ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ (Home Trading System) ໃນປີ 2013 ເພື່ອໃຫ້ຜູ້ລົງທຶນສາມາດສົ່ງຄຳສັ່ງຊື້-ຂາຍ, ຕິດຕາມຍອດເງິນ ແລະ ຍອດຫຼັກຊັບໃນບັນຊີຫຼັກຊັບໄດ້ດ້ວຍຕົນເອງ ຜ່ານລະບົບຄອມພິວເຕີ; ໄດ້ປັບປຸງລະບົບການຈັບຄູ່ຊື້-ຂາຍຈາກການປະມູນແບບຊ່ວງເວລາ (Call Auction)ມາເປັນການປະມູນແບບຕໍ່ເນື່ອງ (Continuous Auction) ແລະ ໄດ້ເພີ່ມຂອບເຂດການປ່ຽນແປງລາຄາລາຍວັນຈາກ ±5% ມາເປັນ ±10% ໃນປີ 2014; ໄດ້ສ້າງລະບົບເພື່ອເຊື່ອມໂຍງກັບທະນາຄານດູແລ

ຊັບສິນ ໃນປີ 2014 ແລະ ລະບົບຊື້-ຂາຍພັນທະບັດລັດຖະບານ ແລະ ຮຸ້ນກູ້ ຜ່ານ ຕລຊລ ໃນປີ 2018 ເພື່ອໃຫ້ບໍລິການດູແລບັນຊີເງິນ ແລະ ບັນຊີຫຼັກຊັບຂອງຜູ້ລົງທຶນ ແລະ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ; ໄດ້ປັບຫົວໜ່ວຍຊື້-ຂາຍຮຸ້ນຂັ້ນຕໍ່າຈາກ 1 ຮຸ້ນ ມາເປັນ 100 ຮຸ້ນ ໃນປີ 2016; ໄດ້ເພີ່ມປະເພດຄຳສັ່ງຊື້-ຂາຍຕາມລາຄາຕະຫຼາດ (Market Order), ຄຳສັ່ງແບບມີເງື່ອນໄຂ (Conditional Order) ແລະ ຄຳສັ່ງຈອງລ່ວງໜ້າ (Preliminary Reserve Order) ໃນປີ 2018; ໄດ້ຂະຫຍາຍເວລາຊື້-ຂາຍຈາກ 09:00 – 11:30 ມາເປັນ 09:00 – 15:00 ໃນປີ 2019; ໄດ້ມີຮູບແບບການຊື້-ຂາຍຮຸ້ນເປັນຈຳນວນຫຼາຍ (Block Trade) ໃນປີ 2019; ໄດ້ປັບຫົວໜ່ວຍລາຄາ (Tick Size) ໃນປີ 2019; ໄດ້ອະນຸຍາດໃຫ້ຜູ້ລົງທຶນປະເພດສະຖາບັນ ສາມາດຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລ່ວງໜ້າ ໃນປີ 2017 ເພື່ອອຳນວຍຄວາມສະດວກໃຫ້ແກ່ລູກຄ້າຂອງທະນາຄານດູແລຊັບສິນໃຫ້ສາມາດຊື້-ຂາຍ ຄ່ອງຕົວຂຶ້ນ ແລະ ມີເວັບໄຊທ໌ ໃຫ້ຜູ້ລົງທຶນເຂົ້າຫາຂໍ້ມູນກ່ຽວກັບສະພາບການຊື້-ຂາຍຮຸ້ນປະຈຳວັນໄດ້ ເພື່ອໃຫ້ຜູ້ລົງທຶນມີຂໍ້ມູນຄົບຖ້ວນ ກ່ອນຕັດສິນໃຈລົງທຶນໃນຕະຫຼາດທຶນລາວ.

ພ້ອມນີ້, ທະນາຄານເພື່ອການຊຳລະ ໄດ້ສຳເລັດການພັດທະນາລະບົບ ເພື່ອໃຫ້ຄວາມສະດວກຕໍ່ຜູ້ລົງທຶນໃນການໂອນເງິນເຂົ້າອອກ ລະຫວ່າງບັນຊີຫຼັກຊັບ ແລະ ບັນຊີຝາກທະນາຄານ ໂດຍຜ່ານແອັບພີເຄຊັ່ນ ເປັນຕົ້ນ ຜ່ານມືຖື BCEL-one.

ຄຽງຄູ່ກັບການພັດທະນາ ກໍ່ໄດ້ເອົາໃຈໃສ່ຕິດຕາມການຊື້-ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ດ້ວຍຮູບແບບເຄິ່ງທັນສະໄໝ (Semi-Automated System) ເນື່ອງຈາກຜະລິດຕະພັນຫຼັກຊັບ ແລະ ການຊື້-ຂາຍຫຼັກຊັບໃນ ຕລຊລ ຍັງມີບໍ່ຫຼາຍ ແລະ ຕລຊລ ກໍ່ມີລະບົບ ແລະ ກົນໄກ ໃນການຮອງຮັບການດຳເນີນງານຂອງ ຕລຊລ ຢ່າງຮັດກຸມ ແລະ ມີປະສິດທິພາບ.

❖ **ນິຕິກຳ**

ຕລຊລ ໄດ້ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວທຸລະກິດຂອງ ຕລຊລ ເປັນຕົ້ນແມ່ນ ລະບຽບວ່າດ້ວຍສະມາຊິກກະພາບຂອງ ຕລຊລ, ລະບຽບວ່າດ້ວຍການຈົດທະບຽນຮຸ້ນ, ຮຸ້ນກູ້ ແລະ ພັນທະບັດລັດຖະບານ, ລະບຽບວ່າດ້ວຍການສະສາງ, ຊຳລະທຸລະກຳຫຼັກຊັບ, ລະບຽບວ່າດ້ວຍການຕິດຕາມຕະຫຼາດຫຼັກຊັບ ແລະ ອື່ນໆ. ນອກຈາກນີ້, ຕລຊລ ໄດ້ສ້າງນິຕິກຳເພື່ອເປັນບ່ອນອີງໃນການບໍລິຫານງານພາຍໃນຂອງຕົນເຊັ່ນ: ລະບຽບວ່າດ້ວຍການຄຸ້ມຄອງພະນັກງານ, ລະບຽບວ່າດ້ວຍການຈັດຕັ້ງ ແລະ ການບໍລິຫານຂອງ ຕລຊລ, ລະບຽບວ່າດ້ວຍການຊື້-ຂາຍຫຼັກຊັບຂອງພະນັກງານ ຕລຊລ ແລະ ອື່ນໆ. ຮອດທ້າຍປີ 2020 ຕລຊລ ມີລະບຽບການທັງໝົດ ຈຳນວນ 48 ສະບັບ (ນຳໃຊ້ພາຍໃນ 38 ສະບັບ). ນິຕິກຳດັ່ງກ່າວ ໄດ້ກາຍເປັນເຄື່ອງມື ແລະ ບ່ອນອີງທີ່ສຳຄັນ ໃຫ້ແກ່ການເຄື່ອນໄຫວທຸລະກິດຂອງ ຕລຊລ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ສ້າງເງື່ອນໄຂສະດວກໃຫ້ບັນດາຫົວໜ່ວຍທຸລະກິດ ທັງພາກລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຕະຫຼາດທຶນ, ຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນລົງທຶນໃນຕະຫຼາດທຶນ. (ລາຍລະອຽດໃນເອກະສານຊ້ອນທ້າຍທີ 3)

ນອກຈາກນີ້, ເພື່ອຊຸກຍູ້ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ສາມາດລະດົມທຶນຜ່ານຕະຫຼາດທຶນ, ໄດ້ຄົ້ນຄວ້າ ການສ້າງ ແລະ ປັບປຸງ ເງື່ອນໄຂ, ກົນໄກ ແລະ ລະບຽບການເພື່ອຮອງຮັບການລະດົມທຶນຂອງວິສາຫະກິດທີ່ບໍ່ຄົບເງື່ອນໄຂໃນກະດານຫຼັກ (Main Board).

❖ **ການປັບປຸງ ແລະ ພັດທະນາລະບົບເຕັກໂນໂລຊີ ການສື່ສານຂໍ້ມູນຂ່າວສານ (ICT)**

ໃນໄລຍະ 10 ປີ ຜ່ານມາ, ຕລຊລ ໄດ້ຮັບການພັດທະນາ ແລະ ປັບປຸງໃຫ້ເຂັ້ມແຂງຢ່າງຕໍ່ເນື່ອງ ເປັນຕົ້ນແມ່ນບັນດານິຕິກຳ, ກົນໄກ ແລະ ລະບົບເຕັກໂນໂລຊີ ທີ່ຮອງຮັບໃຫ້ແກ່ການເຄື່ອນໄຫວວຽກງານຫຼັກຊັບ. ຕລຊລ ໄດ້ຖືລະບົບການເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເປັນໝາກຫົວໃຈຫຼັກ ເພື່ອຂັບເຄື່ອນການໃຫ້ບໍລິການຂອງ ຕລຊລ ໃຫ້ມີປະສິດທິພາບ, ທັນສະໄໝ ແລະ ປອດໄພ ໂດຍໄດ້ພັດທະນາ ແລະ ປາລຸງຮັກສາລະບົບຢ່າງຕໍ່ເນື່ອງ ເປັນຕົ້ນລະບົບຮັບຄຳສັ່ງຊື້-ຂາຍ, ລະບົບຈັບຄູ່ຊື້-ຂາຍ, ລະບົບສະສາງ ແລະ ຕັດບັນຊີຫຼັກຊັບ, ລະບົບຮັບຝາກຫຼັກຊັບ, ລະບົບຂໍ້ມູນຂ່າວສານ ແລະ ລະບົບອື່ນໆ ເພື່ອຮັບປະກັນການເຄື່ອນໄຫວໃຫ້ບໍລິການຂອງ ຕລຊລ. ພິເສດ ໃນປີ 2017 ຕລຊລ ໄດ້ພັດທະນາລະບົບເພື່ອຮອງຮັບການຊື້-ຂາຍພັນທະບັດລັດຖະບານຜ່ານ ຕລຊລ ແລະ ໄດ້ເລີ່ມຈັດຕັ້ງປະຕິບັດໃນທ້າຍປີ 2018. ນອກຈາກນີ້, ຕລຊລ ກໍ່ໄດ້ມີການພັດທະນາ ແລະ ປັບປຸງເວັບໄຊທ໌ຂອງຕົນໃນແຕ່ລະໄລຍະ ເພື່ອໃຫ້ມີຄວາມທັນສະໄໝ ແນໃສ່ເປັນສູນລວມຂໍ້ມູນ-ຂ່າວສານວຽກງານຫຼັກຊັບໃຫ້ແກ່ສັງຄົມຕາມພາລະບົດບາດ ຂອງແຕ່ລະພາກສ່ວນຢ່າງເປັນປົກກະຕິ.

❖ **ການຮ່ວມມືສາກົນ**

ຕລຊລ ໄດ້ເອົາໃຈໃສ່ປະຕິບັດວຽກງານຮ່ວມມືສາກົນ ທັງສອງຝ່າຍ ແລະ ຫຼາຍຝ່າຍ ເປັນຕົ້ນແມ່ນ ໄດ້ເຊັນ MoU ຮ່ວມກັບ ຕະຫຼາດຫຼັກຊັບຮ່າໂນ້ຍ, ຕະຫຼາດຫຼັກຊັບໂຮຈິມິນ, ຕະຫຼາດຫຼັກຊັບໄທ, ຕະຫຼາດຫຼັກຊັບກຳປູເຈຍ ແລະ ຕະຫຼາດຫຼັກຊັບເຊີນເຈິ້ນ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ການຊ່ວຍເຫຼືອດ້ານວິຊາການກ່ຽວກັບຕະຫຼາດທຶນ ແລະ ເພື່ອຍົກສູງບົດບາດຂອງ ຕລຊລ ໃນເວທີສາກົນ.

ນອກນັ້ນ ໃນຂົງເຂດພາກພື້ນລຸ່ມແມ່ນ້ຳຂອງ, ຕລຊລ ຍັງໄດ້ເປັນເຈົ້າພາບຈັດກອງປະຊຸມເສີມຂະຫຍາຍການຮ່ວມມືໃນການພັດທະນາຄວາມຮູ້ກ່ຽວກັບຕະຫຼາດທຶນໃນກຸ່ມປະເທດລຸ່ມແມ່ນ້ຳຂອງ "GMS: Capital Market Education Forum 2016" ແລະ ປະກອບສ່ວນໃນວຽກງານການເຊື່ອມໂຍງຕະຫຼາດຫຼັກຊັບຂອງປະເທດ CLMV (Cambodia, Lao PDR, Myanmar and Vietnam) ແລະ ປະເທດໃນຂົງເຂດພາກພື້ນແມ່ນ້ຳຂອງ.

ນອກຈາກນີ້, ໄດ້ສຳເລັດການຄົ້ນຄວ້າ ກ່ຽວກັບເງື່ອນໄຂການເຂົ້າເປັນສະມາຊິກຂອງອົງການກຳນົດລະຫັດຫຼັກຊັບສາກົນ (Association of National Numbering Agencies: ANNA), ສະຫະພັນຕະຫຼາດຫຼັກຊັບສາກົນ (World Exchange Founderation: WEF), ໂຄງການເຊື່ອມໂຍງການຊື້-ຂາຍລະຫວ່າງຕະຫຼາດຫຼັກຊັບ (ASEAN Exchange Linkage: AEL) ແລະ ຕະຫຼາດກຳລັງພັດທະນາ (Frontier Market: FM). ແຕ່ໃນພາກປະຕິບັດຕົວຈິງ ຍັງບໍ່ທັນສາມາດປະຕິບັດໄດ້ ເນື່ອງຈາກເງື່ອນໄຂຂອງຕະຫຼາດທຶນລາວໃນປັດຈຸບັນ ແມ່ນຍັງບໍ່ທັນມີຄວາມພ້ອມໃນການເຂົ້າເປັນສະມາຊິກຂອງບັນດາອົງການດັ່ງກ່າວ.

ຕະຫຼອດໄລຍະເວລາ 10 ປີ ຕລຊລ ໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງເປັນກ້າວໆ ໂດຍສະເພາະແມ່ນດ້ານ ບຸກຄະລາກອນ, ລະບົບໄອທີ, ກົນໄກການເຄື່ອນໄຫວທຸລະກິດ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການຄຸ້ມຄອງສະມາຊິກ, ການຊື້ ຂາຍຫຼັກຊັບ ແລະ ການໃຫ້ບໍລິການຮັບຝາກຫຼັກຊັບ. ສໍາລັບສະພາບການເຄື່ອນໄຫວ, ຕລຊລ ມີມູນຄ່າຕະຫຼາດຫຼັກຊັບເພີ່ມຂຶ້ນຈາກ 5,175,03 ຕື້ກີບ ໃນປີ 2010 ຫຼື 53%ມາເປັນ 7908,93 ຕື້ກີບ ໃນປີ 2020; ມູນຄ່າການຊື້-ຂາຍ ໃນ ຕລຊລ ໃນປີ 2010 ເພີ່ມຂຶ້ນ ຈາກ 2,13 ຕື້ກີບ ມາເປັນ 230,89 ຕື້ກີບ ໃນປີ 2020; ໃນໄລຍະ 10 ປີ ຜ່ານມາ (2011-2020) ດັດຊະນີ ຕລຊລ ເໜັງຕີງສະເລ່ຍຢູ່ທີ່ 1.058,61 ຈຸດ, ສູງສຸດ 1.864,98 ຈຸດ ແລະ ຕໍ່າສຸດ 547,01 ຈຸດ; ມູນຄ່າຕະຫຼາດຕໍ່ GDP, ສະພາບຄ່ອງຂອງຕະຫຼາດ ແລະ ຜົນຕອບແທນໃນການລົງທຶນໃສ່ຮຸ້ນຈົດທະບຽນ ທຽບກັບບັນດາປະເທດໃນກຸ່ມອາຊຽນດ້ວຍກັນ ຍັງຖືວ່າຢູ່ໃນລະດັບຕໍ່າ. (ລາຍລະອຽດໃນເອກະສານຊ້ອນທ້າຍທີ 4)

**2) ສູນຮັບຝາກຫຼັກຊັບ**

ໄດ້ສໍາເລັດການຄົ້ນຄວ້າການແຍກສູນຮັບຝາກຫຼັກຊັບອອກຈາກ ຕລຊລ ໃຫ້ເປັນນິຕິບຸກຄົນໜຶ່ງຕ່າງຫາກ ໂດຍໄດ້ອີງໃສ່ບົດຮຽນຂອງ ຄຄຊ ປະເທດໃກ້ຄຽງ ເຊັ່ນ: ສສ.ຫວຽດນາມ, ສປ.ຈີນ, ສ.ເກົາຫຼີ, ປະເທດໄທ ແລະ ຫຼັກການ IOSCO. ຜ່ານການຄົ້ນຄວ້າເຫັນວ່າ ການແຍກສູນຮັບຝາກຫຼັກຊັບອອກຈາກຕະຫຼາດຫຼັກຊັບ ແມ່ນມີຄວາມຈໍາເປັນແທ້ ເນື່ອງຈາກວ່າ ຈະສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ລົງທຶນ ກໍ່ຄືຜູ້ຝາກຫຼັກຊັບ ກ່ຽວກັບການໄລ່ລຽງ ແລະ ຫັກບັນຊີຫຼັກຊັບ ກໍລະນີຕະຫຼາດຫຼັກຊັບຖືກໂຈະການດໍາເນີນງານ ຫຼື ປິດ ເນື່ອງຈາກການລົ້ມລະລາຍ ແລະ ອື່ນໆ ເຊິ່ງອາດເຮັດໃຫ້ຂໍ້ມູນກ່ຽວກັບການສະສາງ, ຫັກບັນຊີ ແລະ ການຮັບຝາກຫຼັກຊັບສູນຫາຍ. ແຕ່ຜ່ານການແລກປ່ຽນບົດຮຽນກັບກົມກອງກ່ຽວຂ້ອງ ເຫັນວ່າ ອີງໃສ່ເງື່ອນໄຂປັດຈຸບັນຂອງຕະຫຼາດພວກເຮົາ ຍັງມີຫຼາຍດ້ານບໍ່ທັນສຸກງອມ ເປັນຕົ້ນ ຜະລິດຕະພັນຊື້-ຂາຍໃນ ຕລຊລ ຍັງບໍ່ທັນຫຼາຍ ໂດຍປັດຈຸບັນຜະລິດຕະພັນຫຼັກຊັບທີ່ມາຝາກ ມີພຽງ ຮຸ້ນ ແລະ ພັນທະບັດລັດຖະບານເທົ່ານັ້ນ ແຕ່ການລົງທຶນສ້າງລະບົບສູນຮັບຝາກຫຼັກຊັບໃໝ່ ພັດໃຊ້ງົບປະມານຈໍານວນຫຼາຍ ເຊິ່ງເຫັນວ່າເປັນການລົງທຶນທີ່ບໍ່ຄຸ້ມຄ່າ. ສະນັ້ນ, ຈຶ່ງໄດ້ຮັກສາສູນຮັບຝາກຫຼັກຊັບ ເປັນໜ້າວຽກໜຶ່ງຂອງ ຕລຊລ ໄປກ່ອນ.

### 2.4.2 ການສ້າງ ແລະ ພັດທະນາສະຖາບັນສື່ກາງດ້ານຫຼັກຊັບ

ອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະຖາບັນສື່ກາງດ້ານຫຼັກຊັບ ປະກອບດ້ວຍ: ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ບໍລິສັດປະເມີນມູນຄ່າຊັບສິນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ສະມາຄົມວຽກງານຫຼັກຊັບ. ຮອດທ້າຍປີ 2020 ສະຖາບັນສື່ກາງດ້ານຫຼັກຊັບ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ສຄຄຊ ປະກອບມີ ບໍລິສັດຫຼັກຊັບ 4 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 9 ແຫ່ງ, ທະນາຄານດູແລຊັບສິນ 3 ແຫ່ງ, ບໍລິສັດກວດສອບ 4 ແຫ່ງ, ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ 1 ແຫ່ງ ແລະ ທະນາຄານຕົວແທນເພື່ອການຊໍາລະ 2 ແຫ່ງ ແລະ ຊົມລົມທຸລະກິດຫຼັກຊັບ 1 ແຫ່ງ (ລາຍລະອຽດໃນເອກະສານຊ້ອນທ້າຍ 2).

ຮອດທ້າຍປີ 2020, ສຄຄຊ ໄດ້ອອກໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ທັງໝົດຈຳນວນ 32 ຄົນ, ໃນນີ້ ປະເພດທີ່ປຶກສາທາງດ້ານການເງິນ 11 ຄົນ, ປະເພດທີ່ປຶກສາການລົງທຶນ 2 ຄົນ, ປະເພດນາຍໜ້າຊື້-ຂາຍຫຼັກຊັບ 7 ຄົນ, ປະເພດຜູ້ຄ້າຫຼັກຊັບ 3 ຄົນ, ປະເພດນັກວິເຄາະ 1 ຄົນ, ຜູ້ບໍລິຫານກອງທຶນເພື່ອການລົງທຶນ 2 ຄົນ ແລະ ຜູ້ຊ່ວຍນາຍໜ້າຊື້-ຂາຍຫຼັກຊັບ 6 ຄົນ. ນອກຈາກນີ້, ສຄຄຊ ໄດ້ຮັບຮອງ ຜູ້ກວດສອບ ຈຳນວນ 17 ຄົນ ທີ່ສັງກັດຢູ່ບໍລິສັດກວດສອບ 4 ແຫ່ງ ແລະ ຮັບຮອງຜູ້ປະເມີນມູນຄ່າຊັບສິນ ຈຳນວນ 23 ຄົນ ທີ່ສັງກັດຢູ່ບໍລິສັດປະເມີນມູນຄ່າຊັບສິນ 9 ແຫ່ງ. ຈຳນວນນັກວິຊາຊີບທີ່ໄດ້ກ່າວມານີ້, ຖ້າທຽບໃສ່ລະດັບການພັດທະນາຂອງຕະຫຼາດທຶນລາວ ເຫັນວ່າພຽງພໍໂດຍພື້ນຖານ.

ອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເລກທີ 79/ສພຊ ລົງວັນທີ 3 ທັນວາ 2019, ສະຖາບັນສື່ກາງດ້ານຫຼັກຊັບ ທີ່ເປັນ ບໍລິສັດຫຼັກຊັບ ແລະ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນທີ່ເປັນຕ່າງປະເທດ ສາມາດຖືຮຸ້ນໄດ້ ຮ້ອຍສ່ວນຮ້ອຍ (100%). ນອກຈາກນີ້, ກົດໝາຍສະບັບດັ່ງກ່າວ ໄດ້ຂະຫຍາຍຂອບເຂດການເຄື່ອນໄຫວຂອງບໍລິສັດຫຼັກຊັບ ໃຫ້ສາມາດບໍລິການກ່ຽວກັບການແຍກ ແລະ ການຄວບກິດຈະການ (M&A).

ສຳລັບບໍລິສັດຫຼັກຊັບ, ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ກວດກາ ຫົວໜ່ວຍດັ່ງກ່າວ ຢ່າງເປັນປົກກະຕິບົນພື້ນຖານລະບຽບ ວ່າດ້ວຍການການຂໍອະນຸຍາດດຳເນີນທຸລະກິດຂອງບໍລິສັດຫຼັກຊັບ ໂດຍການກວດກາກັບທີ່ບໍລິສັດຫຼັກຊັບປະຈຳປີ (1 ຄັ້ງ/ປີ/ບໍລິສັດ), ລົງກວດກາສຸກເສີນ 1 ຄັ້ງ (ປີ 2013) ແລະ ກວດກາຕາມເອກະສານ ແລະ ໄດ້ນຳໃຊ້ລະບົບສົ່ງຂໍ້ມູນທາງເອເລັກໂທຣນິກ ເພື່ອລາຍງານຂໍ້ມູນຕາມງວດເວລາ ໃຫ້ ສຄຄຊ ເຊິ່ງຜ່ານການນຳໃຊ້ລະບົບດັ່ງກ່າວ ໄດ້ຊ່ວຍໃຫ້ຂອດການລາຍງານມີຄວາມຊັດເຈນ, ຄ່ອງຕົວ ແລະ ວ່ອງໄວຂຶ້ນ. ພ້ອມນີ້, ສຄຄຊ ກໍ່ໄດ້ນຳໃຊ້ລະບົບຕິດຕາມຄວາມພຽງພໍຂອງທຶນສຳລັບບໍລິສັດຫຼັກຊັບທີ່ເຄື່ອນໄຫວເຕັມຮູບແບບ ໂດຍກຳນົດໃຫ້ມີອັດຕາຄວາມພຽງພໍຂອງທຶນບໍ່ໃຫ້ຫຼຸດ 12%. ໃນປີ 2019 ເພື່ອໃຫ້ການຄຸ້ມຄອງມີຄວາມຮັດກຸມ ແລະ ຄ່ອງຕົວຍິ່ງຂຶ້ນ ສຄຄຊ ໄດ້ນຳໃຊ້ຫຼັກການຄຸ້ມຄອງບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk-Based Supervision). ນອກຈາກນີ້, ບໍລິສັດຫຼັກຊັບ ກໍ່ໄດ້ມີການພັດທະນາ ແລະ ປັບປຸງເວັບໄຊທ໌ຂອງຕົນໃນແຕ່ລະໄລຍະ ເພື່ອໃຫ້ມີຄວາມທັນສະໄໝ ແນໃສ່ເປັນສູນລວມຂໍ້ມູນ-ຂ່າວສານວຽກງານຫຼັກຊັບໃຫ້ແກ່ສັງຄົມຕາມພາລະບົດບາດ ຂອງແຕ່ລະພາກສ່ວນຢ່າງເປັນປົກກະຕິ.

ສຳລັບການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບອື່ນ (ບໍລິສັດປະເມີນມູນຄ່າຊັບສິນ, ທະນາຄານດູແລຊັບສິນ, ບໍລິສັດກວດສອບ, ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື ແລະ ທະນາຄານດູແລຊັບສິນ) ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ ເພື່ອໃຫ້ບໍລິການໃນຂົງເຂດວຽກງານຫຼັກຊັບ, ສຄຄຊ ໄດ້ເອົາໃຈໃສ່ຕິດຕາມກວດກາບັນດາສະຖາບັນດັ່ງກ່າວ ຜ່ານທາງເອກະສານ ຢ່າງເປັນປົກກະຕິ ແລະ ໄດ້ປະສານສົມທົບກັບຜູ້ຄຸ້ມຄອງຫຼັກຂອງຫົວໜ່ວຍດັ່ງກ່າວ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນໃນແຕ່ລະໄລຍະ.

ຜ່ານການຕິດຕາມກວດກາ ເຫັນວ່າ ສະຖາບັນສື່ກາງດ້ານຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ເຄື່ອນໄຫວຕາມພາລະບົດບາດຂອງຕົນ ແລະ ສອດຄ່ອງກັບລະບຽບການເປັນຢ່າງດີ ສາມາດປະກອບສ່ວນຂັບເຄື່ອນວຽກງານຕະຫຼາດທຶນໄດ້ດີພໍສົມຄວນ. ແນວໃດກໍ່ຕາມ, ຍັງພົບເຫັນບາງບໍລິສັດຫຼັກຊັບ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບລະບຽບ

ການ ໂດຍໄດ້ເຄື່ອນໄຫວປັ່ນລາຄາຮຸ້ນໃນຕະຫຼາດຫຼັກຊັບລາວ 2 ກໍລະນີ ແລະ ໄດ້ຈອງຊື້ຮຸ້ນຕັດໜ້າຜູ້ລົງທຶນໃນເວລາອອກຈຳໜ່າຍຮຸ້ນ 1 ກໍລະນີ ເຊິ່ງໄດ້ຖືກປະຕິບັດມາດຕະການປັບໄໝ 3 ກໍລະນີ, ກ່າວເຕືອນ 6 ກໍລະນີ ແລະ ຂຶ້ນບັນຊີດຳ (Black List) 1 ກໍລະນີ.

### 2.5 ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ

#### 2.5.1 ການຂະຫຍາຍຖານຜູ້ລົງທຶນ

ຕະຫຼອດໄລຍະ 10 ປີ ຜ່ານມາ ສຄຄຊ ໄດ້ສຸມໃສ່ຄົ້ນຄວ້າການຂະຫຍາຍຖານຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງເງື່ອນໄຂ ແລະ ດຶງດູດຜູ້ລົງທຶນປະເພດບຸກຄົນ ແລະ ສະຖາບັນຕ່າງໆໃຫ້ລົງທຶນໃນຫຼັກຊັບຢູ່ ຕລຊລ ຫຼາຍຂຶ້ນ. ໃນນັ້ນ, ໄດ້ສຳເລັດການຄົ້ນຄວ້າການໃຫ້ພະນັກງານ-ລັດຖະກອນ ສາມາດຊື້-ຂາຍຫຼັກຊັບ (ຮຸ້ນ) ໃນ ຕລຊລ; ໄດ້ຄົ້ນຄວ້າທົບທວນລະບຽບກ່ຽວຂ້ອງຂອງທະນາຄານທຸລະກິດ, ບໍລິສັດປະກັນໄພ, ຄັງສະຫວັດດີການສັງຄົມ, ຄັງບຳເນັດ-ບຳນານ ແລະ ວິສາຫະກິດຕ່າງໆ ປະກອບສ່ວນລົງທຶນໃນຫຼັກຊັບຫຼາຍຂຶ້ນ ເຊິ່ງໃນນີ້ ທະນາຄານແຫ່ງ ສປປ ລາວ ໄດ້ອອກຂໍ້ຕົກລົງວ່າດ້ວຍ ການລົງທຶນໃນຫຼັກຊັບຂອງທະນາຄານທຸລະກິດ ສະບັບເລກທີ 251/ທຫລ ລົງວັນທີ 8 ເມສາ 2020 ເພື່ອອະນຸຍາດໃຫ້ທະນາຄານທຸລະກິດສາມາດລົງທຶນໃນຫຼັກຊັບ ຢູ່ພາຍໃນ ແລະ ຕ່າງປະເທດໄດ້ ໃນຂອບເຂດບໍ່ເກີນ 15 ສ່ວນຮ້ອຍຂອງທຶນຊັ້ນໜຶ່ງ ຍົກເວັ້ນ ການລົງທຶນໃນພັນທະບັດລັດຖະບານ ສປປ ລາວ.

ພ້ອມນັ້ນ, ກໍ່ໄດ້ຄົ້ນຄວ້າສ້າງລະບຽບການເພື່ອຄຸ້ມຄອງຜູ້ລົງທຶນພາຍໃນ ທີ່ມີຈຸດປະສົງໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ເພື່ອເຮັດໃຫ້ການອອກໄປລົງທຶນໃນຫຼັກຊັບຢູ່ຕ່າງປະເທດ ຖືກຕ້ອງຕາມລະບຽບການ ແລະ ເປັນເຄື່ອງມືຊ່ວຍຜູ້ຄຸ້ມຄອງມະຫາພາກ ແລະ ຂະແໜງການກ່ຽວຂ້ອງ. ໃນສ່ວນຂອງການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ ແມ່ນໄດ້ຄົ້ນຄວ້າກຳນົດເພດານການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດເປັນແຕ່ລະກໍລະນີ ເພື່ອຄວບຄຸມອັດຕາສ່ວນການຖືຄອງຮຸ້ນຂອງຕ່າງປະເທດ ແນໃສ່ປົກປ້ອງທຸລະກິດບາງຂະແໜງການຂອງ ສປປ ລາວ.

ປັດຈຸບັນ, ຜູ້ລົງທຶນທີ່ເຂົ້າມາຊື້-ຂາຍຮຸ້ນຢູ່ໃນ ຕລຊລ ລວມມີທັງໝົດ 16.081 ບັນຊີ ໃນທ້າຍເດືອນ ທັນວາ 2020, ທຽບໃສ່ ທ້າຍເດືອນ ທັນວາ 2016 ແມ່ນເພີ່ມຂຶ້ນ 3.663 ບັນຊີ ຫຼື 29,50%. ໃນນີ້ ບັນຊີຫຼັກຊັບຂອງຜູ້ລົງທຶນຕ່າງປະເທດ ມີຈຳນວນ 3.407 ບັນຊີ (21,19%) ຈາກ 48 ປະເທດ ແລະ ບັນຊີຜູ້ລົງທຶນພາຍໃນປະເທດ ຈຳນວນ 12.674 ບັນຊີ (78,81%). ບັນຊີຫຼັກຊັບຂອງຜູ້ລົງທຶນປະເພດສະຖາບັນມີ 136 ບັນຊີ (0,85%) ຂອງຈຳນວນບັນຊີຜູ້ລົງທຶນທັງໝົດ, ໃນນີ້ ມີຜູ້ລົງທຶນປະເພດສະຖາບັນ ຈາກພາຍໃນຈຳນວນ 59 ບັນຊີ ແລະ ຈາກຕ່າງປະເທດ 77 ບັນຊີ.

ແຜນວາດ 2: ບັນຊີຊື້-ຂາຍຫຼັກຊັບສໍາລັບ ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ










## 2.5.2 ການປົກປ້ອງຜູ້ລົງທຶນ

ອີງຕາມຄໍາສັ່ງຂອງທ່ານ ນາຍົກລັດຖະມົນຕີ ເລກທີ 02/ນຍ[1] ໂດຍສະເພາະແມ່ນການປົກປ້ອງຜູ້ລົງທຶນລາຍຍ່ອຍ, ສຄຄຊ ໄດ້ເອົາໃຈໃສ່ສ້າງ ແລະ ປັບປຸງນິຕິກໍາໃນຂົງເຂດວຽກງານຫຼັກຊັບ ທີ່ກ່ຽວຂ້ອງກັບການປັບປຸງຕົວຊີ້ວັດການປົກປ້ອງຜູ້ລົງທຶນລາຍຍ່ອຍດັ່ງກ່າວ ເປັນຕົ້ນ ຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານ, ລາຍການກ່ຽວພັນ, ລາຍງານ ແລະ ເປີດເຜີຍຂໍ້ມູນ, ຄໍາແນະນໍາກ່ຽວກັບການຈັດກອງປະຊຸມຜູ້ຖືຮຸ້ນ, ການຄອບຄອງກິດຈະການ, ການຖືຮຸ້ນໄຂວ່ ແລະ ລະບຽບການອື່ນໆ. ພ້ອມດຽວກັນນີ້ ສຄຄຊ ກໍ່ໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງປັບປຸງເນື້ອໃນຂອງກົດໝາຍວ່າດ້ວຍວິສາຫະກິດ ໂດຍສະເພາະແມ່ນ ໝວດທີ່ຕິດພັນກັບ ບໍລິສັດມະຫາຊົນ ແລະ ບາງບົດບັນຍັດຂອງໝວດບໍລິສັດຈໍາກັດ ທີ່ຕິດພັນກັບການປົກປ້ອງຜູ້ລົງທຶນລາຍຍ່ອຍ.

ນອກຈາກນີ້, ສຄຄຊ ໄດ້ສ້າງຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມໃນກໍລະນີສົງໃສ ຫຼື ພົບເຫັນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດກົດໝາຍທີ່ກ່ຽວຂ້ອງກັບວຽກງານຫຼັກຊັບ ໂດຍສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານ 4 ຊ່ອງທາງ ດັ່ງລຸ່ມນີ້:

- ມາຮ້ອງຟ້ອງ ຫຼື ແຈ້ງຄວາມດ້ວຍຕົນເອງ ຢູ່ທີ່ຫ້ອງການ ສຄຄຊ;
- ຮ້ອງຟ້ອງ ຫຼື ແຈ້ງຄວາມ ດ້ວຍການສົ່ງຂໍ້ມູນຜ່ານທາງໄປສະນີ;
- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງໂທລະສັບ (ເບີໂທສາຍດ່ວນ 1602);

[1] ຄໍາສັ່ງເລກທີ 02/ນຍ: ຄໍາສັ່ງຂອງທ່ານ ນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດໍາເນີນທຸລະກິດຢູ່ ສປປ ລາວ ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018.

- ຮ້ອງຟ້ອງ ຫຼື ແຈ້ງຄວາມຜ່ານທາງ ອີເມວ ແລະ ເວັບໄຊທ໌ຂອງ ຄຄຊ (www.lsc.gov.la).

ຜ່ານການຈັດຕັ້ງປະຕິບັດ 4 ຊ່ອງທາງດັ່ງກ່າວ ຮອດປັດຈຸບັນ ຍັງບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກມວນຊົນກໍລະນີສົງໃສ ຫຼື ພົບເຫັນການລະເມີດຂອງ ບຸກຄົນ ແລະ ນິຕິບຸກຄົນ ຕໍ່ກັບ ສະຖານະການກະທຳຜິດທາງອາຍາທີ່ກ່ຽວຂ້ອງກັບວຽກງານຫຼັກຊັບເທື່ອ.

**2.5.3 ການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ**

**1) ການຝຶກອົບຮົມວຽກງານຫຼັກຊັບ**

ໄດ້ປັບປຸງໂຄງການຝຶກອົບຮົມ ໃຫ້ມີຄຸນນະພາບກວ່າເກົ່າ ແລະ ສອດຄ່ອງກັບແຕ່ລະເປົ້າໝາຍ ຢ່າງມີຈຸດສຸມ ເປັນຕົ້ນ: ຕລຊລ ໄດ້ຈັດຕັ້ງຫຼັກສູດຝຶກອົບຮົມນັກວິຊາຊີບທຸລະກິດຫຼັກຊັບ ປະເພດນາຍໜ້າຊື້-ຂາຍຫຼັກຊັບ (Broker) ເຊິ່ງລວມມີ ຫຼັກສູດ CMIP ຈຳນວນ 3 ຄັ້ງ ມີຜູ້ເຂົ້າຮ່ວມ 219 ເທື່ອຄົນ, ຫຼັກສູດ Lao PIB (ຫຼັກສູດຂອງ ຕລຊລ) ຈຳນວນ 6 ຄັ້ງ ມີຜູ້ເຂົ້າຮ່ວມ 304 ເທື່ອຄົນ, ຫຼັກສູດ SAAC I ຈຳນວນ 1 ຄັ້ງ ມີຜູ້ເຂົ້າຮ່ວມ 86 ທ່ານ ແລະ ປະເພດທີ່ປຶກສາທາງການເງິນ (Financial Advisor: La.FA I) ຈຳນວນ 1 ຄັ້ງ ມີຜູ້ເຂົ້າຮ່ວມ 49 ຄົນ ແລະ ຈັດຝຶກອົບຮົມໃນຫົວຂໍ້ທີ່ກ່ຽວຂ້ອງກັບຄວາມຮູ້ຕະຫຼາດທຶນໃນຈຳນວນຫຼາຍຫົວຂໍ້ ໃຫ້ແກ່ພະນັກງານວິຊາການໃນຂົງເຂດຕະຫຼາດທຶນ ເພື່ອສ້າງບຸກຄະລາກອນ ປະກອບເຂົ້າໃນວຽກງານທຸລະກິດຫຼັກຊັບ ແລະ ບໍລິສັດຈົດທະບຽນ ຈຳນວນ 200 ຄັ້ງ ມີຜູ້ເຂົ້າຮ່ວມ 587 ເທື່ອຄົນ. ພ້ອມນີ້, ຜູ້ບໍລິຫານຂອງ ສຄຄຊ ໄດ້ເຂົ້າຮ່ວມຝຶກອົບຮົມຫຼັກສູດສຳລັບຜູ້ບໍລິຫານ (Director Certification Program: DCP) ຈຳນວນ 7 ຄັ້ງ ມີຜູ້ເຂົ້າຮ່ວມ 7 ເທື່ອຄົນ.

ເພື່ອພັດທະນາວຽກງານຝຶກອົບຮົມກ່ຽວກັບວຽກງານຕະຫຼາດທຶນໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ ສຄຄຊ ໄດ້ຮ່ວມມືກັບສະມາຄົມສົ່ງເສີມສະພາບໍລິຫານແຫ່ງປະເທດໄທ (Institute of Directors: IOD) ປະຕິບັດໂຄງການ Board Leadership Program ຈຳນວນ 1 ຄັ້ງ (ມີຜູ້ເຂົ້າຮ່ວມ 30 ຄົນ) ໃນປີ 2018 ເພື່ອສ້າງໜໍ່ແໜງຄູຝຶກວຽກງານຫຼັກຊັບ ແລະ ໄດ້ສຳເລັດການສ້າງເນື້ອໃນຫຼັກສູດຂອງໂຄງການດັ່ງກ່າວຂັ້ນພື້ນຖານຂອງ ສປປ ລາວ.

**2) ການໂຄສະນາເຜີຍແຜ່ວຽກງານຫຼັກຊັບ**

ເພື່ອເຮັດໃຫ້ສັງຄົມມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບການພັດທະນາຕະຫຼາດທຶນ ໂດຍສະເພາະ ແມ່ນຜົນປະໂຫຍດທີ່ບຸກຄົນ ແລະ ນິຕິບຸກຄົນຈະໄດ້ຮັບຈາກການປະກອບສ່ວນເຂົ້າຮ່ວມວຽກງານດັ່ງກ່າວ ລວມທັງ ຄວາມສ່ຽງທີ່ຕິດພັນ, ສຄຄຊ ຮ່ວມກັບ ຕລຊລ, ບໍລິສັດຫຼັກຊັບ ແລະ ບໍລິສັດຈົດທະບຽນ ໄດ້ສຸມໃສ່ໂຄສະນາເຜີຍແຜ່ກ່ຽວກັບລະບຽບການ ແລະ ຄວາມຮູ້ກ່ຽວກັບວຽກງານຫຼັກຊັບ ໃຫ້ແກ່ມວນຊົນ ໃນຫຼາຍຮູບການ ແລະ ວິທີການ ຢ່າງມີຈຸດສຸມ ເປັນຕົ້ນແມ່ນ: ໂຄສະນາເຜີຍແຜ່ກັບທີ່ພາຍໃນນະຄອນຫຼວງ ແລະ ຕ່າງແຂວງ ກ່ຽວກັບກົດໝາຍວ່າດ້ວຍຫຼັກຊັບ ແລະ ລະບຽບການກ່ຽວກັບວຽກງານຫຼັກຊັບ, ພາບລວມຕະຫຼາດທຶນ, ຜົນປະໂຫຍດ ແລະ ຂັ້ນຕອນ ການຊື້ຂາຍຮຸ້ນ ແລະ ອື່ນໆ ໃຫ້ແກ່ຫຼາຍພາກສ່ວນໃນສັງຄົມ ເປັນຕົ້ນ ບັນດາອົງການຈັດຕັ້ງຂອງລັດ, ສະຖາບັນການເງິນ ແລະ ສະຖາບັນການສຶກສາ ຈຳນວນ 165 ຄັ້ງ ມີຜູ້ເຂົ້າຮ່ວມລວມທັງໝົດ 20.780 ເທື່ອຄົນ, ຈັດກິດຈະກຳສຳມະນາ, ຈັດງານປະຈຳປີ, ສ້າງປື້ມ ແລະ ວີດີໂອສົ່ງເສີມຄວາມຮູ້, ຜະລິດສະປອດໂຄສະນາ, ພາບສະແດງຂໍ້ມູນ, ກາຕູນເອນີເມຊັນ, ຂຽນບົດຄວາມ ແລະ ສຳພາດ ຜູ້ຊົງຄຸນວຸດທິ ໃນຫົວຂໍ້ຕ່າງໆຂອງວຽກງານຕະຫຼາດທຶນ ເພື່ອໂຄສະນາຜ່ານສື່ຕ່າງໆ ເປັນຕົ້ນ

ແມ່ນ: ວາລະສານ, ໜັງສືພິມ, ເວັບໄຊທ໌ທະນາຄານແຫ່ງ ສປປ ລາວ ແລະ ສຄຄຊ, Facebook, Youtube, ວິທະຍຸ ແລະ ລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ". ພ້ອມນີ້, ໃນປີ 2019 ເພື່ອເປັນການສ້າງພື້ນຖານແຫຼ່ງຂໍ້ມູນ, ບົດຮຽນ ແລະ ຄວາມຮູ້ກ່ຽວກັບວຽກງານຫຼັກຊັບ, ສຄຄຊ ໄດ້ ສ້າງຫໍສະໝຸດຂະໜາດນ້ອຍຂຶ້ນ ແລະ ພ້ອມນຳໃຊ້ຢ່າງເປັນລະບົບ ໃນປີ 2020 ເປັນຕົ້ນມາ ເພື່ອເປັນພື້ນຖານໃນການສ້າງສູນໃຫ້ຄວາມຮູ້ຕະຫຼາດທຶນລາວໃນອະນາຄົດ.

ພິເສດ ປີ 2020 ເປັນປີທີ່ ຕະຫຼາດທຶນລາວ ກໍ່ຄື ຕະຫຼາດຫຼັກຊັບລາວ ໄດ້ຮັບການສ້າງຕັ້ງ ຄົບຮອບ 10 ປີ. ໄດ້ສຳເລັດການຈັດພິທີສະຫຼຸບຜົນງານຕະຫຼາດທຶນລາວ ຄົບຮອບ 10 ປີ (2010-2020) ເພື່ອສະຫຼຸບຜົນງານພົ້ນເດັ່ນ ໃນໄລຍະຜ່ານມາ ແລະ ວາງວິໄສທັດໃນການພັດທະນາວຽກງານຕະຫຼາດທຶນໃນຕໍ່ໜ້າ ໃຫ້ສັງຄົມໄດ້ຮັບຮູ້ຢ່າງກວ້າງຂວາງ ໂດຍໄດ້ມີການວາງສະແດງຜົນງານຕະຫຼາດທຶນ ຂອງ 27 ພາກສ່ວນ ແລະ ຈັດສຳມະນາແບບຖາມ-ຕອບ ເຊິ່ງມີຜູ້ເຂົ້າຮ່ວມ ຫຼາຍກວ່າ 500 ເທື່ອຄົນ.

## II. ຂໍ້ຄົງຄ້າງ

ຕະຫຼອດໄລຍະ 10 ປີ ຜ່ານມາ ເຖິງວ່າຕະຫຼາດທຶນໄດ້ສ້າງບົດບາດໃໝ່ໃນການລະດົມທຶນ ແລະ ສະໜອງທຶນໃຫ້ແກ່ສັງຄົມ ແຕ່ການເຄື່ອນໄຫວຍັງບໍ່ທັນແຂງແຮງ ສົມຄູ່ກັບຄວາມຮຽກຮ້ອງຕ້ອງການໃຫ້ຕະຫຼາດທຶນເປັນທາງເລືອກໃໝ່ ໃນການລະດົມທຶນ ແລະ ການລົງທຶນ ໄລຍະຍາວ ເປັນຕົ້ນ:

1) **ດ້ານການລະດົມທຶນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ:**
   - ບາງບໍລິສັດຈົດທະບຽນ ເຄື່ອນໄຫວບໍ່ມີປະສິດທິພາບ ເຊິ່ງເຫັນໄດ້ຈາກບາງບໍລິສັດມີຜົນຕອບແທນຕໍ່າ ຫຼື ບໍ່ມີຜົນຕອບແທນ, ຜົນການດຳເນີນງານຂອງບໍລິສັດຈົດທະບຽນສ່ວນໃຫຍ່ ມີທ່າອ່ຽງຫຼຸດລົງ ແລະ ບໍ່ເປັນໄປຕາມແຜນທີ່ກຳນົດໃນໜັງສືຊວນຊື້ ເຮັດໃຫ້ຮຸ້ນທີ່ຊື້-ຂາຍໃນຕະຫຼາດຫຼັກຊັບ ບໍ່ທັນດຶງດູດການລົງທຶນເທົ່າທີ່ຄວນ ເມື່ອທຽບໃສ່ການລົງທຶນໃນຮູບແບບອື່ນ. ພ້ອມນີ້, ບາງບໍລິສັດຈົດທະບຽນ ບໍ່ສາມາດເປີດເຜີຍຂໍ້ມູນຂອງບໍລິສັດຕົນ ໄດ້ດີເທົ່າທີ່ຄວນ ເປັນຕົ້ນ ຂໍ້ມູນກ່ຽວກັບຜົນປະກອບການ, ທ່າອ່ຽງການດຳເນີນທຸລະກິດ ແລະ ແຜນການລົງທຶນ ເພື່ອໃຫ້ຜູ້ລົງທຶນ ນຳໃຊ້ເຂົ້າໃນການຕັດສິນໃຈລົງທຶນ;
   - ການຂະຫຍາຍວິສາຫະກິດເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ຍັງຊັກຊ້າ ເນື່ອງຈາກເປົ້າໝາຍລະດົມທຶນຜ່ານຕະຫຼາດທຶນ ຍັງບໍ່ທັນມີເງື່ອນໄຂຄົບຖ້ວນ ເປັນຕົ້ນ ການຖືບັນຊີຍັງບໍ່ເປັນລະບົບ, ເປົ້າໝາຍການນຳໃຊ້ທຶນ ແລະ ແຜນການຂະຫຍາຍທຸລະກິດ ຍັງບໍ່ຈະແຈ້ງ, ການເຄື່ອນໄຫວທຸລະກິດ ຍັງຂາດທຶນ, ການຄຸ້ມຄອງບໍລິຫານຍັງບໍ່ທັນເປັນມືອາຊີບ, ຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ກັບວຽກງານຕະຫຼາດທຶນ ຍັງມີຂີດຈຳກັດ;
   - ການປະຕິຮູບລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງ ແລະ ລະດົມທຶນຜ່ານຕະຫຼາດທຶນ ໄດ້ລະບຸໄວ້ໃນມະຕິ 5 ສະໄໝທີ IX ຂອງພັກແລ້ວ ແຕ່ບໍ່ຖືກຈັດຕັ້ງຜັນຂະຫຍາຍຢ່າງເປັນຮູບປະທຳ ໂດຍສະເພາະ ຊຸກຍູ້ຫົວໜ່ວຍທີ່ມີທ່າແຮງເຂົ້າລະດົມທຶນຜ່ານຕະຫຼາດທຶນ ເຊິ່ງເຮັດໃຫ້ຂາດຕົວແບບທີ່ດີຈາກວິສາຫະກິດຂອງລັດທີ່ລະດົມທຶນຜ່ານຕະຫຼາດທຶນ;

- ການປະສານງານລະຫວ່າງກະຊວງທີ່ກ່ຽວຂ້ອງ ແລະ ການຄົ້ນຄວ້າກະກຽມບໍລິສັດເປົ້າໝາຍອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ມີລັກສະນະຊັກຊ້າ ເຮັດໃຫ້ການກະກຽມໃຊ້ເວລາດົນຈຶ່ງສຳເລັດ;
- ຜະລິດຕະພັນຫຼັກຊັບ ທີ່ຊື້-ຂາຍໃນຕະຫຼາດຫຼັກຊັບ ຍັງບໍ່ທັນຫຼາກຫຼາຍ ມີພຽງແຕ່ ຮຸ້ນ ແລະ ພັນທະບັດລັດຖະບານ. ພ້ອມນັ້ນ, ການຄົ້ນຄວ້າ ສ້າງຜະລິດຕະພັນໃໝ່ ທີ່ມີລະບຽບການຮອງຮັບແລ້ວ ຄື: ກອງທຶນຮ່ວມ ແລະ ການເອົາຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດຢູ່ຕ່າງປະເທດ (DR) ແມ່ນຍັງບໍ່ໄດ້ມີການຈັດຕັ້ງປະຕິບັດເປັນຮູບປະທຳ ສິ່ງພົນໃຫ້ສະພາບຄ່ອງໃນການຊື້-ຂາຍຫຼັກຊັບ ຢູ່ໃນຕະຫຼາດຫຼັກຊັບ ຍັງບໍ່ສູງ.

2) **ດ້ານການຄຸ້ມຄອງວຽກງານຫຼັກຊັບ:**

- ຄວາມຮູ້, ຄວາມສາມາດ, ບົດຮຽນ, ຄວາມຊຳນານງານສະເພາະດ້ານ ແລະ ປະສົບການຕົວຈິງໃນວຽກງານການຄຸ້ມຄອງຫຼັກຊັບ ຂອງບຸກຄະລາກອນ ສຄຄຊ ຍັງອ່ອນນ້ອຍ;
- ເຄື່ອງມືໃນການຄຸ້ມຄອງວຽກງານຫຼັກຊັບ ໂດຍສະເພາະແມ່ນ ລະບົບໄອທີ ແລະ ບັນດານິຕິກຳໃຕ້ກົດໝາຍ ຍັງບໍ່ຄົບຖ້ວນ ແລະ ຄອບຄຸມທຸກບັນຫາ ເຮັດໃຫ້ການຄຸ້ມຄອງຕິດຕາມ ການຈັດຕັ້ງປະຕິບັດລະບຽບການທີ່ກ່ຽວຂ້ອງ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຍັງບໍ່ທັນເຮັດໄດ້ຕໍ່ເນື່ອງ, ເມື່ອພົບເຫັນບັນຫາແລ້ວ ການຄົ້ນຄວ້າວິທີການແກ້ໄຂ ຍັງບໍ່ທັນສະພາບການ. ພ້ອມນີ້ ເຄື່ອງມືຄຸ້ມຄອງບໍລິສັດຈົດທະບຽນ ແລະ ສະຖາບັນສີກາງດ້ານຫຼັກຊັບ ເປັນຕົ້ນ ການລາຍງານ ແລະ ການເປີດເຜີຍຂໍ້ມູນ, ການຄຸ້ມຄອງບໍລິຫານ, ການຄຸ້ມຄອງຕາມແບບຕີລາຄາຄວາມສ່ຽງ ເຖິງວ່າມີນິຕິກຳຮອງຮັບຄົບຖ້ວນພໍສົມຄວນ ແຕ່ຂອດການຈັດຕັ້ງປະຕິບັດຂອງບໍລິສັດຈົດທະບຽນ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ແລະ ການບັງຄັບຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງຜູ້ຄຸ້ມຄອງ ຍັງບໍ່ເຂັ້ມງວດແທ້.

3) **ດ້ານນະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ:**

- ນະໂຍບາຍ ເພື່ອສະໜັບສະໜູນການພັດທະນາຕະຫຼາດທຶນ ຍັງບໍ່ທັນດຶງດູດການລະດົມທຶນ, ຊຸກຍູ້ສົ່ງເສີມໃຫ້ບໍລິສັດຈົດທະບຽນສາມາດແຂ່ງຂັນກັບບໍລິສັດທີ່ບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຍັງບໍ່ດຶງດູດການລົງທຶນເທົ່າທີ່ຄວນ ເຊັ່ນ: ນະໂຍບາຍອາກອນລາຍໄດ້ສຳລັບບໍລິສັດຈົດທະບຽນ, ນະໂຍບາຍອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມ ສຳລັບກອງທຶນ ເພື່ອການລົງທຶນໃນບໍລິສັດ (PE Fund), ທຸລະກິດຮ່ວມລົງທຶນ (Venture Capital Fund) ແລະ ຜູ້ລົງທຶນ, ນະໂຍບາຍອາກອນສຳລັບບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ລົງທຶນໃນຮຸ້ນກູ້, ນະໂຍບາຍການປະຕິຮູບລັດວິສາຫະກິດ ແລະ ນະໂຍບາຍດຶງດູດບັນດາໂຄງການລົງທຶນໂດຍກົງຈາກຕ່າງປະເທດ ເພື່ອລະດົມທຶນຜ່ານຕະຫຼາດທຶນ, ການຄຸ້ມຄອງເງິນຕາໃນການລົງທຶນໃນຫຼັກຊັບ ແລະ ນະໂຍບາຍອັດຕາດອກເບ້ຍ ເພື່ອຊຸກຍູ້ການພັດທະນາຕະຫຼາດພັນທະບັດ;
- ການຄຸ້ມຄອງຂອງພາກລັດ ຕໍ່ບໍລິສັດທີ່ຢູ່ນອກຕະຫຼາດຫຼັກຊັບ ຍັງບໍ່ໜັກແໜ້ນເຂັ້ມແຂງແທ້ ເປັນຕົ້ນແມ່ນການຖືບັນຊີ, ການແຈ້ງເສຍພາສີ ແລະ ອາກອນ, ການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບການລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຍັງບໍ່ໄດ້ປະຕິບັດຢ່າງຈິງຈັງ ເຮັດໃຫ້ເກີດມີການປຽບທຽບຊົ່ງຊາ ແລະ ທໍ້ຖອຍ ສຳລັບບໍລິສັດທີ່ປະຕິບັດຖືກຕ້ອງຕາມລະບຽບການ.

4) **ດ້ານການສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ:**

- ການປະຕິບັດບົດບາດຂອງຄະນະອຳນວຍການ ແລະ ສະພາບໍລິຫານ ຂອງ ຕລຊລ ໃນການແກ້ໄຂຂໍ້ຄົງຄ້າງທີ່ຕິດພັນກັບການເຄື່ອນໄຫວທຸລະກິດ ແລະ ການພັດທະນາຕະຫຼາດທຶນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຍັງບໍ່ທັນລົງເລິກຈັດຕັ້ງຜັນຂະຫຍາຍເທົ່າທີ່ຄວນ;
- ສະພາບຄ່ອງໃນຕະຫຼາດຍັງບໍ່ທັນສູງ ເນື່ອງຈາກຈຳນວນບໍລິສັດຈົດທະບຽນ ບໍ່ຫຼາຍ, ຜົນການດຳເນີນງານຂອງຫຼາຍບໍລິສັດຈົດທະບຽນບໍ່ມີປະສິດຕິພາບ (ຂາດທຶນ) ເຮັດໃຫ້ຜູ້ລົງທຶນມີທາງເລືອກຈຳກັດໃນການເລືອກລົງທຶນໃນຫຼັກຊັບ ແລະ ບໍ່ມີແຮງຈູງໃຈໃນການຖືຄອງຫຼັກຊັບ, ກົນໄກຮອງຮັບການຊື້-ຂາຍຫຼັກຊັບຍັງບໍ່ຕອບສະໜອງ ເຊັ່ນ: ບໍ່ມີລະບົບສົ່ງຄຳສັ່ງຊື້-ຂາຍຜ່ານມືຖື (Mobile App) ແລະ Tablet, ບໍ່ມີລະບົບເຊື່ອມຕໍ່ຫຼາຍທະນາຄານຕົວແທນເພື່ອການຊຳລະ (Multiple Bank Link), ການເປີດບັນຊີເງິນຝາກສຳລັບຜູ້ລົງທຶນຕ່າງປະເທດ ເພື່ອລົງທຶນໃນຫຼັກຊັບ ຍັງມີຂໍ້ຫຍຸ້ງຍາກ ແລະ ບໍ່ມີລະບົບເປີດບັນຊີຫຼັກຊັບແບບອອນລາຍ ແລະ ຖານຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ຍັງຈຳກັດ;
- ການເຄື່ອນໄຫວໃຫ້ບໍລິການຂອງສະຖາບັນສື່ກາງດ້ານຫຼັກຊັບຈຳນວນໜຶ່ງ ຍັງບໍ່ທັນປະຕິບັດບົດບາດຂອງຕົນຢ່າງເຕັມສ່ວນ ແລະ ເລິກເຊິ່ງເຖິງຖອງແທ້, ຄຸນນະພາບການໃຫ້ບໍລິການຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນເປັນຕົ້ນ ຂອບເຂດການດຳເນີນທຸລະກິດ ແລະ ບໍລິການ ບາງດ້ານຍັງບໍ່ໄດ້ເຄື່ອນໄຫວ, ການປະຕິບັດລະບຽບການທີ່ກ່ຽວຂ້ອງຂອງບາງສະຖາບັນສື່ກາງດ້ານຫຼັກຊັບ ຍັງບໍ່ທັນປະຕິບັດໄດ້ດີ, ຈັນຍາບັນໃນການເຄື່ອນໄຫວວຽກງານຍັງບໍ່ສູງເທົ່າທີ່ຄວນ, ການຊອກຫາລູກຄ້າ ຍັງບໍ່ທັນກວ້າງຂວາງ ແລະ ຊ່ອງທາງອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ ຍັງຈຳກັດ;
- ສະຖາບັນສື່ກາງດ້ານຫຼັກຊັບບາງປະເພດ ຍັງບໍ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ, ບາງປະເພດ ທີ່ໄດ້ຮັບອະນຸຍາດ ຫຼື ໄດ້ຮັບການຮັບຮອງແລ້ວ ກໍ່ຍັງມີຈຳນວນຈຳກັດ;
- ຍັງຂາດການຄຸ້ມຄອງ ສຳລັບບໍລິສັດປະເມີນມູນຄ່າຊັບສິນ.

5) **ດ້ານການຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ:**

- ຖານຜູ້ລົງທຶນທີ່ເຂົ້າມາລົງທຶນໃນຕະຫຼາດທຶນ ຍັງບໍ່ທັນກວ້າງຂວາງ ແລະ ຍັງບໍ່ເຄື່ອນໄຫວຊື້-ຂາຍຢ່າງຟົດຟື້ນ ໂດຍສະເພາະແມ່ນ ຜູ້ລົງທຶນປະເພດສະຖາບັນພາຍໃນປະເທດ;
- ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການຊື້-ຂາຍຫຼັກຊັບ ເພື່ອດຶງດູດຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຍັງບໍ່ທັນໄດ້ຮັບການປະຕິບັດຢ່າງຕັ້ງໜ້າ;
- ການໂຄສະນາເຜີຍແຜ່ ຄວາມຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ຜູ້ລົງທຶນ ແລະ ມວນຊົນ ເຫັນວ່າ ໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນ ແຕ່ຄວາມເຂົ້າໃຈກ່ຽວກັບວຽກງານຫຼັກຊັບ ຂອງສັງຄົມຍັງຈຳກັດ.

## III. ບົດຮຽນທີ່ຖອດຖອນໄດ້

1) **ດ້ານການລະດົມທຶນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ:**
   - ຄຄຊ, ສຄຄຊ, ຕລຊລ ແລະ ບໍລິສັດຫຼັກຊັບ ຄວນຄັດເລືອກວິສາຫະກິດ ທີ່ມີຄວາມເຂັ້ມແຂງຮອບດ້ານ ລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອເພີ່ມຜະລິດຕະພັນໃໝ່ທີ່ມີຄຸນນະພາບ ແລະ ມີຜົນຕອບແທນທີ່ເໝາະສົມ ເພື່ອດຶງດູດຜູ້ລົງທຶນ.
   - ລັດວິສາຫະກິດ ຕ້ອງມີການປະຕິຮູບຢ່າງເປັນຮູບປະທຳ ແລະ ຕໍ່ເນື່ອງ ໂດຍຖືເປັນວາລະແຫ່ງຊາດ ເພື່ອເພີ່ມທະວີຄວາມເຂັ້ມແຂງ ແລະ ຄວາມໂປ່ງໃສຂອງລັດວິສາຫະກິດ. ສໍາລັບວິສາຫະກິດເອກະຊົນທີ່ມີມາດຖານເງື່ອນໄຂ ຕ້ອງມີຄວາມຕື່ນຕົວສູງ ໃຊ້ກົນໄກຕະຫຼາດທຶນ ເພື່ອລະດົມທຶນ;
   - ອົງການຄຸ້ມຄອງວຽກງານຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄວນສ້າງຄວາມເຂັ້ມແຂງຮອບດ້ານ ໃຫ້ແກ່ວິສາຫະກິດ ທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ດ້ວຍການຝຶກອົບຮົມ ແລະ ເຜີຍແຜ່ກ່ຽວກັບແນວທາງ, ນະໂຍບາຍ, ລະບຽບການ, ເງື່ອນໄຂ, ຂັ້ນຕອນ ແລະ ວິຊາການສະເພາະດ້ານ ເປັນຕົ້ນ: ການບັນຊີ, ການຄຸ້ມຄອງບໍລິຫານ ແລະ ອື່ນໆ;
   - ບໍລິສັດຈົດທະບຽນ ແລະ ວິສາຫະກິດທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ຄວນເອົາໃຈໃສ່ແກ້ໄຂບັນຫາພາຍໃນຂອງຕົນ ເພື່ອກາຍເປັນຜູ້ປະກອບການທີ່ມີຄຸນນະພາບ ແລະ ບໍລິຫານຢ່າງມືອາຊີບ ເປັນຕົ້ນ ການຖືບັນຊີ, ການປະຕິບັດພັນທະອາກອນ, ການກວດສອບເອກະສານລາຍງານການເງິນ, ການເປີດເຜີຍຂໍ້ມູນໃຫ້ແກ່ຜູ້ລົງທຶນ, ປັບປຸງການຄຸ້ມຄອງບໍລິຫານ ເພື່ອກ້າວໄປເຖິງການມີກຳໄລເທື່ອລະກ້າວ;
   - ເງື່ອນໄຂການລະດົມທຶນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ແມ່ນມີມາດຖານສູງ ແລະ ຍັງບໍ່ມີຕະຫຼາດຮອງ ຫຼື ກະດານຮອງ ເຊິ່ງຕ້ອງໄດ້ປັບປຸງເພື່ອໃຫ້ສາມາດຮອງຮັບ ຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນເພື່ອຊື້-ຂາຍຫຼັກຊັບຜ່ານຕະຫຼາດຫຼັກຊັບ.

2) **ດ້ານການຄຸ້ມຄອງວຽກງານຫຼັກຊັບ:**
   - ອົງການຄຸ້ມຄອງວຽກງານຫຼັກຊັບ ຕ້ອງມີນິຕິກຳຄົບຖ້ວນ, ແທດເໝາະກັບເງື່ອນໄຂຕົວຈິງ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ, ມີກົນໄກການຄຸ້ມຄອງ, ມີການຊຸກຍູ້ການຈັດຕັ້ງປະຕິບັດ ແລະ ການບັງຄັບຈັດຕັ້ງປະຕິບັດ ລະບຽບກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ມີພະນັກງານທີ່ມີຄວາມສາມາດ, ມີລະບົບເຕັກໂນໂລຊີທີ່ທັນສະໄໝ ເພື່ອຊ່ວຍໃນການຄຸ້ມຄອງ ແລະ ຕ້ອງມີການປະສານສົມທົບຢ່າງແໜ້ນແຟ້ນ ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ແລະ ຍາດແຍ່ງການຮ່ວມມືຊ່ວຍເຫຼືອກັບສາກົນ ເປັນເງື່ອນໄຂສຳຄັນໃນການພັດທະນາວຽກງານການຄຸ້ມຄອງຕະຫຼາດທຶນໃຫ້ມີຄວາມເຂັ້ມແຂງ.

3) **ດ້ານນະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ:**
   - ການກຳນົດນະໂຍບາຍດ້ານຕ່າງໆ ຂອງພາກສ່ວນກ່ຽວຂ້ອງ ຄວນສະໜັບສະໜູນທາງອ້ອມ ໃນການພັດທະນາຕະຫຼາດທຶນ ເຊັ່ນ: ນະໂຍບາຍອາກອນລາຍໄດ້, ນະໂຍບາຍດ້ານອາກອນ ສຳລັບບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ລົງທຶນໃນຮຸ້ນກູ້, ນະໂຍບາຍການປະຕິຮູບລັດວິສາຫະກິດ ແລະ ນະໂຍບາຍດຶງດູດບັນດາໂຄງການລົງທຶນໂດຍກົງຈາກຕ່າງປະເທດ ເພື່ອລະດົມທຶນຜ່ານຕະຫຼາດທຶນ, ນະໂຍບາຍອັດຕາດອກເບ້ຍ

ເພື່ອຊຸກຍູ້ການພັດທະນາຕະຫຼາດພັນທະບັດ, ການຄຸ້ມຄ່ຽງເງິນຕາ ແລະ ນະໂຍບາຍອື່ນໆ ເຊິ່ງນະໂຍບາຍດັ່ງກ່າວ ຄວນຖືກບັນຈຸເຂົ້າໃນແຜນຍຸດທະສາດຂອງຕົນ;

- ການຄຸ້ມຄອງຂອງພາກລັດ ຕໍ່ບໍລິສັດທີ່ຢູ່ນອກຕະຫຼາດຫຼັກຊັບ ເປັນຕົ້ນ ການຖືບັນຊີ, ການແຈ້ງເສຍພາສີ ແລະ ອາກອນ, ການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບການ ລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຄວນປະຕິບັດຢ່າງຈິງຈັງ ແລະ ໜັກແໜ້ນເຂັ້ມແຂງ.

4) **ດ້ານການສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ:**

- គຄຊ ແລະ ສະພາບໍລິຫານ ຂອງ ຕລຊລ ຄວນເປັນເຈົ້າການນຳເອົາບັນຫາທີ່ຕິດພັນກັບຂະແໜງການ ແລະ ຄວາມຮັບຜິດຊອບຂອງຕົນ ໄປຈັດຕັ້ງຜັນຂະຫຍາຍໃນການແກ້ໄຂໃຫ້ເປັນຮູບປະທຳຫຼາຍກວ່າເກົ່າ;
- ຜູ້ຮ່ວມທຶນທັງສອງຝ່າຍຂອງ ຕລຊລ ຄວນປະສານສົມທົບຢ່າງກົມກຽວ ແລະ ໃກ້ຊິດ ເພື່ອບັນລຸຈຸດມຸ່ງໝາຍໃນການພັດທະນາ ຕລຊລ ໃຫ້ມີຄວາມເຂັ້ມແຂງຮອບດ້ານ, ມີກົນໄກ, ນິຕິກຳ ແລະ ລະບົບເຕັກໂນໂລຊີ ທີ່ຄົບຖ້ວນ ແລະ ຮັບປະກັນການປະຕິບັດບົດບາດຂອງຕົນ ຢ່າງເຕັມສ່ວນ;
- ສະຖາບັນສື່ກາງດ້ານຫຼັກຊັບ ໂດຍສະເພາະ ບໍລິສັດຫຼັກຊັບ ຕ້ອງມີຄວາມຊຳນານງານດ້ານທຸລະກິດຫຼັກຊັບຢ່າງເລິກເຊິ່ງ, ມີຄວາມເຂັ້ມແຂງ ແລະ ມີຈັນຍາບັນໃນອາຊີບສູງ;
- ການຄຸ້ມຄອງວຽກງານປະເມີນມູນຄ່າຊັບສິນ ຄວນມີຜູ້ຄຸ້ມຄອງຫຼັກ, ກິດຈະການປະເມີນມູນຄ່າຊັບສິນ ຄວນຖືກຍົກລະດັບຈາກ ກິດຈະການທົ່ວໄປ ເປັນກິດຈະການໃນບັນຊີຄວບຄຸມ ແລະ ແຍກເປັນກິດຈະການຍ່ອຍ ອີງຕາມປະເພດຊັບສິນ.

5) **ດ້ານການຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ:**

- ຄວນມີຖານຜູ້ລົງທຶນພາຍໃນປະເທດ ທີ່ມີຄວາມເຂັ້ມແຂງດ້ານການເງິນ, ການລົງທຶນ ແລະ ພ້ອມທີ່ຈະປະກອບສ່ວນລົງທຶນໃນຕະຫຼາດທຶນ ແລະ ຕ້ອງສ້າງທຸກເງື່ອນໄຂ ເພື່ອດຶງດູດຜູ້ລົງທຶນ ຈາກຕ່າງປະເທດມາລົງທຶນຢູ່ຕະຫຼາດທຶນລາວ;
- ການໂຄສະນາເຜີຍແຜ່ ຕ້ອງໄດ້ຈັດຕັ້ງຢ່າງຕໍ່ເນື່ອງ ແລະ ເຂົ້າເຖິງມວນຊົນທົ່ວໄປ ແລະ ທຸກກຸ່ມເປົ້າໝາຍ

## ພາກທີ II

## ຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ ໄລຍະ 10 ປີຕໍ່ໜ້າ (2021-2030) ແລະ ວິໄສທັດຮອດປີ 2035

### I. ສະພາບການພັດທະນາຕະຫຼາດທຶນສາກົນ, ພາກພື້ນ ແລະ ພາຍໃນປະເທດ

ໃນຊຸມປີຕໍ່ໜ້າ ຄາດວ່າສະພາບເສດຖະກິດສາກົນ ແລະ ພາກພື້ນ ຍັງຈະສືບຕໍ່ຜັນແປໄປຢ່າງສັບສົນ ແລະ ມີຫຼາຍປັດໄຈທີ່ຈະສົ່ງຜົນກະທົບ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ເປັນຕົ້ນ ການຜັນຜວນຂອງອັດຕາດອກເບ້ຍ, ອັດຕາແລກປ່ຽນ, ລາຄາຄໍາ, ລາຄານໍ້າມັນ, ການພັດທະນາທາງດ້ານເຕັກໂນໂລຊີ, ໄພທໍາມະຊາດ, ພະຍາດລະບາດ ແລະ ອື່ນໆ ເຊິ່ງທັງໝົດເຫຼົ່ານີ້ ລ້ວນແຕ່ສົ່ງຜົນກະທົບບໍ່ໜ້ອຍ ຕໍ່ການພັດທະນາຕະຫຼາດທຶນຂອງໂລກໂດຍລວມ. ເຖິງຢ່າງໃດກໍ່ຕາມ ຄາດວ່າທິດທາງການພັດທະນາຕະຫຼາດທຶນຂອງສາກົນ ຈະສືບຕໍ່ເນັ້ນໜັກໃສ່ ການພັດທະນາຄຸນນະພາບ ແລະ ລະບົບການບໍລິການໃຫ້ທັນສະໄໝ ເພື່ອສ້າງຄວາມເຊື່ອໝັ້ນ ແລະ ເປັນການດຶງດູດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ. ສ່ວນທິດທາງການພັດທະນາຕະຫຼາດທຶນຂອງບັນດາປະເທດທີ່ກໍາລັງພັດທະນາ ຄາດວ່າຈະເນັ້ນໜັກດ້ານໂຄງລ່າງພື້ນຖານຕະຫຼາດທຶນແບບຄົບວົງຈອນ (ລະບົບສົ່ງຄໍາສັ່ງຊື້-ຂາຍ, ການບໍລິຫານຄວາມສ່ຽງ ແລະ ລະບົບຫຼັງການຊື້-ຂາຍ) ແລະ ກ້າວເຂົ້າສູ່ຍຸກດິຈິຕອນເຕັມຮູບແບບ ເພື່ອອໍານວຍຄວາມສະດວກໃນການຊື້-ຂາຍຫຼັກຊັບຂ້າມປະເທດ, ການຊໍາລະເງິນລະຫວ່າງບໍລິສັດຫຼັກຊັບ ແລະ ຜູ້ລົງທຶນຂ້າມທະນາຄານ ແລະ ການສ້າງຕະຫຼາດຊັບສິນດິຈິຕອນ (Digital Asset Platform) ເພື່ອສ້າງໂອກາດໃໝ່ໃຫ້ຕະຫຼາດທຶນ. ສໍາລັບການພັດທະນາຕະຫຼາດທຶນອາຊຽນ ຄາດວ່າຈະເນັ້ນໜັກໃສ່ແຜນງານບຸລິມະສິດຕົ້ນຕໍຄື: ເພີ່ມລະດັບຄວາມໂປ່ງໃສ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດອອກຈໍາໜ່າຍຫຼັກຊັບໃຫ້ສູງຂຶ້ນ, ສືບຕໍ່ຊຸກຍູ້ໃຫ້ບັນດາລະບຽບ ແລະ ຫຼັກການຂອງປະເທດສະມາຊິກມີຄວາມສອດຄ່ອງກັນ, ສ້າງຂີດຄວາມສາມາດດ້ານວິຊາການໃຫ້ແກ່ບຸກຄະລາກອນ, ເພີ່ມທະວີການຕິດຕໍ່ສື່ສານ ແລະ ການຮັບຮູ້ຂໍ້ມູນຂ່າວສານຂອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ຮັດແໜ້ນການຮ່ວມມື ແລະ ການປະສານງານເຊິ່ງກັນ ແລະ ກັນ. ຄຽງຄູ່ກັນນີ້, ກໍ່ຈະສືບຕໍ່ສຸມໃສ່ການສ້າງ ແລະ ພັດທະນາຜະລິດຕະພັນການເງິນສີຂຽວ ແລະ ຍືນຍົງທີ່ຄໍານຶງເຖິງສິ່ງແວດລ້ອມຂອງພາກພື້ນ ກໍຄືຂອງສາກົນ. ສະເພາະ ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ເຮັດໃຫ້ບັນດາຕະຫຼາດຫຼັກຊັບ ໃນສາກົນ ແລະ ພາກພື້ນ ເລີ່ມຫັນມາໝູນໃຊ້ເຕັກໂນໂລຊີຕ່າງໆ ເປັນຕົ້ນລະບົບການຍື່ນເອກະສານ, ລະບົບນໍາສົ່ງບົດລາຍງານທາງການເງິນ, ລະບົບການຈັດກອງປະຊຸມຜູ້ຖືຮຸ້ນ, ລະບົບການບໍລິການ ຮັບ-ສົ່ງ ຄໍາສັ່ງຊື້-ຂາຍຫຼັກຊັບ ຜ່ານຊ່ອງທາງຕ່າງໆ ແລະ ອື່ນໆ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຫຼັກຊັບ ແລະ ການຊື້-ຂາຍຫຼັກຊັບ ສາມາດເຄື່ອນໄຫວໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິພາບ ແນໃສ່ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ຜູ້ລົງທຶນ ພ້ອມທັງ ຮອງຮັບສະຖານະການຕ່າງໆທີ່ອາດເກີດຂຶ້ນຈາກຜົນກະທົບຂອງພະຍາດ ໂຄວິດ-19.

ການພັດທະນາຕະຫຼາດທຶນລາວໃນຕໍ່ໜ້າ ຄາດວ່າຈະປະເຊີນກັບສິ່ງທ້າທາຍຫຼາຍດ້ານ ຈາກສະພາບການພັດທະນາຕະຫຼາດທຶນ ສາກົນ, ປະເທດທີ່ກໍາລັງພັດທະນາ ແລະ ຕະຫຼາດທຶນອາຊຽນ ບວກກັບ ຄວາມບໍ່ແນ່ນອນໃນການຟື້ນຕົວຂອງເສດຖະກິດພາຍໃນປະເທດ. ເຖິງຢ່າງໃດກໍ່ຕາມ ເມື່ອທຽບໃສ່ແຜນພັດທະນາເສດຖະກິດສັງຄົມ 5 ປີ

ຄັ້ງທີ IX (2021-2025) ເຫັນວ່າ ຄວາມຕ້ອງການແຫຼ່ງທຶນເພື່ອພັດທະນາ ມີຈຳນວນຫຼາຍສົມຄວນ. ສະນັ້ນ, ຕະຫຼາດທຶນລາວ ຕ້ອງສືບຕໍ່ໄດ້ຮັບການປັບປຸງ ແລະ ພັດທະນາ ໃຫ້ມີຄວາມເຂັ້ມແຂງທາງດ້ານ ກົນໄກ, ລະບຽບການ, ລະບົບພື້ນຖານໂຄງລ່າງຕະຫຼາດທຶນ ແລະ ຜະລິດຕະພັນໃໝ່ ໃຫ້ສົມຄູ່ກັບລະດັບການພັດທະນາຂອງວິສາຫະກິດ ແລະ ສ້າງຊ່ອງທາງລະດົມທຶນຜ່ານຕະຫຼາດທຶນສາກົນທີ່ເໝາະສົມ.

ຈາກສະພາບທີ່ໄດ້ກ່າວຂ້າງເທິງ, ຄາດວ່າຈະສ້າງທັງກາລະໂອກາດ ແລະ ສິ່ງທ້າທາຍຫຼາຍດ້ານ ໃຫ້ແກ່ການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃນຊຸມປີຕໍ່ໜ້າຄື:

## 1. ກາລະໂອກາດ

ຈາກສະພາບການພັດທະນາຕະຫຼາດທຶນສາກົນ, ບັນດາປະເທດທີ່ຕະຫຼາດກຳລັງພັດທະນາ, ຕະຫຼາດອາຊຽນ ແລະ ສະພາບພາຍໃນປະເທດ ທີ່ກ່າວມາຂ້າງເທິງນັ້ນ ຈະສ້າງກາລະໂອກາດຫຼາຍດ້ານ ໃຫ້ແກ່ການພັດທະນາຕະຫຼາດທຶນຂອງ ສປປ ລາວ ເປັນຕົ້ນແມ່ນ:

1) ການຮ່ວມມື ແລະ ການເຊື່ອມໂຍງກັບຕະຫຼາດທຶນສາກົນ ແລະ ພາກພື້ນ ເປັນໂອກາດອັນດີທີ່ເອື້ອອຳນວຍໃຫ້ແກ່ລະບົບຕະຫຼາດທຶນຂອງ ສປປ ລາວ ສາມາດລະດົມທຶນ ແລະ ຂະຫຍາຍຖານຜູ້ລົງທຶນຈາກຕ່າງປະເທດໄດ້ຫຼາຍຂຶ້ນ ຈາກທຸລະກຳພາຍໃນປະເທດ ແລະ ທຸລະກຳຂ້າມແດນ, ເປີດກວ້າງການຮ່ວມມືດ້ານທຸລະກິດຫຼັກຊັບ, ການຮ່ວມມືເພື່ອພັດທະນາດ້ານບຸກຄະລາກອນ ແລະ ແລກປ່ຽນຂໍ້ມູນຂ່າວສານ ເພື່ອນຳມາສ້າງ ແລະ ປັບປຸງບັນດານິຕິກຳ ແລະ ກົນໄກຂອງຕະຫຼາດທຶນລາວ, ການມີສ່ວນຮ່ວມໃນການພັດທະນາວຽກງານຄຸ້ມຄອງຫຼັກຊັບໃນເວທີສາກົນ;
2) ທັນວິກິດທາງດ້ານເສດຖະກິດ ໃນ ສປປ ລາວ ມາເປັນໂອກາດພັດທະນາຕະຫຼາດທຶນ ເນື່ອງຈາກປັດຈຸບັນແຫຼ່ງທຶນງົບປະມານ ເພື່ອຊຸກຍູ້ໂຄງການລົງທຶນຂອງລັດມີຈຳກັດ ເຮັດໃຫ້ເອກະຊົນມີສ່ວນຮ່ວມລົງທຶນໃນກິດຈະການຂອງພາກລັດ (Public Private Partnership) ແລະ ຫັນໄປສູ່ການລະດົມທຶນຜ່ານຕະຫຼາດທຶນຫຼາຍຂຶ້ນ;
3) ການພັດທະນາທາງດ້ານລະບົບເຕັກໂນໂລຊີ ນັບມື້ນັບຂະຫຍາຍຕົວ ເປັນໂອກາດອັນດີໃຫ້ແກ່ການພັດທະນາລະບົບການໃຫ້ບໍລິການວຽກງານຕະຫຼາດທຶນ ມີຄວາມວ່ອງໄວ ແລະ ທັນສະໄໝ ເປີດໂອກາດໃຫ້ຜູ້ລະດົມທຶນ ແລະ ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດເຂົ້າເຖິງຕະຫຼາດທຶນຄ່ອງຕົວຂຶ້ນ;
4) ຕະຫຼາດທຶນ ເປັນທາງເລືອກໃນການລະດົມທຶນ ແລະ ເປັນກົນໄກທີ່ດີ ສຳລັບວິສາຫະກິດ ພ້ອມທັງ ປັບປຸງວິສາຫະກິດໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານ ການເງິນ, ການເຄື່ອນໄຫວທຸລະກິດ ແລະ ການຄຸ້ມຄອງບໍລິຫານ (CG) ເພື່ອສ້າງຄວາມອາດສາມາດແຂ່ງຂັນກັບພາຍໃນ ແລະ ພາຍນອກ.

## 2. ສິ່ງທ້າທາຍ

ຄຽງຄູ່ກັບກາລະໂອກາດ ກໍ່ມີສິ່ງທ້າທາຍຈຳນວນໜຶ່ງ ທີ່ພວກເຮົາຈະຕ້ອງໄດ້ເອົາໃຈໃສ່ຄື:

1) ຫົວໜ່ວຍວິສາຫະກິດ ມີຈຳນວນໜ້ອຍ ແລະ ອ່ອນແອ ທາງດ້ານການເງິນ, ການບັນຊີ, ການຄຸ້ມຄອງບໍລິຫານ ແລະ ວິສາຫະກິດສ່ວນຫຼາຍຜົນການດຳເນີນງານຂາດທຶນ. ນອກຈາກນີ້, ວິສາຫະກິດຂອງລັດຈຳນວນໜຶ່ງ ຍັງບໍ່

ທັນໄດ້ຮັບການປັບປຸງ ແລະ ເປັນເຈົ້ານຳໜ້າພາທາງຮອບດ້ານ ຕາມຈິດໃຈຊີ້ນຳຂອງຂັ້ນເທິງ ອາດສົ່ງຜົນໃຫ້ການລະດົມທຶນດ້ວຍການອອກຈຳໜ່າຍຫຼັກຊັບ ຢູ່ພາຍໃນ ແລະ ຕ່າງປະເທດ ພົບຄວາມຫຍຸ້ງຍາກ;

2) ລະບົບຕະຫຼາດທຶນຂອງປະເທດເຮົາ ມີຂະໜາດນ້ອຍ, ຢູ່ໃນຂັ້ນເລີ່ມຕົ້ນຂອງການພັດທະນາ ແລະ ຕົ້ນທຶນການບໍລິການ ຍັງສູງເມື່ອທຽບໃສ່ຕະຫຼາດທຶນຂອງປະເທດອື່ນ ສົ່ງຜົນກະທົບຕໍ່ຄວາມສາມາດໃນການແຂ່ງຂັນ, ເຊື່ອມໂຍງ ແລະ ເຊື່ອມຈອດ ກັບພາກພື້ນ ແລະ ສາກົນ;

3) ຄຸນນະພາບ ແລະ ປະລິມານທາງດ້ານບຸກຄະລາກອນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຄຸ້ມຄອງ ແລະ ພັດທະນາວຽກງານຫຼັກຊັບ ຍັງຈຳກັດ;

4) ໃນເງື່ອນໄຂການຂະຫຍາຍຕົວດ້ານເຕັກໂນໂລຊີທີ່ຕິດພັນກັບຕະຫຼາດທຶນ ມີການພັດທະນາຢ່າງວ່ອງໄວ ຖ້າຄວາມອາດສາມາດໃນການປັບປຸງ/ປ່ຽນຖ່າຍ ແລະ ການຮອງຮັບພາຍໃນບໍ່ທັນສະພາບ ແລະ ບໍ່ສົມຄູ່ ຈະເຮັດໃຫ້ຄວາມສາມາດໃນແຂ່ງຂັນກັບພາຍນອກຫຼຸດລົງ ທັງມີຄວາມສ່ຽງຈາກໂຈມຕີລະບົບທາງເອເລັກໂຕຣນິກ;

5) ຄວາມຕ້ອງການດ້ານພື້ນຖານໂຄງລ່າງທີ່ເຂັ້ມແຂງ ແມ່ນບັນຫາຈຳເປັນຮີບດ່ວນ ແຕ່ພວກເຮົາຍັງຂາດທຶນຮອນ ແລະ ບຸກຄະລາກອນທີ່ມີຄຸນນະພາບ;

6) ພື້ນຖານເສດຖະກິດພາຍໃນ ແລະ ສະພາບການເງິນ-ເງິນຕາ ລວມທັງ ອັດຕາແລກປ່ຽນ ແລະ ອັດຕາດອກເບ້ຍຍັງບໍ່ທັນເຂັ້ມແຂງ ແລະ ໝັກແໜ້ນ, ງົບປະມານແຫ່ງລັດ ຍັງປະສົບກັບບັນຫາຂາດດຸນຢ່າງຕໍ່ເນື່ອງ ແລະ ມີທ່າອ່ຽງເພີ່ມຂຶ້ນ, ພາລະໜີ້ສິນຕໍ່ຕ່າງປະເທດ ຍັງສູງ ເຊິ່ງສືບຕໍ່ເປັນສິ່ງທ້າທາຍຕໍ່ການລົງທຶນ ແລະ ລະດົມທຶນຜ່ານຕະຫຼາດທຶນ.

## II. ວິໄສທັດ ຮອດປີ 2035

"ຊ່ອງທາງລະດົມທຶນ ແລະ ລົງທຶນ ຢ່າງມືອາຊີບ, ໂປ່ງໃສ ແລະ ຍືນຍົງ"

## III. ທິດທາງລວມ, ຄາດໝາຍລວມ ແລະ ຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ໄລຍະ 10 ປີ (2021-2030)

### 1. ທິດທາງລວມ

1) ພັດທະນາອົງການຄຸ້ມຄອງວຽກງານຫຼັກຊັບ ໃຫ້ເຂັ້ມແຂງຮອບດ້ານ ເພື່ອຮັບປະກັນການຄຸ້ມຄອງວຽກງານຫຼັກຊັບ ຢ່າງມີປະສິດທິພາບ; ເປີດກວ້າງການຮ່ວມມືແບບຫຼາຍທິດ ແລະ ຫຼາຍຝ່າຍ ເພື່ອເສີມຂະຫຍາຍການລະດົມທຶນ ແລະ ການລົງທຶນ ທັງຢູ່ຕະຫຼາດທຶນພາຍໃນ ແລະ ຕ່າງປະເທດ;

2) ສ້າງ ແລະ ປັບປຸງ ນະໂຍບາຍອາກອນ ແລະ ບໍ່ແມ່ນອາກອນ ສຳລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ; ເພີ່ມທະວີຄວາມຮັບຜິດຊອບ ໃຫ້ອົງການຄຸ້ມຄອງພາກລັດທີ່ກ່ຽວຂ້ອງ ຊຸກຍູ້ທຸກຫົວໜ່ວຍວິສາຫະກິດ ປະຕິບັດລະບຽບການຢ່າງສະເໝີພາບກັນ;

3) ພັດທະນາພື້ນຖານໂຄງລ່າງຕະຫຼາດທຶນ (ຕະຫຼາດຫຼັກຊັບ ແລະ ສະຖາບັນສື່ກາງດ້ານຫຼັກຊັບ) ໃຫ້ເຂັ້ມແຂງ ແລະ ໄດ້ມາດຕະຖານ, ໄດ້ຮັບຄວາມເຊື່ອຖື ຈາກຜູ້ລະດົມທຶນ ແລະ ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ແລະ ຮັບປະກັນໃຫ້ແກ່ການເຊື່ອມໂຍງ ແລະ ເຊື່ອມຈອດກັບຕະຫຼາດທຶນພາກພື້ນ;

4) ສ້າງຜະລິດຕະພັນຫຼັກຊັບ ທີ່ຊື້-ຂາຍໃນຕະຫຼາດຫຼັກຊັບ ໃຫ້ມີຄວາມຫຼາກຫຼາຍ, ມີຄຸນນະພາບ ແລະ ມີຜົນຕອບແທນທີ່ເໝາະສົມ, ຮັບປະກັນໃຫ້ວິສາຫະກິດພາຍໃນປະເທດ ສາມາດລະດົມທຶນຈາກຕະຫຼາດຫຼັກຊັບ ພາຍໃນ ແລະ ຕ່າງປະເທດ ຢ່າງຄ່ອງຕົວ;

5) ເປັນເຈົ້າການໂຄສະນາເຜີຍແຜ່ໃຫ້ຄວາມຮູ້ວຽກງານຕະຫຼາດທຶນ ແກ່ ມວນຊົນ ແລະ ຜູ້ລົງທຶນ ຢ່າງກວ້າງຂວາງ ເພື່ອໃຫ້ສາມາດປະກອບສ່ວນລົງທຶນໃນຫຼັກຊັບຢ່າງມືອາຊີບ, ສ້າງນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ມີຄວາມເຂັ້ມແຂງ ແລະ ມີຈັນຍາບັນສູງ ຕໍ່ວິຊາຊີບຂອງຕົນ.

**2. ຄາດໝາຍລວມ**

1) ສ້າງບຸກຄະລາກອນຂອງອົງການຄຸ້ມຄອງວຽກງານຫຼັກຊັບ ໃຫ້ມີຄວາມສາມາດທາງດ້ານວິຊາສະເພາະຕະຫຼາດທຶນ ເພື່ອຮັບປະກັນການຄຸ້ມຄອງວຽກງານຫຼັກຊັບ; ວຽກງານເຕັກໂນໂລຊີ ໄດ້ຮັບການພັດທະນາ ແລະ ປັບປຸງທັນເປັນທັນສະໄໝ ເພື່ອເປັນເຄື່ອງມືຊ່ວຍຄຸ້ມຄອງວຽກງານຫຼັກຊັບໃຫ້ໄດ້ຢ່າງໜ້ອຍ 5 ລະບົບ ໃນປີ 2025 ແລະ ຢ່າງໜ້ອຍ 10 ລະບົບໃນປີ 2030; ອົງການຄຸ້ມຄອງວຽກງານຫຼັກຊັບ ມີເພື່ອນມິດສາກົນ ຢ່າງກວ້າງຂວາງ ສາມາດຍາດແຍ່ງການຮ່ວມມືໃນການພັດທະນາ ແລະ ຄຸ້ມຄອງ ວຽກງານຫຼັກຊັບ;

2) ພັດທະນາພື້ນຖານທາງດ້ານນິຕິກຳ ໃຫ້ຄົບຖ້ວນ ພ້ອມທັງ ຫຍັບເຂົ້າໃກ້ມາດຕະຖານສາກົນ ເທື່ອລະກ້າວ ແລະ ສອດຄ່ອງກັບເງື່ອນໄຂຕົວຈິງພາຍໃນປະເທດ ເພື່ອເອື້ອອຳນວຍໃຫ້ແກ່ ການລະດົມທຶນ ແລະ ການລົງທຶນ ໃນຕະຫຼາດທຶນທັງພາຍໃນ ແລະ ຕ່າງປະເທດ; ຄົ້ນຄວ້າ ນະໂຍບາຍ ອາກອນ ແລະ ບໍ່ແມ່ນອາກອນ ສຳລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ;

3) ເຂັ້ມງວດການຄຸ້ມຄອງຂອງພາກລັດ ດ້ານການຖືບັນຊີ, ການແຈ້ງເສຍພາສີ ແລະ ອາກອນ ຂອງບໍລິສັດທີ່ຢູ່ນອກຕະຫຼາດຫຼັກຊັບ, ການສະກັດກັ້ນການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງເຄັ່ງຄັດ;

4) ລະບົບເຕັກໂນໂລຊີຂອງຕະຫຼາດຫຼັກຊັບ ໄດ້ຮັບການພັດທະນາ ໃຫ້ທັນສະໄໝ ແລະ ປອດໄພ, ສາມາດໃຫ້ບໍລິການຊື້-ຂາຍຫຼັກຊັບຢ່າງຄ່ອງຕົວ, ມີຄູ່ຮ່ວມທຶນ ຫຼື ມີຕະຫຼາດແຫ່ງໃໝ່ ເພື່ອຕອບໂຈດຄວາມຕ້ອງການລະດົມທຶນ ແລະ ການລົງທຶນ ຢູ່ພາຍໃນປະເທດ; ຫັນຮູບແບບການເຄື່ອນໄຫວຂອງຕະຫຼາດຫຼັກຊັບ ໃຫ້ເໝາະສົມກັບສະພາບການຂະຫຍາຍຕົວຂອງຕະຫຼາດຫຼັກຊັບ ເພື່ອກາຍເປັນອົງການຄຸ້ມຄອງຕົນເອງ (Self Regulatory Organization: SRO) ໃຫ້ມີຄວາມຄືບໜ້າ ເພື່ອສາມາດບັນລຸໄດ້ ໃນປີ 2030; ແຍກສູນຮັບຝາກຫຼັກຊັບເປັນນິຕິບຸກຄົນໜຶ່ງຕ່າງຫາກ ໃນປີ 2030; ຄົ້ນຄວ້າປັບປຸງເງື່ອນໄຂການຈົດທະບຽນໃນຕະຫຼາດຫຼັກຊັບໃຫ້ຄົບຖ້ວນ ແລະ ຮັດກຸມ ແລະ ຄົ້ນຄວ້າ ສ້າງຕະຫຼາດຮອງ ຫຼື ກະດານຮອງ ເພື່ອຮອງຮັບຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນ ຫຼື ຂຶ້ນທະບຽນ ເພື່ອຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບ ແລະ ການຖອນຈົດ

ທະບຽນຂອງບໍລິສັດຈົດທະບຽນ; ສູ້ຊົນໃຫ້ມີມູນຄ່າການຊື້-ຂາຍໃນຕະຫຼາດຫຼັກຊັບເພີ່ມຂຶ້ນ ຢ່າງໜ້ອຍ 5% ຕໍ່ປີ;

5) ລະບົບເຕັກໂນໂລຊີ ຂອງສະຖາບັນສື່ກາງດ້ານຫຼັກຊັບ ໄດ້ຮັບການພັດທະນາຢ່າງເປັນລະບົບ ເພື່ອໃຫ້ບໍລິການແກ່ຜູ້ລົງທຶນ ຕາມຂອບເຂດການດຳເນີນທຸລະກິດຂອງຕົນ ຢ່າງເຕັມສ່ວນ ແລະ ມີປະສິດທິພາບ ລວມທັງ ກະກຽມປູພື້ນຖານໄປສູ່ການໃຫ້ບໍລິການແບບຂ້າມແດນ;

6) ສ້າງເງື່ອນໄຂໃຫ້ວິສາຫະກິດ ທີ່ມີຄວາມພ້ອມ, ມີຜົນການດຳເນີນງານທີ່ດີ ແລະ ມີທ່າແຮງ ຈາກທຸກຂະແໜງການ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ຢ່າງໜ້ອຍ 5 ກິລະນີ ໃນປີ 2025 ແລະ 10 ກໍລະນີ ໃນປີ 2030 ຫຼື ລະດົມທຶນສະສົມໃຫ້ໄດ້ 15-18% ຂອງ GDP ໃນປີ 2025 ແລະ 18-20% ຂອງ GDP ໃນປີ 2030 ພ້ອມທັງ ສ້າງເງື່ອນໄຂການລະດົມທຶນຢູ່ ຕ່າງປະເທດ ຂອງວິສາຫະກິດ ພາກລັດ ແລະ ເອກະຊົນ ເຊັ່ນ: ການອະນຸຍາດໃຫ້ໄປລະດົມທຶນ ໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ ແລະ ມີກົນໄກຕິດຕາມ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ບໍລິສັດຈົດທະບຽນ;

7) ມວນຊົນ ແລະ ຜູ້ລົງທຶນປະເພດບຸກຄົນ ແລະ ນິຕິບຸກຄົນ ໄດ້ຮັບການພັດທະນາ ໃຫ້ມີຄວາມຮູ້ ແລະ ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນພື້ນຖານກ່ຽວກັບວຽກງານຕະຫຼາດທຶນ ແລະ ມີຄວາມສາມາດລົງທຶນໃນຕະຫຼາດທຶນຢ່າງມືອາຊີບ, ສ້າງນັກວິຊາຊີບທຸລະກິດຫຼັກຊັບແຕ່ລະປະເພດ ທີ່ມີຄຸນນະພາບ ແລະ ພຽງພໍກັບຄວາມຈຳເປັນຕົວຈິງຂອງຕະຫຼາດທຶນລາວ ແລະ ສາມາດປະຕິບັດພາລະບົດບາດຂອງຕົນຢ່າງມີປະສິດທິພາບກວ່າເກົ່າ ແລະ ຈັນຍາບັນສູງ, ໃຫ້ໄດ້ຮັບການຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ຊຸກຍູ້ການຈັດຕັ້ງຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 1 ຄັ້ງ ຕໍ່ປີ.

## 3. ຍຸດທະສາດ

ໂດຍອີງໃສ່ທິດທາງລວມ, ຄາດໝາຍລວມ ດັ່ງກ່າວ ໄດ້ກຳນົດຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ໄລຍະ 10 ປີ (2021-2030) ແຕ່ລະດ້ານ ເຊິ່ງປະກອບມີ 4 ຍຸດທະສາດຕົ້ນຕໍ ຄື: (1) ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ, (2) ສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ, (3) ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ ແລະ (4) ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ.

# ພາກທີ III

# ແຜນພັດທະນາຕະຫຼາດທຶນຂອງ ສປປ ລາວ ໄລຍະ 5 ປີ (2021-2025)

ໂດຍອີງໃສ່ 4 ຍຸດທະສາດພັດທະນາຕະຫຼາດທຶນ ຂອງ ສປປ ລາວ ໄລຍະ 10 ປີຕໍ່ໜ້າ (2021-2030) ແລະ ວິໃສທັດຮອດປີ 2035, ຄຄຊ ໄດ້ກຳນົດທິດທາງລວມ ແລະ ຄາດໝາຍລວມ ໃນການພັດທະນາຕະຫຼາດທຶນຂອງ ສປປ ລາວ ໄລຍະ 5 ປີ (2021-2025) ດັ່ງນີ້:

## I. ທິດທາງລວມ

1. ພັດທະນາອົງການຄຸ້ມຄອງວຽກງານຫຼັກຊັບ ໃຫ້ມີບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ ແລະ ມີລະບົບເຕັກໂນໂລຊີ ທີ່ຮັບປະກັນ ເພື່ອຄຸ້ມຄອງວຽກງານຫຼັກຊັບ ໃຫ້ສົມຄູ່ກັບການຂະຫຍາຍຕົວຂອງວຽກງານຫຼັກຊັບໃນແຕ່ລະໄລຍະ; ເພີ່ມທະວີການຮ່ວມມືກັບຕະຫຼາດທຶນສາກົນ ແລະ ພາກພື້ນ ເພື່ອພັດທະນາດ້ານບຸກຄະລາກອນ, ເປີດກວ້າງການຮ່ວມມືດ້ານທຸລະກິດຫຼັກຊັບ, ຂະຫຍາຍຖານການລະດົມທຶນ ແລະ ການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຢ່າງກວ້າງຂວາງ;
2. ສ້າງ ແລະ ປັບປຸງ ພື້ນຖານທາງດ້ານນິຕິກຳ ໃຫ້ຄົບຖ້ວນໂດຍພື້ນຖານ ພ້ອມທັງ ສອດຄ່ອງກັບສະພາບຂອງ ສປປ ລາວ ແລະ ຫຍັບເຂົ້າໃກ້ມາດຕະຖານສາກົນ ເທື່ອລະກ້າວ; ຄົ້ນຄວ້ານະໂຍບາຍອາກອນ ແລະ ບໍ່ແມ່ນອາກອນ ສຳລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ; ເພີ່ມທະວີຄວາມຮັບຜິດຊອບ ໃຫ້ອົງການຄຸ້ມຄອງພາກລັດທີ່ກ່ຽວຂ້ອງ ຊຸກຍູ້ທຸກທົ່ວໜ່ວຍວິສາຫະກິດ ປະຕິບັດລະບຽບການ ຢ່າງສະເໝີພາບກັນ;
3. ພັດທະນາພື້ນຖານໂຄງລ່າງຕະຫຼາດທຶນ (ຕະຫຼາດຫຼັກຊັບ ແລະ ສະຖາບັນສື່ກາງດ້ານຫຼັກຊັບ) ໃຫ້ຮັບປະກັນ ໃຫ້ແກ່ຜູ້ຕ້ອງການລະດົມທຶນ ແລະ ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ຢ່າງມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ເປັນຕົ້ນ: ກົນໄກ, ລະບຽບການ, ເຄື່ອງມື, ລະບົບເຕັກໂນໂລຊີ ແລະ ບຸກຄະລາກອນ;
4. ຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງ ໃຫ້ບໍລິສັດອອກຈຳໜ່າຍຫຼັກຊັບລະດົມທຶນຜ່ານຕະຫຼາດທຶນໃນຈຳນວນທີ່ເໝາະສົມ ໂດຍເນັ້ນຄຸນນະພາບເປັນຕົ້ນຕໍ, ຄົ້ນຄວ້າສ້າງຜະລິດຕະພັນຫຼັກຊັບ ໃຫ້ຫຼາກຫຼາຍ ເປັນຕົ້ນ ກອງທຶນປະເພດຕ່າງໆ ເພື່ອເພີ່ມຊ່ອງທາງໃນການລະດົມທຶນ ແລະ ການລົງທຶນ, ສ້າງຊ່ອງທາງ ໃຫ້ວິສາຫະກິດພາຍໃນປະເທດ ສາມາດລະດົມທຶນຈາກຕະຫຼາດຫຼັກຊັບຕ່າງປະເທດ ຢ່າງເໝາະສົມ; ບໍລິສັດຈົດທະບຽນໃນ ຕລຊລ ໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງເທື່ອລະກ້າວ ໂດຍຜ່ານກົນໄກການເປີດເຜີຍຂໍ້ມູນ, ການຄຸ້ມຄອງບໍລິຫານ ແລະ ການບັນຊີ;
5. ເພີ່ມທະວີການໂຄສະນາເຜີຍແຜ່ໃຫ້ຄວາມຮູ້ວຽກງານຕະຫຼາດທຶນ ແກ່ຜູ້ລົງທຶນ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານດັ່ງກ່າວໂດຍພື້ນຖານ ແລະ ສາມາດປະກອບສ່ວນລົງທຶນໃນຕະຫຼາດທຶນ; ສ້າງນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ສາມາດບໍລິການຜູ້ລົງທຶນຢ່າງມືອາຊີບ ແລະ ມີຈັນຍາບັນ.

## II. **ຄາດໝາຍລວມ**

1. ບຸກຄະລາກອນຂອງອົງການຄຸ້ມຄອງວຽກງານຫຼັກຊັບ ໄດ້ຮັບການຝຶກອົບຮົມໄລຍະສັ້ນ-ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂັ້ມແຂງທາງດ້ານວຽກງານວິຊາສະເພາະ, ການຄຸ້ມຄອງວຽກງານຫຼັກຊັບ, ມີຄວາມຮູ້ ແລະ ຊ່ຽວຊານສະເພາະດ້ານ ແລະ ພາສາຕ່າງປະເທດ ດ້ວຍທຶນຂອງຕົນເອງ, ທຶນສົມທົບຂອງ ທຫລ ແລະ ທຶນຊ່ວຍເຫຼືອລ້າ; ພັດທະນາ ແລະ ປັບປຸງເຕັກໂນໂລຊີ ເພື່ອຄຸ້ມຄອງວຽກງານຫຼັກຊັບ ໃຫ້ໄດ້ຢ່າງໜ້ອຍ 5 ລະບົບ ໃນປີ 2025; ອົງການຄຸ້ມຄອງວຽກງານຫຼັກຊັບ ສາມາດຍາດແຍ່ງການຮ່ວມມືໃນການພັດທະນາ ແລະ ຄຸ້ມຄອງວຽກງານຫຼັກຊັບ;
2. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ໃຫ້ໄດ້ຢ່າງໜ້ອຍ 20 ສະບັບ ໂດຍໃຫ້ຄວບຄຸມທຸກບັນຫາກ່ຽວກັບວຽກງານຫຼັກຊັບ ເພື່ອເອື້ອອຳນວຍໃຫ້ແກ່ ການລະດົມທຶນ ແລະ ການລົງທຶນ ໃນຕະຫຼາດທຶນທັງພາຍໃນ ແລະ ຕ່າງປະເທດ ໃນແຕ່ລະໄລຍະ; ຄົ້ນຄວ້ານະໂຍບາຍ ອາກອນ ແລະ ບໍ່ແມ່ນອາກອນ ສຳລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ ເປັນຕົ້ນ ນະໂຍບາຍອາກອນລາຍໄດ້ສຳລັບບໍລິສັດຈົດທະບຽນ, ນະໂຍບາຍອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມ ສຳລັບກອງທຶນ ເພື່ອການລົງທຶນໃນບໍລິສັດ (PE Fund), ທຸລະກິດຮ່ວມລົງທຶນ (Venture Capital Fund) ແລະ ຜູ້ລົງທຶນ, ນະໂຍບາຍອາກອນສຳລັບບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ລົງທຶນໃນຮຸ້ນກູ້, ນະໂຍບາຍການປະຕິຮູບລັດວິສາຫະກິດ ແລະ ນະໂຍບາຍດຶງດູດບັນດາໂຄງການລົງທຶນໂດຍກົງຈາກຕ່າງປະເທດ ເພື່ອລະດົມທຶນຜ່ານຕະຫຼາດທຶນ, ຄວາມຄ່ອງຕົວຂອງການແລກປ່ຽນເງິນຕາ ແລະ ຄວາມຜັນຜວນຂອງຄ່າເງິນກີບໃນການລົງທຶນໃນຫຼັກຊັບ ແລະ ນະໂຍບາຍອັດຕາດອກເບ້ຍ ເພື່ອຊຸກຍູ້ການພັດທະນາຕະຫຼາດພັນທະບັດ ແລະ ນະໂຍບາຍອື່ນໆ;
3. ເພີ່ມທະວີການຄຸ້ມຄອງຂອງພາກລັດ ຕໍ່ບໍລິສັດທີ່ຢູ່ນອກຕະຫຼາດຫຼັກຊັບ ເປັນຕົ້ນແມ່ນ ການຖືບັນຊີ, ການແຈ້ງເສຍພາສີ ແລະ ອາກອນ, ການສະກັດກັ້ນການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ;
4. ລະບົບເຕັກໂນໂລຊີຂອງຕະຫຼາດຫຼັກຊັບ ໄດ້ຮັບການພັດທະນາ ໃຫ້ທັນສະໄໝ ແລະ ປອດໄພ, ມີຄວາມເຂັ້ມແຂງຮອບດ້ານ, ສາມາດໃຫ້ບໍລິການຊື້-ຂາຍຫຼັກຊັບ ແລະ ຮັບຝາກຫຼັກຊັບໄດ້ຢ່າງຄ່ອງຕົວ; ຫັນຮູບແບບການເຄື່ອນໄຫວຂອງ ຕະຫຼາດຫຼັກຊັບ ໃຫ້ເໝາະສົມກັບສະພາບການຂະຫຍາຍຕົວຂອງ ຕະຫຼາດຫຼັກຊັບ ເພື່ອກາຍເປັນອົງການຄຸ້ມຄອງຕົນເອງ (Self Regulatory Organization: SRO) ໃຫ້ມີຄວາມຄືບໜ້າ; ຄົ້ນຄວ້າປັບປຸງເງື່ອນໄຂການຈົດທະບຽນໃນຕະຫຼາດຫຼັກຊັບໃຫ້ຄົບຖ້ວນ ແລະ ຮັດກຸມ ແລະ ຄົ້ນຄວ້າ ສ້າງຕະຫຼາດຮອງ ຫຼື ກະດານຮອງ ເພື່ອຮອງຮັບຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນ ຫຼື ຂຶ້ນທະບຽນ ເພື່ອຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບ ແລະ ການຖອນຈົດທະບຽນຂອງບໍລິສັດຈົດທະບຽນ; ສ້າງກົນໄກ ແລະ ເງື່ອນໄຂເພື່ອຮອງຮັບ ການຖອນ ແລະ ຫຼັງຖອນ ຈົດທະບຽນຮຸ້ນ ອອກຈາກ ຕລຊລ; ສູ້ຊົນໃຫ້ມີມູນຄ່າການຊື້-ຂາຍໃນຕະຫຼາດຫຼັກຊັບເພີ່ມຂຶ້ນ ຢ່າງໜ້ອຍ 5% ຕໍ່ປີ;

5. ສະຖາບັນສື່ກາງດ້ານຫຼັກຊັບ ໄດ້ຮັບການພັດທະນາໃຫ້ມີຄວາມເຂັ້ມແຂງ, ສາມາດໃຫ້ບໍລິການແກ່ຜູ້ລົງທຶນ ຕາມຂອບເຂດການດໍາເນີນທຸລະກິດຂອງຕົນ ຢ່າງມີປະສິດທິພາບ, ໂປ່ງໃສ ແລະ ປອດໄພ, ມີນັກວິຊາຊີບທຸລະກິດຫຼັກຊັບທີ່ຈໍາເປັນ ພຽງພໍກັບຄວາມຕ້ອງການຕົວຈິງ ແລະ ມີບັນຊີຫຼັກຊັບ ເພີ່ມຂຶ້ນຢ່າງໜ້ອຍ 660 ບັນຊີ ຕໍ່ປີ ແລະ ບັນຊີຊື້ ຂາຍພັນທະບັດລັດຖະບານ ເພີ່ມຂຶ້ນ ຢ່າງໜ້ອຍ 550 ບັນຊີ ຕໍ່ປີ;
6. ສ້າງ ແລະ ປັບປຸງກົນໄກ, ລະບຽບການ ແລະ ຜະລິດຕະພັນຫຼັກຊັບ ໃນການລະດົມທຶນ ເພື່ອໃຫ້ພາກລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຕະຫຼາດທຶນ ໄດ້ຢ່າງຄ່ອງຕົວ ຢ່າງໜ້ອຍ 5 ກໍລະນີ ໃນປີ 2025 ຫຼື ລະດົມທຶນສະສົມໃຫ້ໄດ້ 15-18% ຂອງ GDP ໃນປີ 2025 ພ້ອມທັງ ສ້າງຊ່ອງທາງ ໃຫ້ວິສາຫະກິດພາຍໃນປະເທດ ສາມາດລະດົມທຶນຈາກຕະຫຼາດຫຼັກຊັບຕ່າງປະເທດ ຢ່າງເໝາະສົມ ແລະ ຜ່ານກົນໄກດັ່ງກ່າວ ເຮັດໃຫ້ວິສາຫະກິດຈາກຫຼາຍພາກສ່ວນ ສາມາດປັບປຸງຄວາມເຂັ້ມແຂງຂອງຕົນ; ເພີ່ມທະວີການຕິດຕາມການເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນ, ສ້າງກົນໄກການຈັດຕັ້ງປະຕິບັດ ແລະ ການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ຕາມບັດປະເມີນການຄຸ້ມຄອງບໍລິຫານສໍາລັບບໍລິສັດຈົດທະບຽນ (Lao CG Scorecard), ສ້າງແຜນດໍາເນີນງານ ແລະ ແຜນຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ;
7. ຜູ້ລົງທຶນ ໄດ້ຮັບການພັດທະນາໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນ ແລະ ມີຄວາມສາມາດ ລົງທຶນໃນຕະຫຼາດທຶນຢ່າງມືອາຊີບ ໂດຍການຈັດເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຫຼັກຊັບ ໃຫ້ໄດ້ຢ່າງໜ້ອຍ 3 ຄັ້ງ ຕໍ່ປີ ແລະ ມີຜູ້ເຂົ້າຮ່ວມ ຢ່າງໜ້ອຍ 200 ເທື່ອຄົນ ຕໍ່ປີ; ສ້າງນັກວິຊາຊີບທຸລະກິດຫຼັກຊັບແຕ່ລະປະເພດ ທີ່ມີຄຸນນະພາບ ແລະ ພຽງພໍກັບຄວາມຈໍາເປັນຕົວຈິງ ຂອງຕະຫຼາດທຶນລາວ ແລະ ສາມາດປະຕິບັດພາລະບົດບາດຂອງຕົນຢ່າງມີປະສິດທິພາບກວ່າເກົ່າ ແລະ ຈັນຍາບັນສູງ, ໃຫ້ໄດ້ຮັບການຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ຊຸກຍູ້ການຈັດຕັ້ງຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 1 ຄັ້ງ ຕໍ່ປີ.

ເພື່ອຈັດຕັ້ງຜັນຂະຫຍາຍ ແຜນພັດທະນາຕະຫຼາດທຶນລາວ ໄລຍະ 5 ປີ (2021-2025) ໃຫ້ປາກົດຜົນເປັນຈິງ, ຄຄຊ ໄດ້ຜັນຂະຫຍາຍແຜນດັ່ງກ່າວ ເປັນແຜນງານ ແລະ ໂຄງການ ເຊິ່ງປະກອບມີ IV ຍຸດທະສາດ, 5 ແຜນງານ 10 ໂຄງການ 42 ແຜນວຽກ ດັ່ງລາຍລະອຽດລຸ່ມນີ້:

**ຍຸດທະສາດ ທີ I: ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ (2 ແຜນງານ)**

ສຸມໃສ່ພັດທະນາ ຄຄຊ ແລະ ສຄຄຊ ໃຫ້ເປັນອົງການຄຸ້ມຄອງ ວຽກງານຫຼັກຊັບ ທີ່ມີຄວາມໜັກແໜ້ນເຂັ້ມແຂງ ທາງດ້ານກົງຈັກການຈັດຕັ້ງ, ບຸກຄະລາກອນ, ເຄື່ອງມື ແລະ ກົນໄກການຄຸ້ມຄອງວຽກງານຫຼັກຊັບ ລວມທັງລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ອາຄານສຳນັກງານ ເພື່ອໃຫ້ສາມາດເຄື່ອນໄຫວຢ່າງມີປະສິດທິພາບສູງ ລວມເຖິງການຮ່ວມມືກັບບັນດາປະເທດ ທັງພາກພື້ນ ແລະ ສາກົນ ເພື່ອຍາດແຍ່ງເອົາບົດຮຽນມາຜັນຂະຫຍາຍເຂົ້າໃນການພັດທະນາວຽກງານຕະຫຼາດທຶນ ຂອງ ສປປ ລາວ ແລະ ໃຫ້ສາມາດເຊື່ອມໂຍງ ແລະ ເຊື່ອມຈອດກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນເທື່ອລະກ້າວ.

ນອກນັ້ນ, ຕ້ອງສຸມໃສ່ ສ້າງ ແລະ ປັບປຸງ ນິຕິກຳກ່ຽວກັບການເຄື່ອນໄຫວວຽກງານຫຼັກຊັບ ເພື່ອຮັບປະກັນໃຫ້ການເຄື່ອນໄຫວດັ່ງກ່າວ ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ພ້ອມທັງ ຮັບປະກັນພາລະບົດບາດການຄຸ້ມຄອງຂອງລັດ, ຫຼັກການເຄື່ອນໄຫວ, ການປັບປຸງ ແລະ ສ້າງນິຕິກຳ ຕ້ອງສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລັດ, ວຽກງານຫຼັກຊັບສາກົນ ແລະ ສະພາບເງື່ອນໄຂຕົວຈິງຂອງ ສປປ ລາວ.

**ແຜນງານທີ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ (3 ໂຄງການ)**

- **ທິດທາງ:**

- ສ້າງຄວາມເຂັ້ມແຂງດ້ານກົນໄກ ແລະ ເຄື່ອງມື ໃນການຄຸ້ມຄອງວຽກງານຫຼັກຊັບ ໃຫ້ທັນສະໄໝ, ຮັດກຸມ, ທົ່ວເຖິງ ແລະ ທັນເວລາ;
- ສ້າງບຸກຄະລາກອນຂອງ ສຄຄຊ ໃຫ້ມີຄວາມເຂັ້ມແຂງ, ມີຄຸນນະພາບ ແລະ ມີການພັດທະນາຢ່າງຕໍ່ເນື່ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດການຄຸ້ມຄອງ ແລະ ພັດທະນາວຽກງານຫຼັກຊັບ;
- ພັດທະນາວຽກງານຫຼັກຊັບ ໃຫ້ຮັບປະກັນການຄຸ້ມຄອງຢ່າງມີປະສິດທິຜົນ ໂດຍນຳໃຊ້ລະບົບເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ແລະ ເຄື່ອງມືຄຸ້ມຄອງທີ່ເໝາະສົມ;
- ເພີ່ມທະວີການຮ່ວມມືໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງເອົາບົດຮຽນມາຜັນຂະຫຍາຍເຂົ້າໃນການພັດທະນາວຽກງານຕະຫຼາດທຶນ ຂອງ ສປປ ລາວ ແລະ ປູພື້ນຖານສຳລັບການເຊື່ອມໂຍງ ແລະ ເຊື່ອມຈອດກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນເທື່ອລະກ້າວ.

- **ຄາດໝາຍ:**

- ຄົ້ນຄວ້າການປັບປຸງລະບົບຕິດຕາມກວດກາ ຕລຊລ, ລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຫຼັກຊັບ ລວມທັງ ລະບົບຕິດຕາມ, ກວດກາ ແລະ ປະເມີນວຽກງານການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML) ສຳລັບບໍລິສັດຫຼັກຊັບ ແລະ ລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຈົດທະບຽນ;
- ກໍ່ສ້າງບຸກຄະລາກອນ ໂດຍການນຳສົ່ງພະນັກງານເຂົ້າຮ່ວມຝຶກອົບຮົມ ແລະ ສຳມະນາ ໄລຍະສັ້ນ ແລະ ຍົກລະດັບການສຶກສາວິຊາສະເພາະໄລຍະຍາວ ພາຍໃນປະເທດໃຫ້ໄດ້ ຢ່າງໜ້ອຍ 50 ເທື່ອຄົນ ແລະ ຢູ່ຕ່າງປະເທດ

ຢ່າງໜ້ອຍ 100 ເທື່ອຄົນ ຜ່ານການເຂົ້າຮ່ວມກັບທີ່ ຫຼື ອອນລາຍ ເພື່ອສ້າງຄວາມເຂັ້ມແຂງທາງດ້ານວຽກງານວິຊາສະເພາະ, ການຄຸ້ມຄອງວຽກງານຫຼັກຊັບ, ຍົກລະດັບຄວາມຮູ້ ຄວາມສາມາດ ຄວາມຊ່ຽວຊານ ທາງດ້ານວິຊາການຂອງພະນັກງານຄຸ້ມຄອງໃຫ້ທຽບເທົ່າມາດຕະຖານສາກົນເທື່ອລະກ້າວ ເປັນຕົ້ນດ້ານບັນຊີ, ເສດຖະສາດ, ບໍລິຫານທຸລະກິດ, ການເງິນ-ການທະນາຄານ, ການປະເມີນມູນຄ່າຊັບສິນ, ການສືບສວນ-ສອບສວນວຽກງານຫຼັກຊັບ, ວຽກງານໄອທີ, ພາສາຕ່າງປະເທດ ແລະ ວຽກງານຕ່າງໆທີ່ຕິດພັນກັບຫຼັກຊັບ ແລະ ອື່ນໆ;

- ກໍ່ສ້າງຊ່ຽວຊານສະເພາະດ້ານ ໂດຍການນໍາສົ່ງພະນັກງານເຂົ້າຮ່ວມຫຼັກສູດວິຊາຊີບທີ່ກ່ຽວຂ້ອງ ເປັນຕົ້ນຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ, ນັກວິຊາຊີບດ້ານບັນຊີ ແລະ ກວດສອບ, ນັກວິຊາຊີບດ້ານການປະເມີນມູນຄ່າຊັບສິນ, ຊ່ຽວຊານດ້ານໄອທີ ແລະ ການອອກແບບ ແລະ ຕັດຕໍ່ ຢ່າງໜ້ອຍ 22 ເທື່ອຄົນ.
- ພັດທະນາລະບົບເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ໃຫ້ໄດ້ຢ່າງໜ້ອຍ 5 ລະບົບ;
- ສືບຕໍ່ເພີ່ມທະວີການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງເອົາການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ, ແລກປ່ຽນຂໍ້ມູນຂ່າວສານ ແລະ ສ້າງເງື່ອນໄຂເພື່ອເຊື່ອມໂຍງຕະຫຼາດທຶນຂອງ ສປປ ລາວ ເຂົ້າກັບຕະຫຼາດທຶນພາກພື້ນ ແລະ ສາກົນແບບບຸກທະລຸ ເປັນຕົ້ນແມ່ນ ການກະກຽມເງື່ອນໄຂເພື່ອເຂົ້າເປັນສະມາຊິກສົມບູນຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO).

- **ໂຄງການ:**

1) ສ້າງຄວາມເຂັ້ມແຂງ ດ້ານກົນໄກ ແລະ ເຄື່ອງມື ໃນການຄຸ້ມຄອງວຽກງານຫຼັກຊັບ: ດ້ວຍການຄົ້ນຄວ້າການປັບປຸງລະບົບຕິດຕາມກວດກາ ຕລຊລ, ລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຫຼັກຊັບ ລວມທັງ ລະບົບຕິດຕາມ, ກວດກາ ແລະ ປະເມີນວຽກງານການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML) ສໍາລັບບໍລິສັດຫຼັກຊັບ ແລະ ລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຈົດທະບຽນ; ສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄະລາກອນ ຂອງ ສຄຄຊ;
2) ພັດທະນາລະບົບເຕັກໂນໂລຊີຂໍ້ມູນຂ່າວສານ: ດ້ວຍການຄົ້ນຄວ້າ ແລະ ສ້າງລະບົບເຕັກໂນໂລຊີ ຂໍ້ມູນຂ່າວສານເພື່ອເອື້ອອໍານວຍໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບຂອງ ສຄຄຊ
3) ຮ່ວມມືສາກົນ: ດ້ວຍການກະກຽມເງື່ອນໄຂການເຂົ້າເປັນສະມາຊິກສົມບູນຂອງອົງການ IOSCO, ປະຕິບັດວຽກງານຮ່ວມມືກັບສາກົນ ໃນຮູບແບບ ສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ, ທຶນຮອນ, ຖອດຖອນບົດຮຽນ, ກໍ່ສ້າງບຸກຄະລາກອນ ແລະ ແລກປ່ຽນຂໍ້ມູນຂ່າວສານ.

**ແຜນງານທີ 2: ສ້າງ ແລະ ປັບປຸງນິຕິກໍາ ແລະ ນະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ (3 ໂຄງການ)**

- **ທິດທາງ:**

- ສ້າງ ແລະ ປັບປຸງນິຕິກໍາໃຫ້ເປັນລະບົບຄົບຊຸດເທື່ອລະກ້າວ ເພື່ອຮັບປະກັນເຮັດໃຫ້ການເຄື່ອນໄຫວຄຸ້ມຄອງວຽກງານຫຼັກຊັບ ໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທໍາ ພ້ອມທັງຮັບປະກັນພາລະບົດບາດການຄຸ້ມຄອງ

ຂອງລັດ, ຫຼັກການເຄື່ອນໄຫວ, ແລະ ຮັບປະກັນໃຫ້ການປັບປຸງ ແລະ ສ້າງນິຕິກຳ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລັດ, ວຽກງານຫຼັກຊັບສາກົນ ແລະ ສະພາບເງື່ອນໄຂຕົວຈິງຂອງ ສປປ ລາວ;

- ຄົ້ນຄວ້າ ນະໂຍບາຍ ອາກອນ ແລະ ບໍ່ແມ່ນອາກອນ ສຳລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ;
- ເພີ່ມທະວີຄວາມຮັບຜິດຊອບ ໃຫ້ອົງການຄຸ້ມຄອງພາກລັດທີ່ກ່ຽວຂ້ອງ ຊຸກຍູ້ທຸກຫົວໜ່ວຍວິສາຫະກິດປະຕິບັດລະບຽບການ ຢ່າງສະເໝີພາບກັນ ເປັນຕົ້ນ ການຖືບັນຊີ, ການແຈ້ງເສຍພາສີ ແລະ ອາກອນ, ການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບການ ລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ມີຄວາມໜັກແໜ້ນເຂັ້ມແຂງເທື່ອລະກ້າວ;
- ເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບວຽກງານຫຼັກຊັບໄດ້ຮັບການແຕ່ງຕັ້ງ ແລະ ເຄື່ອນໄຫວວຽກງານຕາມພາລະບົດບາດ.

- **ຄາດໝາຍ:**

- ສ້າງ ແລະ ປັບປຸງນິຕິກຳ ໃຕ້ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ໃຫ້ໄດ້ຢ່າງໜ້ອຍ 20 ສະບັບ;
- ຄົ້ນຄວ້ານະໂຍບາຍ ອາກອນ ແລະ ບໍ່ແມ່ນອາກອນ ສຳລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ ເພື່ອສະເໜີລັດຖະບານພິຈາລະນາ ເປັນຕົ້ນ: ນະໂຍບາຍອາກອນລາຍໄດ້ສຳລັບບໍລິສັດຈົດທະບຽນ, ນະໂຍບາຍອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມ ສຳລັບກອງທຶນ ເພື່ອການລົງທຶນໃນບໍລິສັດ (PE Fund), ທຸລະກິດຮ່ວມລົງທຶນ (Venture Capital Fund) ແລະ ຜູ້ລົງທຶນ, ນະໂຍບາຍອາກອນສຳລັບບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ລົງທຶນໃນຮຸ້ນກູ້, ນະໂຍບາຍການປະຕິຮູບລັດວິສາຫະກິດ ແລະ ນະໂຍບາຍດຶງດູດບັນດາໂຄງການລົງທຶນໂດຍກົງຈາກຕ່າງປະເທດ ເພື່ອລະດົມທຶນຜ່ານຕະຫຼາດທຶນ, ການຄຸ້ມຄອງເງິນຕາໃນການລົງທຶນໃນຫຼັກຊັບ ແລະ ນະໂຍບາຍອັດຕາດອກເບ້ຍ ເພື່ອຊຸກຍູ້ການພັດທະນາຕະຫຼາດພັນທະບັດ ແລະ ນະໂຍບາຍອື່ນໆ;
- ອົງການຄຸ້ມຄອງພາກລັດທີ່ກ່ຽວຂ້ອງ ເຂັ້ມງວດ ຊຸກຍູ້ ການຖືບັນຊີ, ການປະຕິບັດມາດຕະການແກ້ໄຂ ແລະ ອັດຊ່ອງຫວ່າງການແຈ້ງເສຍພາສີ, ອາກອນ ແລະ ການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບການ ລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ;
- ຄົ້ນຄວ້າສ້າງມາດຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບວຽກງານຫຼັກຊັບ.

- **ໂຄງການ:**

1) ສ້າງ ແລະ ປັບປຸງນິຕິກຳກ່ຽວກັບວຽກງານຫຼັກຊັບ: ດ້ວຍການສ້າງ ແລະ ປັບປຸງນິຕິກຳ ໃຕ້ກົດໝາຍວ່າດ້ວຍ ຫຼັກຊັບ ໃຫ້ມີຄວາມຄົບຖ້ວນສົມບູນເທື່ອລະກ້າວ;
2) ນະໂຍບາຍມະຫາພາກກ່ຽວກັບວຽກງານຫຼັກຊັບ: ດ້ວຍການຄົ້ນຄວ້ານະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ ແລະ ຊຸກຍູ້ການແກ້ໄຂຂໍ້ຄົງຄ້າງດ້ານມະຫາພາກ ທີ່ເປັນສິ່ງກີດຂວາງການພັດທະນາຕະຫຼາດທຶນ;
3) ສືບສວນ-ສອບສວນ: ດ້ວຍການຄົ້ນຄວ້າມາດຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບວຽກງານຫຼັກຊັບ.

**ຍຸດທະສາດ ທີ II: ສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ (1 ແຜນງານ)**

ສຸມໃສ່ສ້າງ ຕລຊລ ໃຫ້ມີຄວາມເຂັ້ມແຂງ ແລະ ມີຈຸດສຸມ, ແຍກພາລະບົດບາດຂອງ ຕລຊລ ອອກຈາກ ສຄຄຊ ຢ່າງຈະແຈ້ງ ເພື່ອໃຫ້ສອດຄ່ອງກັບຫຼັກການສາກົນ ພ້ອມທັງ ສ້າງ ແລະ ພັດທະນາສະຖາບັນສີ່ກາງດ້ານຫຼັກຊັບທາງດ້ານຈຳນວນ ໄປຄຽງຄູ່ກັບການຮັບປະກັນຄຸນນະພາບໃນການເຄື່ອນໄຫວທຸລະກິດ.

**ແຜນງານທີ 3: ສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ (2 ໂຄງການ)**

- **ທິດທາງ:**
- ປັບປຸງພາລະບົດບາດຂອງ ຕລຊລ ໃຫ້ມີຄວາມຈະແຈ້ງ ສອດຄ່ອງກັບນິຕິກຳພາຍໃນປະເທດ ແລະ ຫຼັກການສາກົນ;
- ພັດທະນາ ຕລຊລ ໃຫ້ມີສິ່ງອຳນວຍຄວາມສະດວກ ໃຫ້ແກ່ການລະດົມທຶນ ແລະ ການລົງທຶນ ຢ່າງມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ ເປັນຕົ້ນ: ກົນໄກ, ລະບຽບການ, ເຄື່ອງມື ແລະ ລະບົບເຕັກໂນໂລຊີ;
- ຊຸກຍູ້ສົ່ງເສີມສະຖາບັນສີ່ກາງດ້ານຫຼັກຊັບ ໃຫ້ມີການຄຸ້ມຄອງບໍລິຫານພາຍໃນ ຢ່າງມີປະສິດທິພາບ, ມີການເຄື່ອນໄຫວຕາມພາລະບົດບາດຂອງຕົນ ຢ່າງເຂັ້ມແຂງ, ເຕັມສ່ວນ ແລະ ມີບຸກຄະລາກອນທີ່ມີປະສົບການ ແລະ ຈັນຍາບັນດ້ານວິຊາຊີບສູງຂຶ້ນ, ມີຄຸນນະພາບການໃຫ້ບໍລິການຢ່າງມືອາຊີບ ເພື່ອຮອງຮັບການໃຫ້ບໍລິການຕາມຂອບເຂດການເຄື່ອນໄຫວທຸລະກິດຂອງຕົນ;
- ຊຸກຍູ້ການສ້າງຕັ້ງສະຖາບັນສີ່ກາງດ້ານຫຼັກຊັບໃຫ້ມີຈຳນວນເພີ່ມຂຶ້ນ ແລະ ການຂະຫຍາຍຂອບເຂດການດຳເນີນທຸລະກິດ ແລະ ການບໍລິການຂອງບາງປະເພດສະຖາບັນສີ່ກາງດ້ານຫຼັກຊັບ;
- ຂະຫຍາຍຖານລູກຄ້າຂອງສະຖາບັນສີ່ກາງດ້ານຫຼັກຊັບທີ່ມີຢູ່ແລ້ວ ໃຫ້ກວ້າງຂວາງຂຶ້ນ ແລະ ເພີ່ມຊ່ອງທາງອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ;
- ສ້າງສະຖາບັນສີ່ກາງດ້ານຫຼັກຊັບ ທີ່ບໍ່ທັນໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ໃຫ້ຄົບຖ້ວນຕາມລະບຽບກຳນົດ.
- **ຄາດໝາຍ:**
- ແຍກພາລະບົດບາດ ແລະ ໜ້າທີ່ ລະຫວ່າງ ສຄຄຊ ແລະ ຕລຊລ ໃຫ້ມີຄວາມລະອຽດຈະແຈ້ງຍິ່ງຂຶ້ນ;
- ຄົ້ນຄວ້າການປັບປຸງໂຄງສ້າງຜູ້ຖືຮຸ້ນຂອງ ຕລຊລ ແລະ ການສ້າງຕັ້ງຕະຫຼາດໃໝ່, ປັບປຸງກົນໄກການປະຕິບັດວຽກງານ ໃຫ້ມີຄວາມຄ່ອງຕົວ, ເຂັ້ມແຂງ ແລະ ຄົບຖ້ວນ ຕາມສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
- ຄົ້ນຄວ້າປັບປຸງ ແລະ ພັດທະນາລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານຂອງ ຕລຊລ ໃຫ້ເປັນລະບົບຄົບຊຸດ, ຮອງຮັບຜະລິດຕະພັນໃໝ່ ແລະ ສາມາດເຊື່ອມຈອດກັບພາກສ່ວນກ່ຽວຂ້ອງ ພ້ອມທັງ ຄົ້ນຄວ້າກຳນົດຮູບແບບສູນຮັບຝາກຫຼັກຊັບຢູ່ ສປປ ລາວ;

- ຄົ້ນຄວ້າ ແລະ ກະກຽມເງື່ອນໄຂ ເພື່ອກ້າວເປັນອົງກອນຄຸ້ມຄອງຕົນເອງ (Self Regilatory Organization: SRO) ແລະ ສ້າງນິຕິກຳກ່ຽວຂ້ອງໃນອະນາຄົດ ໃຫ້ມີຄວາມຄືບໜ້າ ເພື່ອສາມາດບັນລຸໄດ້ໃນປີ 2030;
- ຄົ້ນຄວ້າປັບປຸງເງື່ອນໄຂການຈົດທະບຽນໃນຕະຫຼາດຫຼັກຊັບໃຫ້ຄົບຖ້ວນ ແລະ ຮັດກຸມ ແລະ ຄົ້ນຄວ້າ ສ້າງຕະຫຼາດຮອງ ຫຼື ກະດານຮອງ ເພື່ອຮອງຮັບຫົວໜ່ວຍທຸລະກິດຂະໜາດນ້ອຍ ແລະ ກາງ ໃນການຈົດທະບຽນ ຫຼື ຂຶ້ນທະບຽນ ເພື່ອຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບ ແລະ ການຖອນຈົດທະບຽນຂອງບໍລິສັດຈົດທະບຽນ;
- ສ້າງກົນໄກ ແລະ ເງື່ອນໄຂເພື່ອຮອງຮັບການຖອນ ແລະ ຫຼັງຖອນຈົດທະບຽນຮຸ້ນ ອອກຈາກ ຕລຊລ;
- ສູ້ຊົນໃຫ້ມີມູນຄ່າການຊື້-ຂາຍໃນຕະຫຼາດຫຼັກຊັບເພີ່ມຂຶ້ນ ຢ່າງໜ້ອຍ 5% ຕໍ່ປີ;
- ຄົ້ນຄວ້າສ້າງ ແລະ ປັບປຸງ ລະບຽບການ ລວມທັງ ລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານຂອງບໍລິສັດຫຼັກຊັບ ແລະ ສະຖາບັນສີກາງດ້ານຫຼັກຊັບອື່ນ ເພື່ອຮອງຮັບການເຄື່ອນໄຫວທຸລະກິດຂອງຕົນ ໃຫ້ມີຄວາມຄ່ອງຕົວ;
- ຊຸກຍູ້ສະຖາບັນສີກາງດ້ານຫຼັກຊັບທີ່ມີຢູ່ແລ້ວ ປະຕິບັດບົດບາດຂອງຕົນຢ່າງເຕັມສ່ວນ ແລະ ເລິກເຊິ່ງເຖິງຖອງແທ້, ຄຸນນະພາບການໃຫ້ບໍລິການໃຫ້ດີຂຶ້ນ. ພ້ອມນີ້, ສະຖາບັນສີກາງດ້ານຫຼັກຊັບ ໃຫ້ມີຈຳນວນເພີ່ມຂຶ້ນ, ຄົ້ນຄວ້າຂະຫຍາຍຂອບເຂດການດຳເນີນທຸລະກິດ ຫຼື ບໍລິການຂອງບາງປະເພດສະຖາບັນສີກາງດ້ານຫຼັກຊັບ;
- ຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນ ຂອງສະຖາບັນສີກາງດ້ານຫຼັກຊັບ ເປັນຕົ້ນແມ່ນ ການສົ່ງພະນັກງານໄປຝຶກອົບຮົມວຽກງານສະເພາະດ້ານ ກ່ຽວກັບວຽກງານຕະຫຼາດທຶນ ທັງພາຍໃນ ແລະ ຕ່າງປະເທດ ແລະ ເຂົ້າຮ່ວມຝຶກອົບຮົມຫຼັກສູດນັກວິຊາຊີບຫຼັກຊັບ ທີ່ຈັດຂຶ້ນໃນແຕ່ລະໄລຍະ;
- ພັດທະນາສະຖາບັນສີກາງດ້ານຫຼັກຊັບ ໃຫ້ມີການຄຸ້ມຄອງບໍລິຫານພາຍໃນ ຢ່າງມີປະສິດທິພາບ ແລະ ເຂັ້ມແຂງ ເປັນຕົ້ນ ຮັບປະກັນຄວາມສະຖຽນຂອງລະບົບການໃຫ້ບໍລິການຂອງຕົນ, ສ້າງລະບຽບ ແລະ ຄູ່ມືປະຕິບັດງານພາຍໃນ ໃຫ້ຄົບຖ້ວນ;
- ຄົ້ນຄວ້າຂະຫຍາຍຖານລູກຄ້າຂອງສະຖາບັນສີກາງດ້ານຫຼັກຊັບທີ່ມີຢູ່ແລ້ວ ໃຫ້ກວ້າງຂວາງຂຶ້ນ ແລະ ສ້າງຊ່ອງທາງອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນຂອງບໍລິສັດຫຼັກຊັບ ເພີ່ມຂຶ້ນ ເປັນຕົ້ນ ການບໍລິການສິນເຊື່ອເພື່ອຊື້ຫຼັກຊັບ (Margin Trading), ຢືມຫຼັກຊັບເພື່ອຂາຍ (Short Sell ); ການກູ້ຢືມໂດຍໃຊ້ຫຼັກຊັບຄ້ຳປະກັນ (Securities Borrowing and Lending), ລະບົບເຊື່ອມຕໍ່ການຊຳລະເງິນກັບຫຼາຍທະນາຄານ (Multiple Bank Link), ລະບົບສົ່ງຄຳສັ່ງຊື້-ຂາຍຮຸ້ນທີ່ເຊື່ອມຕໍ່ກັບ ຕລຊລ (Ledger System), ລະບົບການຊື້ຂາຍຮຸ້ນເພື່ອສ້າງສະພາບໃຫ້ແກ່ຮຸ້ນຂອງບໍລິສັດຈົດທະບຽນ (Liquidity Provider), ລະບົບການສ້າງສະພາບຄ່ອງໃຫ້ແກ່ຕະຫຼາດຫຼັກຊັບຂອງບໍລິສັດຫຼັກຊັບ (Maket Maker), ລະບົບຮັບຄຳສັ່ງຊື້-ຂາຍຮຸ້ນຜ່ານມືຖື (mobile trading app);
- ຊຸກຍູ້ສ້າງສະຖາບັນສີກາງດ້ານຫຼັກຊັບໃໝ່ ທີ່ບໍ່ທັນມີການສ້າງຕັ້ງເທື່ອ ມີການສ້າງຕັ້ງຂຶ້ນ ຢ່າງໜ້ອຍ 1-2 ແຫ່ງ;

- ຊຸກຍູ້ໃຫ້ມີຜູ້ຄຸ້ມຄອງຫຼັກ ບໍລິສັດປະເມີນມູນຄ່າຊັບສິນ ແລະ ຄົ້ນຄວ້າຊຸກຍູ້ຍົກລະດັບກິດຈະການປະເມີນມູນຄ່າຊັບສິນ ຈາກ ກິດຈະການທົ່ວໄປ ເປັນກິດຈະການໃນບັນຊີຄວບຄຸມ ແລະ ແຍກເປັນກິດຈະການຍ່ອຍ ອີງຕາມປະເພດຊັບສິນ;
- ຊຸກຍູ້ການສ້າງຕັ້ງສະມາຄົມບໍລິສັດປະເມີນມູນຄ່າຊັບສິນ;
- ຊຸກຍູ້ບໍລິສັດຫຼັກຊັບ ຊອກຫາລູກຄ້າໃຫ້ກວ້າງຂວາງຂຶ້ນຕື່ມ ດ້ວຍການໂຄສະນາເຜີຍແຜ່ກັບທີ່ ໃຫ້ໄດ້ຢ່າງໜ້ອຍ 30 ຄັ້ງ ຕໍ່ປີ ແລະ ບັນຊີຫຼັກຊັບ ເພີ່ມຂຶ້ນຢ່າງໜ້ອຍ 660 ບັນຊີ ຕໍ່ປີ ແລະ ບັນຊີຊື້ ຂາຍພັນທະບັດລັດຖະບານ ເພີ່ມຂຶ້ນ ຢ່າງໜ້ອຍ 550 ບັນຊີ ຕໍ່ປີ.

- **ໂຄງການ:**

1) ພັດທະນາຕະຫຼາດຫຼັກຊັບ: ດ້ວຍການສ້າງຄວາມເຂັ້ມແຂງຂອງ ຕລຊລ ໂດຍສະເພາະແມ່ນ ການແຍກບົດບາດລະຫວ່າງ ຕລຊລ ແລະ ຜູ້ຄຸ້ມຄອງໃຫ້ມີຄວາມຈະແຈ້ງ, ປັບປຸງກົນໄກການຊື້-ຂາຍ, ພັດທະນາເຕັກໂນໂລຊີ-ຂໍ້ມູນຂ່າວສານ ແລະ ອື່ນໆ ເພື່ອຮອງຮັບໃຫ້ແກ່ການບໍລິການຊື້-ຂາຍຫຼັກຊັບ, ການຮັບຝາກ, ການໄລ່ລຽງ ແລະ ຫັກບັນຊີຫຼັກຊັບ;

- ສ້າງ ແລະ ພັດທະນາສະຖາບັນສື່ກາງດ້ານຫຼັກຊັບ: ດ້ວຍການສ້າງເງື່ອນໄຂ ແລະ ລະບຽບການ ເພື່ອຮອງຮັບໃຫ້ແກ່ການບໍລິການສິນເຊື່ອເພື່ອຊື້ຫຼັກຊັບ (Margin Trading) ຫຼື ຢືມຫຼັກຊັບເພື່ອຂາຍ (Short Sell); ການກູ້ຢືມໂດຍໃຊ້ຫຼັກຊັບຄໍ້າປະກັນ (Securities Borrowing and Lending); ລະບົບເຊື່ອມຕໍ່ການຊໍາລະເງິນກັບຫຼາຍທະນາຄານ (Multiple Bank Link), ລະບົບສົ່ງຄໍາສັ່ງຊື້-ຂາຍຮຸ້ນ ທີ່ເຊື່ອມຕໍ່ກັບຕະຫຼາດຫຼັກຊັບລາວ (Ledger System), ລະບົບຮອງຮັບການຊື້-ຂາຍຮຸ້ນ ເພື່ອສ້າງສະພາບຄ່ອງໃຫ້ແກ່ຮຸ້ນຂອງບໍລິສັດຈົດທະບຽນ (Liquidity Provider), ລະບົບການສ້າງສະພາບຄ່ອງຂອງບໍລິສັດຫຼັກຊັບ (Maket Maker), ລະບົບຮັບຄໍາສັ່ງຊື້-ຂາຍຜ່ານມືຖື (Mobile Trading App); ຊຸກຍູ້ສະຖາບັນສື່ກາງດ້ານຫຼັກຊັບໃຫ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ, ໃຫ້ມີຈໍານວນເພີ່ມຂຶ້ນ, ຂະຫຍາຍຂອບເຂດການດໍາເນີນທຸລະກິດ ແລະ ການບໍລິການຂອງບາງປະເພດສະຖາບັນສື່ກາງດ້ານຫຼັກຊັບ, ຊຸກຍູ້ການຊອກຫາລູກຄ້າ ໃຫ້ກວ້າງຂວາງຂຶ້ນ ແລະ ເພີ່ມຊ່ອງທາງອໍານວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ; ຊຸກຍູ້ສະຖາບັນສື່ກາງດ້ານຫຼັກຊັບໃໝ່ ທີ່ບໍ່ທັນມີການສ້າງຕັ້ງເທື່ອ ໃຫ້ມີການສ້າງຕັ້ງຂຶ້ນ ເປັນຕົ້ນ ບໍລິສັດ ບໍລິຫານກອງທຶນເພື່ອການລົງທຶນ, ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດ; ຊຸກຍູ້ໃຫ້ມີຜູ້ຄຸ້ມຄອງຫຼັກ ບໍລິສັດປະເມີນມູນຄ່າຊັບສິນ ແລະ ຊຸກຍູ້ການສ້າງຕັ້ງສະມາຄົມບໍລິສັດປະເມີນມູນຄ່າຊັບສິນ.

**ຍຸດທະສາດ ທີ III: ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ (1 ແຜນງານ)**

ສຸມໃສ່ສ້າງເງື່ອນໄຂຮອບດ້ານ ເພື່ອໃຫ້ບໍລິສັດຈົດທະບຽນພາຍໃນ ທີ່ອອກຈໍາໜ່າຍຫຼັກຊັບ ດ້ວຍການນໍາໃຊ້ກົນໄກຕະຫຼາດທຶນ ຕິດພັນກັບການເປີດເຜີຍຂໍ້ມູນ ແລະ ການຄຸ້ມຄອງບໍລິຫານກິດຈະການ. ຄຽງຄູ່ກັບການ ສ້າງ ແລະ ພັດທະນາຜະລິດຕະພັນຫຼັກຊັບໃຫ້ມີຄວາມຫຼາກຫຼາຍ ເພື່ອຕອບສະໜອງໃຫ້ແກ່ຄວາມຕ້ອງການລະດົມທຶນໃນສັງຄົມ ແລະ ເພີ່ມທາງເລືອກໃນການລົງທຶນ.

**ແຜນງານທີ 4: ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ (2 ໂຄງການ)**

- **ທິດທາງ:**

- ຊຸກຍູ້ສົ່ງເສີມ ຫົວໜ່ວຍວິສາຫະກິດທີ່ມີຄວາມພ້ອມ, ມີຜົນດຳເນີນງານທີ່ດີຈາກທຸກພາກສ່ວນເສດຖະກິດ ແລະ ຂະແໜງການ ທີ່ເປັນທ່າແຮງໃນການຂັບເຄື່ອນເສດຖະກິດຂອງ ສປປ ລາວ ສາມາດລະດົມທຶນຜ່ານຕະຫຼາດທຶນ ແລະ ຈົດທະບຽນໃນ ຕລຊລ;
- ສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ ເພື່ອໃຫ້ສາມາດແຂ່ງຂັນກັບພາຍໃນ ແລະ ພາຍນອກ ໂດຍຜ່ານກົນໄກຕະຫຼາດທຶນ ຕິດພັນກັບການເປີດເຜີຍຂໍ້ມູນ, ການລາຍງານທາງການເງິນ (IFRS) ແລະ ການຄຸ້ມຄອງບໍລິຫານ (CG);
- ຍົກລະດັບມາດຕະຖານການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ ໃຫ້ທຽບເທົ່າບັນດາປະເທດໃນພາກພື້ນ ແລະ ສາກົນ ໂດຍການນຳໃຊ້ບັດປະເມີນການຄຸ້ມຄອງບໍລິຫານອາຊຽນ (ASEAN CG SCORECARD) ເຂົ້າໃນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ.
- ຜະລິດຕະພັນຫຼັກຊັບ ໄດ້ຮັບການພັດທະນາໃຫ້ມີຄວາມຫຼາກຫຼາຍ ເພື່ອຕອບສະໜອງໃຫ້ແກ່ຄວາມຕ້ອງການລະດົມທຶນໃນສັງຄົມ ແລະ ເພີ່ມທາງເລືອກໃນການລົງທຶນ.

- **ຄາດໝາຍ:**

- ອົງການຄຸ້ມຄອງວຽກງານຫຼັກຊັບ, ຕະຫຼາດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງເງື່ອນໄຂ ແລະ ສ້າງຄວາມເຂັ້ມແຂງຮອບດ້ານ ໃຫ້ແກ່ວິສາຫະກິດ ທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ດ້ວຍການຝຶກອົບຮົມ ແລະ ເຜີຍແຜ່ກ່ຽວກັບແນວທາງ, ນະໂຍບາຍ, ລະບຽບການ, ເງື່ອນໄຂ, ຂັ້ນຕອນ ແລະ ວິຊາການສະເພາະດ້ານ ຕິດພັນກັບການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ, ການບັນຊີ, ການຄຸ້ມຄອງບໍລິຫານ ແລະ ອື່ນໆ; ສ້າງບັນຊີເປົ້າໝາຍ ແລະ ຈັດລຽງບຸລິມະສິດເປົ້າໝາຍບໍລິສັດຈົດທະບຽນ ແລະ ສ້າງແຜນປັບປຸງຄວາມພ້ອມຮອບດ້ານເປົ້າໝາຍບໍລິສັດດັ່ງກ່າວໃນແຕ່ລະໄລຍະ ພ້ອມທັງ ຊຸກຍູ້ໃຫ້ສະຖາບັນສື່ກາງ ແລະ ເປົ້າໝາຍບໍລິສັດຈົດທະບຽນ ຮ່ວມກັນຈັດຕັ້ງປະຕິບັດແຜນດັ່ງກ່າວ ໂດຍໃຫ້ໄດ້ເຂົ້າພົບວິສາຫະກິດ ເພື່ອນຳສະເໜີກ່ຽວກັບການລະດົມທຶນຜ່ານຕະຫຼາດທຶນ ຢ່າງໜ້ອຍ 100 ແຫ່ງ ພາຍໃນປີ 2025;
- ຊຸກຍູ້ວິສາຫະກິດທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ເອົາໃຈໃສ່ແກ້ໄຂບັນຫາພາຍໃນຂອງຕົນ ເພື່ອກາຍເປັນຜູ້ປະກອບການທີ່ມີຄຸນນະພາບ ແລະ ບໍລິຫານຢ່າງມືອາຊີບ ເປັນຕົ້ນ ການຖືບັນຊີ, ການປະຕິບັດພັນທະອາກອນ, ການກວດສອບເອກະສານລາຍງານການເງິນ, ປັບປຸງການຄຸ້ມຄອງບໍລິຫານ ເພື່ອກ້າວໄປເຖິງການມີກຳໄລເທື່ອລະກ້າວ;
- ຄົ້ນຄວ້າສ້າງກົນໄກ ແລະ ລະບຽບການ ເພື່ອຮອງຮັບການລະດົມທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ດ້ວຍການອອກຈຳໜ່າຍຫຼັກຊັບ ຫຼື ລະດົມທຶນຜ່ານກອງທຶນເພື່ອການລົງທຶນ;

- ສ້າງເງື່ອນໄຂໃຫ້ວິສາຫະກິດ ທີ່ມີຄວາມພ້ອມ, ມີຜົນການດຳເນີນງານທີ່ດີ ແລະ ມີທ່າແຮງ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ຢ່າງໜ້ອຍ 5 ກໍລະນີ ຫຼື ລະດົມທຶນສະສົມໃຫ້ໄດ້ 15-18% ຂອງ GDP;
- ຄົ້ນຄວ້າສ້າງກົນໄກ ແລະ ເງື່ອນໄຂໃຫ້ການຄຸ້ມຄອງບໍລິສັດທີ່ໄປອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບຕ່າງປະເທດ;
- ຈັດຕັ້ງປະຕິບັດລະບຽບວ່າດ້ວຍ ການລາຍງານ ແລະ ເປີດເຜີຍຂໍ້ມູນ ຢ່າງເຂັ້ມງວດ. ການລາຍງານ ແລະ ເປີດເຜີຍຂໍ້ມູນຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນ ຕ້ອງໄດ້ຮັບການຕີລາຄາຄືນໃນແຕ່ລະປີ ເພື່ອຖອດຖອນບົດຮຽນ ແລະ ປັງປຸງໃຫ້ດີຂຶ້ນ ແນ່ໃສ່ໃຫ້ຂໍ້ມູນແກ່ມວນຊົນຢ່າງມີປະສິດທິພາບ;
- ສ້າງແຜນຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS Roadmap) ສຳລັບຂະແໜງການຫຼັກຊັບ ແລະ ບໍລິສັດຈົດທະບຽນ ແລະ ບໍລິສັດຈົດທະບຽນ ສາມາດຈັດຕັ້ງປະຕິບັດ IFRS ພາຍໃນປີ 2026;
- ສ້າງແຜນຈັດຕັ້ງປະຕິບັດການຂ້າມຜ່ານສູ່ IFRS (IFRS Implementation Plan);
- ຊຸກຍູ້ສົ່ງເສີມໃຫ້ບໍລິສັດຈົດທະບຽນ ສາມາດຄຸ້ມຄອງບໍລິຫານ ແລະ ປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ໂດຍໃຊ້ບັດປະເມີນວຽກງານການຄຸ້ມຄອງບໍລິຫານ (Lao CG Scorcard) ແລະ ໃຫ້ສາມາດນຳໃຊ້ບັດປະເມີນວຽກງານການຄຸ້ມຄອງບໍລິຫານອາຊຽນ (ASEAN CG SCORECARD) ເຂົ້າໃນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ. ການປະເມີນຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນດັ່ງກ່າວໃຫ້ໄດ້ໃນລະດັບ “ດີເລີດ” ກວມເອົາ 80% ຂອງບໍລິສັດຈົດທະບຽນທັງຫມົດ. ພ້ອມທັງ ສາມາດລາຍງານ ແລະ ເປີດເຜີຍຂໍ້ມູນທັນຕາມເວລາທີ່ກຳນົດ;
- ສະມາຊິກສະພາບໍລິຫານຂອງບໍລິສັດຈົດທະບຽນເຂົ້າຮ່ວມຝຶກອົບຮົມກ່ຽວກັບພາລະບົດບາດ, ສິດ ແລະ ຫນ້າທີ່ຂອງຕົນ ໃນຈຳນວນ 50 ເທື່ອຄົນ;
- ສ້າງກົນໄກ ແລະ ລະບຽບການ ກ່ຽວກັບການສ້າງຕັ້ງ ແລະ ຄຸ້ມຄອງສະມາຄົມບໍລິສັດຈົດທະບຽນ ໃຫ້ສອດຄ່ອງກັບລະບຽບກົດໝາຍ;
- ສ້າງ ແລະ ປັບປຸງເງື່ອນໄຂ, ກົນໄກ ແລະ ລະບຽບການ ເພື່ອອຳນວຍຄວາມສະດວກ ແລະ ຊຸກຍູ້ ການອອກຈຳໜ່າຍຮຸ້ນກູ້ ຢູ່ພາຍໃນປະເທດ;
- ສຶກສາຄົ້ນຄວ້າ ແລະ ກະກຽມເງື່ອນໄຂ ກ່ຽວກັບ ກອງທຶນສ່ວນບຸກຄົນ (Private Fund), ກອງທຶນພື້ນຖານໂຄງລ່າງ (Infrastructure Fund), ກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund) ແລະ ທຸລະກິດຮ່ວມລົງທຶນ (Venture Capital: VC), ການອອກຈຳໜ່າຍພັນທະບັດແພນດ້າ ຢູ່ ສປ. ຈີນ ແລະ ຫຼັກຊັບປະເພດອື່ນ ໂດຍສະເພາະ ແມ່ນ ຫຼັກຊັບແບບຍືນຍົງ (Sustainable Securities);
- ຊຸກຍູ້ໃຫ້ມີການໃຫ້ບໍລິການກ່ຽວກັບຜະລິດຕະພັນທີ່ມີລະບຽບການຮອງຮັບແລ້ວ ຄື: ກອງທຶນຮ່ວມ ແລະ ການເອົາຮຸ້ນເປັນຫຼັກຊັບອ້າງອີງ ເພື່ອອອກໃບຢັ້ງຢືນສິດຢູ່ຕ່າງປະເທດ (Depositary Receipt: “DR”),

ແລະ ຄົ້ນຄວ້າສ້າງເງື່ອນໄຂ ໃຫ້ວິສາຫະກິດພາຍໃນໄປອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນ ຢູ່ຕະຫຼາດຫຼັກຊັບຕ່າງປະເທດ ເປັນຕົ້ນ ການຈົດທະບຽນຄວບ (Dual Listing) ແລະ ການອອກຈຳໜ່າຍຫຼັກຊັບຂ້າມແດນ (Cross Border Issuing) ທີ່ເຫັນວ່າມີຄວາມເປັນໄປໄດ້ໃນຕະຫຼາດທຶນລາວ.

- ໂຄງການ:

1) ຂະຫຍາຍບໍລິສັດຈົດທະບຽນ ແລະ ສ້າງຄວາມເຂັ້ມແຂງໃຫ້ບໍລິສັດຈົດທະບຽນ: ດ້ວຍການສ້າງບັນຊີເປົ້າໝາຍ ແລະ ກະກຽມຄວາມພ້ອມໃຫ້ແກ່ເປົ້າໝາຍດັ່ງກ່າວ ເພື່ອຈົດທະບຽນໃນ ຕລຊລ ໂດຍການເກັບຂໍ້ມູນພື້ນຖານຂອງບັນດາ ວິສາຫະກິດ ໂດຍສະເພາະຖານະການເງິນ ເພື່ອໃຫ້ມີຄວາມພ້ອມ ແລະ ປັງປຸງດ້ານທີ່ຍັງບໍ່ໄດ້ເງື່ອນໄຂ ແນ່ໃສ່ຈັດລຽງບູລິມະສິດ ໃນການອອກນຳຫນ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ; ຊຸກຍູ້ ການນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ໂດຍການສ້າງແຜນ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຕາມກຳນົດ, ຊຸກຍູ້ການນຳໃຊ້ຫຼັກການຄຸ້ມຄອງບໍລິຫານ (CG) ພ້ອມທັງ ຍົກລະດັບມາດຕະຖານການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຢູ່ ສປປ ລາວ ໃຫ້ທຽບເທົ່າບັນດາປະເທດໃນພາກພື້ນ ແລະ ສາກົນ ດ້ວຍການນຳໃຊ້ບັດປະເມີນວຽກງານການຄຸ້ມຄອງບໍລິຫານອາຊຽນ (ASEAN CG SCORECARD) ເຂົ້າໃນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ແລະ ຕິດຕາມການເຄື່ອນໄຫວຂອງບໍລິສັດຈົດທະບຽນ;
2) ການພັດທະນາຜະລິດຕະພັນຫຼັກຊັບ: ດ້ວຍການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າສ້າງ ແລະ ປັບປຸງ ວິທີການ ແລະ ຂັ້ນຕອນ ເພື່ອຮອງຮັບການຊື້-ຂາຍພັດທະນາພັນທະບັດລັດຖະບານຜ່ານຕະຫຼາດທຶນ; ຄົ້ນຄວ້າກ່ຽວກັບວຽກງານຂໍ້ມູນຂ່າວສານ ພັນທະບັດລັດຖະບານ; ສຶກສາຄົ້ນຄວ້າ ແລະ ກະກຽມເງື່ອນໄຂ ກ່ຽວກັບກອງທຶນສ່ວນບຸກຄົນ (Private Fund), ກອງທຶນພື້ນຖານໂຄງລ່າງ (Infrastructure Fund), ກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund: PE Fund) ແລະ ທຸລະກິດຮ່ວມລົງທຶນ (Venture Capital: VC) ແລະ ຫຼັກຊັບປະເພດອື່ນ ໂດຍສະເພາະ ແມ່ນ ຫຼັກຊັບແບບຍືນຍົງ (Sustainable Securities), ການຈົດທະບຽນຄວບ (Dual Listing) ແລະ ການຈົດທະບຽນຂ້າມແດນ (Cross Border Listing); ຊຸກຍູ້ໃຫ້ມີການໃຫ້ບໍລິການກ່ຽວກັບຜະລິດຕະພັນທີ່ມີລະບຽບການຮອງຮັບແລ້ວ ຄື: ກອງທຶນຮ່ວມ ແລະ ການເອົາຮຸ້ນເປັນຫຼັກຊັບອ້າງອີງ ເພື່ອອອກໃບຢັ້ງຢືນສິດຢູ່ຕ່າງປະເທດ (Depositary Receipt: "DR").

**ຍຸດທະສາດ ທີ IV: ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ (1 ແຜນງານ)**

ຄົ້ນຄວ້າຊ່ອງທາງໃນການຂະຫຍາຍ ແລະ ສະໜັບສະໜູນການເຂົ້າມາລົງທຶນໃນວຽກງານຫຼັກຊັບ ຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ເຊິ່ງລວມທັງ ດ້ານເງື່ອນໄຂ ແລະ ນະໂຍບາຍ ທີ່ຕິດພັນກັບການລົງທຶນ ແລະ ການຝຶກອົບຮົມ-ໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຫຼັກຊັບ.

**ແຜນງານທີ 5: ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ (2 ໂຄງການ)**

- **ທິດທາງ:**

- ຂະຫຍາຍຖານຜູ້ລົງທຶນ ໃຫ້ກວ້າງຂວາງຂຶ້ນ ໂດຍສະເພາະ ຜູ້ລົງທຶນພາຍໃນປະເທດ ປະເພດບຸກຄົນ ແລະ ສະຖາບັນ;
- ມວນຊົນ ແລະ ຜູ້ລົງທຶນ ໄດ້ຮັບການພັດທະນາໃຫ້ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບການລົງທຶນໃນຫຼັກຊັບເທື່ອລະກ້າວ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການລົງທຶນໃນຫຼັກຊັບ;
- ສ້າງນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ມີຄຸນນະພາບ ແລະ ມີຈັນຍາບັນການເປັນນັກວິຊາຊີບທຸລະກິດຫຼັກຊັບ.

- **ຄາດໝາຍ:**

- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສົ່ງເສີມທະນາຄານທຸລະກິດ, ບໍລິສັດປະກັນໄພ, ຄັງສະຫວັດດີການສັງຄົມ, ຄັງບໍານເນັດ-ບໍານານ ແລະ ບໍລິສັດຕ່າງໆ ປະກອບສ່ວນລົງທຶນໃນຫຼັກຊັບ;
- ຄົ້ນຄວ້ານະໂຍບາຍເພື່ອສົ່ງເສີມຜູ້ລົງທຶນຕ່າງປະເທດ ເຂົ້າມາລົງທຶນໃນຕະຫຼາດຫຼັກຊັບ ແລະ ຄົ້ນຄວ້າເງື່ອນໄຂ ແລະ ລະບຽບການ ເພື່ອຄຸ້ມຄອງຜູ້ລົງທຶນດັ່ງກ່າວ;
- ຈັດຝຶກອົບຮົມໃນຫົວຂໍ້ຕ່າງໆ ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ໄດ້ຢ່າງໜ້ອຍ 3 ຄັ້ງ/ປີ;
- ຈັດຕັ້ງ, ຊຸກຍູ້ ແລະ ປະກອບສ່ວນໂຄສະນາເຜີຍແຜ່ກັບທີ່ໃຫ້ໄດ້ ຢ່າງໜ້ອຍ 3 ຄັ້ງ/ປີ ແລະ ມີຜູ້ເຂົ້າຮ່ວມ ຢ່າງໜ້ອຍ 200 ເທື່ອຄົນ ຕໍ່ປີ;
- ໂຄສະນາເຜີຍແຜ່ຜ່ານສື່ສິ່ງພິມ, ສື່ອອນລາຍ, ໂທລະພາບ, ເຟສບຸກ, ຢູທູບ ແລະ ອື່ນໆ, ສ້າງຜະລິດຕະພັນໂຄສະນາ ເປັນຕົ້ນ Podcast ຢ່າງນ້ອຍ 4 ເລື່ອງຕໍ່ປີ, ພາບສະແດງຂໍ້ມູນ ຢ່າງນ້ອຍ 12 ຫົວຂໍ້ຕໍ່ປີ, ກາຕູນເອນິເມຊັນ ຢ່າງນ້ອຍ 4 ເລື່ອງຕໍ່ປີ, ສະປອດໂຄສະນາ ຢ່າງນ້ອຍ 5 ເລື່ອງຕໍ່ປີ, ພັດທະນາໂຄງສ້າງລາຍການໂທລະພາບ ໃຫ້ແທດເໝາະກັບສະພາບຕົວຈິງໃນແຕ່ລະໄລຍະ ຢ່າງໜ້ອຍ 48 ເທັບ ຕໍ່ປີ;
- ສ້າງນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ສາມາດປະຕິບັດພາລະບົດບາດຂອງຕົນຢ່າງມີປະສິດທິພາບກວ່າເກົ່າ ແລະ ຈັນຍາບັນສູງ, ໄດ້ຮັບການຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ຊຸກຍູ້ການຈັດຕັ້ງຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 1 ຄັ້ງ ຕໍ່ປີ.

- **ໂຄງການ:**
  1) ຂະຫຍາຍ ແລະ ປົກປ້ອງຜູ້ລົງທຶນ: ດ້ວຍການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສົ່ງເສີມທະນາຄານທຸລະກິດ, ບໍລິສັດປະກັນໄພ, ຄັງສະຫວັດດີການສັງຄົມ, ຄັງບໍານເນັດ-ບໍານານ ແລະ ບໍລິສັດຕ່າງໆ ປະກອບສ່ວນລົງທຶນໃນຫຼັກຊັບ; ຄົ້ນຄວ້າ ແລະ ກໍານົດນະໂຍບາຍເພື່ອຄຸ້ມຄອງຜູ້ລົງທຶນຕ່າງປະເທດ ທີ່ເຂົ້າມາລົງທຶນໃນຫຼັກຊັບ; ຄົ້ນຄວ້າເງື່ອນໄຂ ແລະ ລະບຽບການ ເພື່ອຄຸ້ມຄອງຜູ້ລົງທຶນຕ່າງປະເທດ ແລະ ສຶກສາຄົ້ນຄວ້າກ່ຽວກັບການສ້າງຕັ້ງ ກອງທຶນປົກປ້ອງຜູ້ລົງທຶນ;

2) ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ: ດ້ວຍການປັບປຸງ ແລະ ພັດທະນາ ໂຄງການຝຶກອົບຮົມວຽກງານຕະຫຼາດທຶນ ໃຫ້ມີຄຸນນະພາບ ແລະ ສອດຄ່ອງກັບແຕ່ລະເປົ້າໝາຍ, ຊຸກຍູ້ການຄົ້ນຄວ້າ ແລະ ຈັດຕັ້ງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ຈັດຕັ້ງການຝຶກອົບຮົມວຽກງານຫຼັກຊັບອື່ນໆ; ພັດທະນາການໂຄສະນາເຜີຍແຜ່ ໃຫ້ຫຼາກຫຼາຍສີສັນ, ມີຄຸນນະພາບ ແລະ ກຳນົດເປົ້າໝາຍຢ່າງມີຈຸດສຸມ; ສຶກສາຄົ້ນຄວ້າກ່ຽວກັບການສ້າງສູນໃຫ້ຄວາມຮູ້ກ່ຽວກັບຕະຫຼາດທຶນ.

ລາຍລະອຽດແຜນງານ-ໂຄງການ ພັດທະນາຕະຫຼາດທຶນຂອງ ສປປ ລາວ ໄລຍະ 5 ປີ (2021-2025)
ຕາມເອກະສານຄັດຕິດ 4

## ພາກທີ IV
## ມາດຕະການຈັດຕັ້ງປະຕິບັດ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 (ສະບັບປັບປຸງ) ໃຫ້ໄດ້ໝາກຜົນຕາມຄາດໝາຍທີ່ວາງໄວ້ ທຸກພາກສ່ວນກ່ຽວຂ້ອງຕ້ອງເອົາໃຈໃສ່ບາງມາດຕະການ ດັ່ງລຸ່ມນີ້:

1. ຜູ້ຄຸ້ມຄອງ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຕ້ອງກຳແໜ້ນ ເນື້ອໃນແຜນຍຸດທະສາດພັດທະນາຕະຫຼາດທຶນຂອງ ສປປ ລາວ 10 ປີ (2021-2030) ຢ່າງເລິກເຊິ່ງ, ຜັນຂະຫຍາຍເນື້ອໃນດັ່ງກ່າວ ເປັນແຜນງານ, ໂຄງການ ແລະ ແຜນວຽກ ຢ່າງມີຫົວຄິດປະດິດສ້າງ ແລະ ແທດເໝາະກັບຕົວຈິງ ພ້ອມທັງ ສ້າງເປັນແຜນການເຄື່ອນໄຫວປະຈຳປີ;
2. ຜູ້ຄຸ້ມຄອງ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ຕ້ອງແບ່ງງານ, ແບ່ງຄວາມຮັບຜິດຊອບຢ່າງລະອຽດ ແລະ ພ້ອມກັນ ຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງ;
3. ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງບັນຈຸໜ້າວຽກທີ່ສະໜັບສະໜູນການພັດທະນາຕະຫຼາດທຶນ ເຂົ້າໃນແຜນຍຸດທະສາດຂອງຕົນ ແລະ ຈັດຕັ້ງປະຕິບັດຢ່າງມີໝາກຜົນ;
4. ຄຄຊ ຕ້ອງມີກົນໄກປະສານງານ ລະຫວ່າງ ໜ່ວຍງານ, ອົງກອນ, ລັດ ແລະ ເອກະຊົນ ຢ່າງເປັນລະບົບ ແລະ ກົມກຽວ ແລະ ພ້ອມກັນຈັດຕັ້ງປະຕິບັດແຜນພັດທະນາຕະຫຼາດທຶນ ຕາມພາລະບົດບາດຂອງຕົນ ດ້ວຍຄວາມຮັບຜິດຊອບສູງ;
5. ຄຄຊ ຕ້ອງເພີ່ມທະວີການຍາດແຍ່ງການຊ່ວຍເຫຼືອ ຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ເພື່ອຂໍການສະໜັບສະໜູນ ແລະ ຊ່ວຍເຫຼືອການຈັດຕັ້ງປະຕິບັດແຜນດັ່ງກ່າວ;
6. ທະນາຄານແຫ່ງ ສປປ ລາວ ຕ້ອງສະໜອງງົບປະມານໃຫ້ແກ່ ຄຄຊ ຢ່າງພຽງພໍ ແລະ ທັນເວລາ;
7. ຄຄຊ ຕ້ອງກຳນົດຕົວວັດແທກການເຄື່ອນໄຫວວຽກງານ, ມີກົນໄກການຕິດຕາມກວດກາ, ປະເມີນຜົນ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດ ໃນປີ 2025 ແລະ 2030 ພ້ອມທັງ ລາຍງານຂໍທິດຊີ້ນຳຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ. ພ້ອມນີ້, ບັນດານິຕິກຳຕ່າງໆ ທີ່ໄດ້ປະກາດໃຊ້ແລ້ວ ແຕ່ເຫັນວ່າບໍ່ສອດຄ່ອງກັບຕົວຈິງ ຄຄຊ ຕ້ອງໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທົບທວນ ແລະ ປັບປຸງ.

## ເອກະສານຊ້ອນທ້າຍ

❖ <u>ເອກະສານຊ້ອນທ້າຍ 1:</u> ນິຕິກຳທີ່ ຄຄຊ ແລະ ສຄຄຊ ສຳເລັດການສ້າງ ແລະ ປັບປຸງໃນປີ 2011-2020 (ຈຳນວນ 73 ສະບັບ ໃນນີ້ ນຳໃຊ້ພາຍໃນ 10 ສະບັບ)

| ລ/ດ | ຊື່ນິຕິກຳທີ່ນຳໃຊ້ໃນການຄຸ້ມຄອງວຽກງານຫຼັກຊັບ | ປະເພດນິຕິກຳ | ເລກທີ | ລົງວັນທີ |
|---|---|---|---|---|
| 1 | ກົດໝາຍວ່າດ້ວຍຫຼັກຊັບ | ກົດໝາຍ | 21/ສພຊ | 10 ທັນວາ 2012 |
| 2 | ດຳລັດວ່າດ້ວຍ ຫຼັກຊັບ ແລະ ຕະຫຼາດຫຼັກຊັບ | ດຳລັດ | 255/ນຍ | 25 ພຶດສະພາ 2010 |
| 3 | ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ | ດຳລັດ | 188/ນຍ | 24 ກໍລະກົດ 2013 |
| | ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ (ປັບປຸງ) | ດຳລັດ | 195/ນຍ | 12 ມິຖຸນາ 2017 |
| 4 | ດຳລັດວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ແຜນຍຸດທະສາດ ການພັດທະນາຕະຫຼາດທຶນຂອງ ສປປ ລາວ ແຕ່ປີ 2016 - 2025 | ດຳລັດ | 27/ລບ | 10 ມີນາ 2015 |
| 5 | ຂໍ້ຕົກລົງວ່າດ້ວຍ ລະບຽບກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ | ຂໍ້ຕົກລົງ | 009/ຄລຕ | 21 ກໍລະກົດ 2010 |
| | ລະບຽບວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ (ປັບປຸງ) | ລະບຽບ | 002/ຄຄຊ | 24 ກໍລະກົດ 2013 |
| 6 | ຂໍ້ຕົກລົງວ່າດ້ວຍ ລະບຽບກ່ຽວກັບການອອກ ແລະ ສະເໜີຂາຍຮຸ້ນຕໍ່ມວນຊົນ | ຂໍ້ຕົກລົງ | 008/ຄລຕ | 21 ກໍລະກົດ 2010 |
| | ລະບຽບວ່າດ້ວຍ ການອອກຈຳໜ່າຍຮຸ້ນ (ປັບປຸງ) | ລະບຽບ | 018/ຄຄຊ | 27 ກໍລະກົດ 2015 |
| | ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນ (ປັບປຸງ) | ຂໍ້ຕົກລົງ | 05/ຄຄຊ | 28 ມັງກອນ 2019 |
| 7 | ຂໍ້ຕົກລົງວ່າດ້ວຍ ລະບຽບການຄຸ້ມຄອງຕະຫຼາດຫຼັກຊັບ | ຂໍ້ຕົກລົງ | 012/ຄລຕ | 10 ພະຈິກ 2010 |
| | ລະບຽບວ່າດ້ວຍ ການຄຸ້ມຄອງຕະຫຼາດຫຼັກຊັບ (ປັບປຸງ) | ລະບຽບ | 019/ຄຄຊ | 27 ກໍລະກົດ 2015 |
| 8 | ຂໍ້ຕົກລົງວ່າດ້ວຍ ລະບຽບການບັນຊີ ແລະ ກວດສອບກ່ຽວກັບວຽກງານຫຼັກຊັບ | ຂໍ້ຕົກລົງ | 013/ຄລຕ | 10 ພະຈິກ 2010 |
| | ລະບຽບວ່າດ້ວຍ ການບັນຊີ ແລະ ການກວດສອບວຽກງານຫຼັກຊັບ (ປັບປຸງ) | ລະບຽບ | 001/ຄຄຊ | 07 ເມສາ 2015 |
| | ຂໍ້ຕົກລົງວ່າດ້ວຍ ການບັນຊີ ແລະ ການກວດສອບວຽກງານຫຼັກຊັບ (ປັບປຸງ) | ຂໍ້ຕົກລົງ | 12/ຄຄຊ | 29 ພຶດສະພາ 2017 |

| | | | | |
|---|---|---|---|---|
| 9 | ຂໍ້ຕົກລົງວ່າດ້ວຍ ລະບຽບຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ | ຂໍ້ຕົກລົງ | 013/ຄລຕ | 19 ພຶດສະພາ 2011 |
| | ລະບຽບວ່າດ້ວຍ ການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ (ປັບປຸງ) | ລະບຽບ | 004/ຄຄຊ | 18 ກຸມພາ 2014 |
| 10 | ຂໍ້ຕົກລົງວ່າດ້ວຍ ລະບຽບການຄຸ້ມຄອງການຊື້-ຂາຍຮຸ້ນຂອງ ນັກລົງທຶນຕ່າງປະເທດ ໃນຕະຫຼາດຫຼັກຊັບຢູ່ ສປປ ລາວ | ຂໍ້ຕົກລົງ | 012/ຄລຕ | 19 ພຶດສະພາ 2011 |
| | ລະບຽບວ່າດ້ວຍ ການຄຸ້ມຄອງຜູ້ລົງທຶນຕ່າງປະເທດທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ ຢູ່ ສປປ ລາວ (ປັບປຸງ) | ລະບຽບ | 005/ຄຄຊ | 08 ທັນວາ 2015 |
| 11 | ຂໍ້ຕົກລົງວ່າດ້ວຍ ລະບຽບການເປີດເຜີຍຂໍ້ມູນ | ຂໍ້ຕົກລົງ | 014/ຄລຕ | 19 ພຶດສະພາ 2011 |
| | ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ປັບປຸງ) | ຂໍ້ຕົກລົງ | 013/ຄຄຊ | 17 ທັນວາ 2013 |
| 12 | ຂໍ້ຕົກລົງວ່າດ້ວຍ ຄ່າທຳນຽມສຳລັບການອອກຈຳໜ່າຍຮຸ້ນກູ້ຢູ່ ຕ່າງປະເທດ | ຂໍ້ຕົກລົງ | 011/ຄຄຊ | 07 ພຶດສະພາ 2014 |
| 13 | ຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງ ຕລຊລ ໃຫ້ເປັນຜູ້ກຳນົດລະຫັດຫຼັກຊັບແຫ່ງຊາດລາວ | ຂໍ້ຕົກລົງ | 031/ຄຄຊ | 31 ສິງຫາ 2015 |
| 14 | ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ | ຂໍ້ຕົກລົງ | 0022/ຄຄຊ | 26 ຕຸລາ 2016 |
| | ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນກູ້ (ປັບປຸງ) | ຂໍ້ຕົກລົງ | 015/ຄຄຊ | 28 ມິຖຸນາ 2019 |
| 15 | ຂໍ້ຕົກລົງວ່າດ້ວຍ ລາຍການທີ່ກ່ຽວພັນ | ຂໍ້ຕົກລົງ | 0023/ຄຄຊ | 26 ຕຸລາ 2016 |
| 16 | ຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານຂອງບໍລິສັດຈົດທະບຽນ | ຂໍ້ຕົກລົງ | 0024/ຄຄຊ | 26 ຕຸລາ 2016 |
| | ຂໍ້ຕົກລົງວ່າດ້ວຍ ສະພາບໍລິຫານ (ປັບປຸງ) | ຂໍ້ຕົກລົງ | 10/ຄຄຊ | 26 ເມສາ 2019 |
| 17 | ຂໍ້ຕົກລົງວ່າດ້ວຍ ການຊື້ຮຸ້ນໂດຍບໍ່ວາງເງິນມັດຈຳລ່ວງໜ້າ ໃນຕະຫຼາດຫຼັກຊັບຢູ່ ສປປ ລາວ | ຂໍ້ຕົກລົງ | 0010/ຄຄຊ | 24 ກຸມພາ 2017 |
| 18 | ຂໍ້ຕົກລົງວ່າດ້ວຍ ການກຳນົດຄ່າທຳນຽມກ່ຽວກັບການຊື້-ຂາຍຮຸ້ນ ແລະ ການໂອນຮຸ້ນ ຈົດທະບຽນໃນ ຕລຊລ | ຂໍ້ຕົກລົງ | 10/ຄຄຊ | 27 ເມສາ 2017 |
| 19 | ຂໍ້ຕົກລົງວ່າດ້ວຍ ການກຳນົດລາຄາຮຸ້ນ ຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ | ຂໍ້ຕົກລົງ | 02/ຄຄຊ | 09 ກຸມພາ 2018 |
| 20 | ຂໍ້ຕົກລົງວ່າດ້ວຍ ການກຳນົດລະຫັດຫຼັກຊັບຢູ່ ສປປ ລາວ | ຂໍ້ຕົກລົງ | 16/ຄຄຊ | 03 ກັນຍາ 2018 |
| 21 | ຂໍ້ຕົກລົງວ່າດ້ວຍ ຕົວແທນຜູ້ຖືຮຸ້ນກູ້ | ຂໍ້ຕົກລົງ | 17/ຄຄຊ | 03 ກັນຍາ 2018 |
| 22 | ຂໍ້ຕົກລົງວ່າດ້ວຍ ການກຳນົດອັດຕາຄ່າທຳນຽມໃນ ຊື້-ຂາຍ ແລະ ການໂອນ ພັນທະບັດລັດຖະບານ ໃນຕະຫຼາດຫຼັກຊັບລາວ | ຂໍ້ຕົກລົງ | 21/ຄຄຊ | 17 ທັນວາ 2018 |

| | | | | |
|---|---|---|---|---|
| 23 | ຂໍ້ຕົກລົງວ່າດ້ວຍການຮັບຮອງເອົາ ຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ | ຂໍ້ຕົກລົງ | 11/ຄຄຊ | 16 ເມສາ 2019 |
| 24 | ຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດບໍລິຫານກອງທຶນ | ຂໍ້ຕົກລົງ | 0053/ຄຄຊ | 17 ຕຸລາ 2019 |
| 25 | ຂໍ້ຕົກລົງວ່າດ້ວຍ ກອງທຶນຮ່ວມ | ຂໍ້ຕົກລົງ | 0045/ຄຄຊ | 17 ຕຸລາ 2019 |
| 26 | ຂໍ້ຕົກລົງວ່າດ້ວຍການເອົາຮຸ້ນເປັນຮຸ້ນອ້າງອີງເພື່ອອອກໃບຢັ້ງຢືນສິດ | ຂໍ້ຕົກລົງ | 006/ຄຄຊ | 06 ເມສາ 2020 |
| 27 | ລະບຽບວ່າດ້ວຍ ການກວດກາວຽກງານຫຼັກຊັບ | ລະບຽບ | 372/ສຄລຕ | 24 ກຸມພາ 2012 |
| | ລະບຽບວ່າດ້ວຍ ການກວດກາວຽກງານຫຼັກຊັບ (ປັບປຸງ) | ລະບຽບ | 002/ຄຄຊ | 18 ກຸມພາ 2014 |
| 28 | ລະບຽບການວ່າດ້ວຍ ການລາຍງານ | ລະບຽບ | 373/ສຄລຕ | 24 ກຸມພາ 2012 |
| 29 | ລະບຽບວ່າດ້ວຍ ການຄຸ້ມຄອງການຊື້-ຂາຍຮຸ້ນທາງອິນເຕີເນັດ ຢູ່ ສປປ ລາວ | ລະບຽບ | 001/ຄຄຊ | 24 ກໍລະກົດ 2013 |
| 30 | ລະບຽບວ່າດ້ວຍ ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ | ລະບຽບ | 006/ຄຄຊ | 20 ກັນຍາ 2013 |
| | ຂໍ້ຕົກລົງວ່າດ້ວຍ ການໂອນຮຸ້ນ (ປັບປຸງ) | ຂໍ້ຕົກລົງ | 0025/ຄຄຊ | 26 ຕຸລາ 2016 |
| 31 | ລະບຽບວ່າດ້ວຍ ຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ | ລະບຽບ | 003/ຄຄຊ | 18 ກຸມພາ 2014 |
| 32 | ລະບຽບວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນສຳລັບບໍລິສັດຈົດທະບຽນ | ລະບຽບ | 007/ຄຄຊ | 03 ເມສາ 2014 |
| | ຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ (ປັບປຸງ) | ຂໍ້ຕົກລົງ | 04/ຄຄຊ | 28 ມັງກອນ 2019 |
| 33 | ລະບຽບວ່າດ້ວຍ ທະນາຄານດູແລຊັບສິນ | ລະບຽບ | 010/ຄຄຊ | 07 ພຶດສະພາ 2014 |
| | ຂໍ້ຕົກລົງວ່າດ້ວຍ ການຮັບຮອງການເຄື່ອນໄຫວທະນາຄານດູແລຊັບສິນ (ປັບປຸງ) | ຂໍ້ຕົກລົງ | 016/ຄຄຊ | 28 ມິຖຸນາ 2019 |
| 34 | ລະບຽບວ່າດ້ວຍ ການອອກຈຳໜ່າຍຮຸ້ນກູ້ | ລະບຽບ | 019/ຄຄຊ | 22 ທັນວາ 2014 |
| | ລະບຽບວ່າດ້ວຍ ການອອກຈຳໜ່າຍຮຸ້ນ (ປັບປຸງ) | ລະບຽບ | 017/ຄຄຊ | 22 ຕຸລາ 2014 |
| 35 | ລະບຽບວ່າດ້ວຍ ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອ ຖືຈາກຕ່າງປະເທດ | ລະບຽບ | 002/ຄຄຊ | 08 ທັນວາ 2015 |
| 36 | ລະບຽບວ່າດ້ວຍ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ | ລະບຽບ | 003/ຄຄຊ | 08 ທັນວາ 2015 |
| 37 | ລະບຽບວ່າດ້ວຍ ບັນຊີຕາງໜ້າຊື້-ຂາຍຫຼັກຊັບ ໃນຕະຫຼາດຫຼັກ ຊັບຢູ່ ສປປ ລາວ | ລະບຽບ | 004/ຄຄຊ | 08 ທັນວາ 2015 |

| | | | | |
|---|---|---|---|---|
| 38 | ລະບຽບວ່າດ້ວຍ ການສະໜອງຂໍ້ມູນເພີ່ມເຕີມກ່ຽວກັບແຫຼ່ງທີ່ມາຂອງທຶນ, ໂຄງສ້າງຜູ້ຖືຮຸ້ນ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ຂອງບໍລິສັດຫຼັກຊັບ | ລະບຽບ | 006/ຄຄຊ | 28 ມັງກອນ 2016 |
| 39 | ລະບຽບວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ສຳລັບຕະຫຼາດຫຼັກຊັບ | ລະບຽບ | 0007/ຄຄຊ | 01 ເມສາ 2016 |
| 40 | ບົດແນະນຳວ່າດ້ວຍ ລະຫັດຫຼັກຊັບ | ບົດແນະນຳ | 112/ສຄລຕ | 07 ກຸມພາ 2011 |
| | ບົດແນະນຳວ່າດ້ວຍ ການກຳນົດລະຫັດຫຼັກຊັບ (ປັບປຸງ) | ບົດແນະນຳ | 347/ຕລຊລ | 03 ຕຸລາ 2018 |
| 41 | ບົດແນະນຳວ່າດ້ວຍ ການຈັດຕັ້ງປະຕິບັດລະບຽບວ່າດ້ວຍ ຄວາມພຽງພໍຂອງທຶນຂອງບໍລິສັດຫຼັກຊັບ | ບົດແນະນຳ | 281/ສຄຄຊ | 06 ມີນາ 2014 |
| | ລະບຽບວ່າດ້ວຍ ຄວາມພຽງພໍຂອງທຶນ ຂອງບໍລິສັດຫຼັກຊັບ (ປັບປຸງ) | ລະບຽບ | 0008/ຄຄຊ | 01 ເມສາ 2016 |
| 42 | ບົດແນະນຳວ່າດ້ວຍ ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ | ບົດແນະນຳ | 257/ສຄຄຊ | 03 ມີນາ 2014 |
| | ຄຳແນະນຳວ່າດ້ວຍ ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ (ປັບປຸງ) | ຄຳແນະນຳ | 0001/ສຄຄຊ | 10 ກຸມພາ 2016 |
| | ຄຳແນະນຳວ່າດ້ວຍ ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ (ປັບປຸງ) | ຄຳແນະນຳ | 0001/ສຄຄຊ | 30 ເມສາ 2019 |
| 43 | ຄຳແນະນຳກ່ຽວກັບ ຕົວຊີ້ບອກທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ບໍລິສັດຫຼັກຊັບ | ຄຳແນະນຳ | 0001/ສຄຄຊ | 02 ມີນາ 2018 |
| 44 | ຄຳແນະນຳວ່າດ້ວຍ ກົນໄກການຈັດຕັ້ງປະຕິບັດມາດຕະການທາງບໍລິຫານໃນຂົງເຂດວຽກງານຫຼັກຊັບ | ຄຳແນະນຳ | 02/ສຄຄຊ | 24 ເມສາ 2020 |
| 45 | ຄຳແນະນຳວ່າດ້ວຍ ກົນໄກຄົ້ນຄວ້າການເປີດສືບສວນ-ສອບສວນ ກ່ຽວກັບວຽກງານຫຼັກຊັບ | ຄຳແນະນຳ | 03/ສຄຄຊ | 24 ເມສາ 2020 |
| 46 | ແຈ້ງການກ່ຽວກັບ ການສືບທອດມູນມໍຣະດົກຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບລາວ | ແຈ້ງການ | 507/ສຄລຕ | 23 ທັນວາ 2011 |
| 47 | ແຈ້ງການເລື່ອງ ການສ້າງ, ພັດທະນາ ແລະ ນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງບໍລິສັດຫຼັກຊັບ | ແຈ້ງການ | 371/ສຄລຕ | 24 ກຸມພາ 2012 |
| | ຂໍ້ຕົກລົງວ່າດ້ວຍ ລະບົບເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານຂອງ ບໍລິສັດຫຼັກຊັບ (ປັບປຸງ) | ຂໍ້ຕົກລົງ | 13/ຄຄຊ | 29 ພຶດສະພາ 2017 |
| 48 | ແຈ້ງການເລື່ອງ ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ IFRS | ແຈ້ງການ | 014/ຄຄຊ | 25 ທັນວາ 2013 |

| | | | | |
|---|---|---|---|---|
| 49 | ແຈ້ງການເລື່ອງ ການປະຕິບັດມາດຕະການສາກົນດ້ານການລາຍງານການເງິນ (IFRS) | ແຈ້ງການ | 0009/ຄຄຊ | 25 ພຶດສະພາ 2020 |
| 50 | ແຈ້ງການເລື່ອງ ການລະດົມທຶນໂດຍການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນຢູ່ຕ່າງປະເທດ | ແຈ້ງການ | 001/ຄຄຊ | 14 ກຸມພາ 2014 |
| 51 | ແຈ້ງການເລື່ອງ ແຈ້ງລາຍຊື່ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຫຼັກຊັບ ເພື່ອລະດົມທຶນຈາກມວນຊົນ ແລະ ຈົດທະບຽນ ໃນຕະຫຼາດຫຼັກຊັບ | ແຈ້ງການ | 0023/ສຄຄຊ | 19 ສິງຫາ 2016 |
| | ແຈ້ງການເລື່ອງ ແຈ້ງລາຍຊື່ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຫຼັກຊັບ ເພື່ອລະດົມທຶນຈາກມວນຊົນ ແລະ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ (ປັບປຸງ) | ແຈ້ງການ | 0076/ສຄຄຊ | 27 ພະຈິກ 2019 |
| 52 | ແຈ້ງການເລື່ອງ ແຈ້ງລາຍຊື່ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເຄື່ອນໄຫວທຸລະກິດຫຼັກຊັບ ຢູ່ ສປປ ລາວ | ແຈ້ງການ | 0031/ສຄຄຊ | 20 ກັນຍາ 2016 |
| 53 | ແຈ້ງການເລື່ອງ ການເຄື່ອນໄຫວວຽກງານຂອງບໍລິສັດຫຼັກຊັບ | ແຈ້ງການ | 0003/ຄຄຊ | 02 ກຸມພາ 2017 |
| 54 | ແຈ້ງການເລື່ອງ ຕິດຕາມ, ກວດກາ ແລະ ຊອກຮູ້ ແຫຼ່ງທຶນທີ່ນຳມາຊື້ຮຸ້ນ ໃນຕະຫຼາດທຶນລາວ | ແຈ້ງການ | 0036/ສຄຄຊ | 07 ສິງຫາ 2017 |
| 55 | ຄູ່ມືກ່ຽວກັບ ການນຳໃຊ້ຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມ ຈາກສັງຄົມ ຢູ່ໃນຂົງເຂດວຽກງານຫຼັກຊັບ | ຄູ່ມື | 0002/ສຄຄຊ | 07 ມີນາ 2018 |
| 56 | ແຈ້ງການເລື່ອງ ການລາຍງານ ແລະ ເປີດເຜີຍຂໍ້ມູນເອກະສານລາຍງານການເງິນຂອງບໍລິສັດຈົດທະບຽນ | ແຈ້ງການ | 0047/ສຄຄຊ | 30 ສິງຫາ 2018 |
| 57 | ແຈ້ງການເລື່ອງ ການລົບລ້າງບົດແນະນຳວ່າດ້ວຍລະຫັດຫຼັກຊັບ | ແຈ້ງການ | 006/ສຄຄຊ | 17 ຕຸລາ 2018 |
| 58 | ແຈ້ງການເລື່ອງ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ | ແຈ້ງການ | 0041/ສຄຄຊ | 19 ກໍລະກົດ 2019 |
| | ແຈ້ງການເລື່ອງ ການຮັບຮອງບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ (ປັບປຸງ) | ແຈ້ງການ | 0064/ສຄຄຊ | 18 ຕຸລາ 2019 |
| 59 | ແຈ້ງການເລື່ອງ ການສະໜອງຂໍ້ມູນເອກະສານລາຍງານການເງິນ ຂອງຕະຫຼາດຫຼັກຊັບ ໃນຮູບແບບຂອງ Excel file | ແຈ້ງການ | 0063/ສຄຄຊ | 17 ຕຸລາ 2019 |
| 60 | ແຈ້ງການເລື່ອງ ການແຕ່ງຕັ້ງບໍລິສັດຫຼັກຊັບ ເພື່ອໃຫ້ຄຳແນະນຳແກ່ບໍລິສັດຈົດທະບຽນ | ແຈ້ງການ | 0066/ສຄຄຊ | 23 ຕຸລາ 2019 |
| 61 | ແຈ້ງການເລື່ອງ ການຊຳລະຄ່າຄຸ້ມຄອງປະຈຳປີຂອງນັກກວດສອບ ກ່ຽວກັບວຽກງານຫຼັກຊັບ | ແຈ້ງການ | 20/ຄຄຊ | 15 ພະຈິກ 2019 |

| | | | | |
|---|---|---|---|---|
| 62 | ແຈ້ງການເລື່ອງ ການຕິກລິງ ແລະ ຊີ້ນຳຂອງຂັ້ນເທິງກ່ຽວກັບການຊື້ ຂາຍຮຸ້ນຂອງພະນັກງານ-ລັດຖະກອນໃນຕະຫຼາດຫຼັກຊັບລາວ | ແຈ້ງການ | 034/ສຄຄຊ | 22 ເມສາ 2020 |
| 63 | ຄູ່ມືກ່ຽວກັບການຂໍອະນຸຍາດສ້າງຕັ້ງບໍລິສັດຫຼັກຊັບ | ຄູ່ມື | 482/ສຄລຊ | 27 ກຸມພາ 2012 |

❖ <u>ເອກະສານຊ້ອນທ້າຍ 2:</u> ສະຖາບັນສື່ກາງດ້ານຫຼັກຊັບໃນ ສປປ ລາວ

| ປະເພດສະຖາບັນສື່ກາງ | ລຳດັບ | ຊື່ບໍລິສັດ | ວັນທີສ້າງຕັ້ງ | ເບີໂທຕິດຕໍ່ |
|---|---|---|---|---|
| **ບໍລິສັດຫຼັກຊັບ** | 1 | ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ | 20/12/2010 | 021 265 477 |
| | 2 | ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ | 1/12/2010 | 021 265 468 |
| | 3 | ບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ | 16/11/2013 | 021 419 222 |
| | 4 | ບໍລິສັດ ເອພີເອັມ ລາວ ຈຳກັດ | 16/11/2014 | 021 253 418 |
| **ບໍລິສັດກວດສອບ** | 1 | ບໍລິສັດ ພຣາຍສ໌ວໍເຕີ້ເຮົາສ໌ກູເປີ້ສ໌ (ລາວ) | 5/4/2011 | 021 222 717 |
| | 2 | ບໍລິສັດ ເຄພີເອັມຈີລາວ ຈຳກັດ | 8/9/2011 | 021 454 240 |
| | 3 | ບໍລິສັດ ເອີນ ແອນ ຢັງ (ລາວ) ຈຳກັດ | 22/3/2011 | 021455 077 |
| | 4 | ບໍລິສັດ ດີລອຍ (ລາວ) ຈຳກັດ | 16/9/2015 | 021 419 300 |
| **ບໍລິສັດປະເມີນມູນຄ່າຊັບສິນ** | 1 | ບໍລິສັດ ຊີມ ພອບເພີຕີ້ ຄອນເຊົາເທັ້ນ ຈຳກັດ | 8/2/2016 | +662 5304333 |
| | 2 | ບໍລິສັດ ລາວປະເມີນຊັບສິນ ຈຳກັດ | 18/12/2017 | 030 5080163 |
| | 3 | ບໍລິສັດ ປະເມີນມູນຄ່າຊັບສິນ ແກຣນທ໌ ເຊີແມນ (ລາວ) ຈຳກັດ | 15/12/2017 | 020 97799508 |
| | 4 | ບໍລິສັດ ລາວ ສາກົນ ປະເມີນມູນຄ່າຊັບສິນ ຈຳກັດ | 18/4/2019 | 020 55716119 |
| | 5 | ບໍລິສັດ ເອເຊຍໂລຕັດ ປະເມີນມູນຄ່າຊັບສິນ ຈຳກັດ | 17/5/2019 | 020 55569999 |
| | 6 | ບໍລິສັດ ລາວ ເຈົ້າຊີນ ປະເມີນມູນຄ່າຊັບສິນ ຈຳກັດ | 21/5/2019 | 020 54542169 |
| | 7 | ບໍລິສັດ ລາວວາລູ ປະເມີນມູນຄ່າຊັບສິນ ຈຳກັດ | 15/8/2019 | 020 22229744 |
| | 8 | ບໍລິສັດ ຣິດແອບໄພຣໂຊ ຈຳກັດ | 3/4/2019 | +6662 5156090 |

| | | | | |
|---|---|---|---|---|
| | 9 | ບໍລິສັດ ເຄເຄ ລາວ ປະເມີນມູນຄ່າຊັບສິນ ຈຳກັດ | 16/9/2019 | 020 55655753 |
| ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື | 1 | ບໍລິສັດ TRIS Rating Co., Ltd | 30/9/2016 | +66 2098 3035 |
| ທະນາຄານດູແລຊັບສິນ | 1 | ທະນາຄານກຸງເທບ ຈຳກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ | 6/8/2014 | 021 213 560 |
| | 2 | ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ | 22/8/2018 | 021 258 888 |
| | 3 | ທະນາຄານ ແຫ່ງປະເທດຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ | 15/10/2018 | 021 218 888 |
| ທະນາຄານຕົວແທນເພື່ອການຊຳລະ | 1 | ທະນາຄານການຄ້າ ຕ່າງປະເທດລາວ ມະຫາຊົນ | | 021 213 200 |
| | 2 | ທະນາຄານ ພັດທະນາລາວ | | 021 213 300 |
| ຊົມລົມທຸລະກິດຫຼັກຊັບ | 1 | ຊົມລົມທຸລະກິດຫຼັກຊັບ ປະກອບດ້ວຍ 4 ບໍລິສັດຫຼັກຊັບ ຄື:<br>- ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ;<br>- ບໍລິສັດ ຫຼັກຊັບ ລ້ານຊ້າງ ມະຫາຊົນ;<br>- ບໍລິສັດ ຫຼັກຊັບ ລາວ-ຈີນ ຈຳກັດ;<br>- ບໍລິສັດ ເອພີເອັມ ລາວ ຈຳກັດ. | | |

❖ <u>ເອກະສານຊ້ອນທ້າຍ 3:</u> ນິຕິກຳທີ່ ຕລຊລ ສຳເລັດການສ້າງ ແລະ ປັບປຸງໃນປີ 2011-2020 (ຈຳນວນ 48 ສະບັບ ໃນນີ້ ນຳໃຊ້ພາຍໃນ 38 ສະບັບ)

| ລຳດັບ | ຊື່ນິຕິກຳ | ປະເພດນິຕິກຳ | ສະບັບເລກທີ | ລົງວັນທີ |
|---|---|---|---|---|
| 1 | ລະບຽບວ່າດ້ວຍການຕິດຕາມຕະຫຼາດຫຼັກຊັບ | ລະບຽບ | 20/ຕລຊລ | 07 ມັງກອນ 2011 |
| 2 | ລະບຽບວ່າດ້ວຍການຮັບຝາກຫຼັກຊັບ | ລະບຽບ | 26/ຕລຊລ | 07 ມັງກອນ 2011 |
| 3 | ລະບຽບວ່າດ້ວຍຕົວແທນການໂອນຫຼັກຊັບ | ລະບຽບ | 27/ຕລຊລ | 07 ມັງກອນ 2011 |
| 4 | ລະບຽບກ່ຽວກັບກອງທຶນຮ່ວມເພື່ອຊຳລະທົດແທນຄວາມສ່ຽງ | ລະບຽບ | 01/ຕລຊລ | 17 ກໍລະກົດ 2013 |
| 5 | ລະບຽບວ່າດ້ວຍສະມາຊິກກະພາບຂອງຕະຫຼາດຫຼັກຊັບລາວ | ລະບຽບ | 02/ຕລຊລ | 03 ທັນວາ 2014 |

| | | | | |
|---|---|---|---|---|
| 6 | ລະບຽບວ່າດ້ວຍການສະສາງ ແລະ ຊຳລະໃນການແລກປ່ຽນຊື້-ຂາຍຫຼັກຊັບຢູ່ຕະຫຼາດຫຼັກຊັບ | ລະບຽບ | 04/ຕລຊລ | 03 ທັນວາ 2014 |
| 7 | ລະບຽບວ່າດ້ວຍການຈົດທະບຽນຮຸ້ນໃນຕະຫຼາດຫຼັກຊັບລາວ | ລະບຽບ | 005/ຕລຊລ | 26 ພະຈິກ 2015 |
| 8 | ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ | ລະບຽບ | 008/ຕລຊລ | 27 ກັນຍາ 2018 |
| 9 | ລະບຽບວ່າດ້ວຍການຈົດທະບຽນພັນທະບັດລັດຖະບານ ແລະ ຮຸ້ນກູ້ໃນຕະຫຼາດຫຼັກຊັບລາວ | ລະບຽບ | 009/ຕລຊລ | 19 ທັນວາ 2018 |
| 10 | ລະບຽບວ່າດ້ວຍການດຳເນີນຕະຫຼາດ (ປັບປຸງ) | ລະບຽບ | 010/ຕລຊລ | 19 ທັນວາ 2018 |

❖ <u>ເອກະສານຊ້ອນທ້າຍທີ 4</u>

<u>ແຜນວາດ 1: ມູນຄ່າຕະຫຼາດຫຼັກຊັບລາວ (ຕື້ກີບ)</u>




ແຫຼ່ງຂໍ້ມູນ: ເວັບໄຊທ໌ຂອງ ຕະຫຼາດຫຼັກຊັບລາວ

ແຜນວາດ 2: ມູນຄ່າການຊື້-ຂາຍ ໃນຕະຫຼາດຫຼັກຊັບລາວ (ຕື້ກີບ)




ແຫຼ່ງຂໍ້ມູນ: ເວັບໄຊທ໌ຂອງ ຕະຫຼາດຫຼັກຊັບລາວ

ແຜນວາດ 3: ດັດຊະນີໃນຕະຫຼາດຫຼັກຊັບລາວ




ແຫຼ່ງຂໍ້ມູນ: ເວັບໄຊທ໌ຂອງ ຕະຫຼາດຫຼັກຊັບລາວ

ຕາຕະລາງ: ມູນຄ່າຕະຫຼາດ ແລະ ມູນຄ່າຕະຫຼາດທຽບໃສ່ GDP ຂອງບາງປະເທດ

| ລຳດັບ | ປະເທດ | ມູນຄ່າຕະຫຼາດ (ລ້ານໂດລາ) | ມູນຄ່າຕະຫຼາດ / GDP (%) |
|---|---|---:|---:|
| 1 | ສປ.ຈີນ | 8.515.504,38 | 59,37 |
| 2 | ຍີ່ປຸ່ນ | 6.191.073,29 | 128,80 |
| 3 | ຮ່ອງກົງ | 4.899.234,58 | 1.339,60 |
| 4 | ສ.ເກົາຫຼີ | 1.413.716,51 | 81,96 |
| 5 | ສິງກະໂປ | 697.271,33 | 187,40 |
| 6 | ໄທ | 569.228,32 | 104,72 |
| 7 | ອິນໂດເນເຊຍ | 523.321,86 | 46,80 |
| 8 | ມາເລເຊຍ | 403.957,38 | 110,80 |
| 9 | ຟີລິບປິນ | 275.302,19 | 73,10 |
| 10 | ສສ.ຫວຽດນາມ | 149.817,28 | 57,20 |
| 11 | ສປປ ລາວ | 1.083,72 | 5,86[2] |
| 12 | ກຳປູເຈຍ | 689,52 | 2,54 |
| 13 | ມຽນມາ | 381,17 | 0,48 |

ແຫຼ່ງຂໍ້ມູນ: ເວັບໄຊ ຂອງທະນາຄານໂລກ ປີ 2019

[2] ຕົວເລກນີ້ ແມ່ນສະເພາະຮຸ້ນທີ່ຈົດທະບຽນໃນ ຕລຊລ.

**ຄະນະຮັບຜິດຊອບຄົ້ນຄວ້າຮ່າງຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ**

**10 ປີ (2021-2030) ແລະ ວິໄສທັດຮອດປີ 2035 (ສະບັບປັບປຸງ)**

## I. ຄະນະຊີ້ນຳລວມ:

ທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ເປັນຫົວໜ້າຄະນະ;

ທ່ານ ນາງ ຟອງຈິນດາ ແສງສຸລິວົງ, ຫົວໜ້າ ສຄຄຊ, ເປັນຮອງຫົວໜ້າຄະນະ;

ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ, ເປັນຄະນະ;

ທ່ານ ສຽວສະຫວາດ ທິລະກຸນ, ຮອງຫົວໜ້າ ສຄຄຊ, ເປັນຄະນະ;

ທ່ານ ນາງ ວຽງດາລີ ສຸພານຸວົງ, ຮອງຫົວໜ້າ ສຄຄຊ, ເປັນຄະນະ;

ທ່ານ ໜູໄຊ ພູມສຸວັນ, ຮອງຫົວໜ້າກົມນະໂຍບາຍ, ເປັນຄະນະ;

ທ່ານ ເທບສະຫວັນ ກິຕິຍາວົງ, ຜູ້ອຳນວຍການບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ເປັນຄະນະ;

ທ່ານ ອານຸກອນ ສຸທຳມະວົງ, ຜູ້ອຳນວຍການບໍລິສັດຫຼັກຊັບລ້ານຊ້າງ ມະຫາຊົນ, ເປັນຄະນະ;

ທ່ານ ລິນ ລີ, ຜູ້ອຳນວຍການບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ, ເປັນຄະນະ;

ທ່ານ ສົມພົບ ສັກພັນພະນົມ, ຜູ້ອຳນວຍການບໍລິສັດຫຼັກຊັບ ເອພີເອັມ ລາວ ຈຳກັດ, ເປັນຄະນະ.

## II. ຄະນະອະນຸກຳມະການຊ່ວຍວຽກ:

ທ່ານ ນາງ ຟອງຈິນດາ ແສງສຸລິວົງ, ຫົວໜ້າ ສຄຄຊ, ເປັນຫົວໜ້າຄະນະ;

ທ່ານ ສຽວສະຫວາດ ທິລະກຸນ, ຮອງຫົວໜ້າ ສຄຄຊ, ເປັນຮອງຫົວໜ້າຄະນະ;

ທ່ານ ນາງ ວຽງດາລີ ສຸພານຸວົງ, ຮອງຫົວໜ້າ ສຄຄຊ, ເປັນຮອງຫົວໜ້າຄະນະ;

ທ່ານ ບຸນຈິງ ກອງຄຳ, ຫົວໜ້າພະແນກ ສຄຄຊ, ເປັນຄະນະ;

ທ່ານ ເອກະລາດ ສີສານ, ຫົວໜ້າພະແນກ, ສຄຄຊ, ເປັນຄະນະ;

ທ່ານ ບົວລຳພູ ຄຳມະນີວົງ, ຫົວໜ້າພະແນກ, ສຄຄຊ, ເປັນຄະນະ;

ທ່ານ ນາງ ອາລຸນນາ ສີວົງທອງ, ຫົວໜ້າພະແນກ, ສຄຄຊ, ເປັນຄະນະ;

ທ່ານ ວິລະເດດ ທອງວັນຄຳ, ຫົວໜ້າພະແນກ, ສຄຄຊ, ເປັນຄະນະ;

ທ່ານ ວັນນະສັກ ກອງວົງສາ, ຫົວໜ້າພະແນກ, ຕະຫຼາດຫຼັກຊັບລາວ, ເປັນຄະນະ;

ທ່ານ ທະນູສິດ ແສງມະນີພອນ, ຮອງຫົວໜ້າພະແນກ ສຄຄຊ, ເປັນຄະນະ;

ທ່ານ ນາງ ພິດສາຄອນ ສໍສະຫວັນ, ຮອງຫົວໜ້າພະແນກ, ສຄຄຊ, ເປັນຄະນະ;

ທ່ານ ນາງ ສຸພາພອນ ແສງລາດ, ຮອງຫົວໜ້າພະແນກ, ກົມນະໂຍບາຍເງິນຕາ ທຫລ, ເປັນຄະນະ;

ທ່ານ ສຸພົນ ຄ້າພອຍດີ, ຮອງຜູ້ອຳນວຍການໃຫຍ່ ບໍລິສັດຫຼັກຊັບ ເອັພີເອັມ ລາວ ຈຳກັດ, ເປັນຄະນະ;

ທ່ານ ນາງ ແສງລາວີ ວົງສາວັນທອງ, ຫົວໜ້າພະແນກ, ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ, ເປັນຄະນະ;

ທ່ານ ວຽງແກ້ວ ພົງສາ, ຮອງຫົວໜ້າພະແນກ, ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ, ເປັນຄະນະ;

ທ່ານ ພົງສະຫວັດ ລີນາມ, ຫົວໜ້າພະແນກ, ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ, ເປັນຄະນະ;

ທ່ານ ນາງ ປະກາຍແກ້ວ ວຽງວິໄລ, ວິຊາການ, ສຄຄຊ, ເປັນຄະນະ.

## III. <u>ພະນັກງານຊ່ວຍວຽກ:</u>

ທ່ານ ພູໄຊ ຫຼວງມູນນິນທອນ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ນາງ ຈິນດາວັນ ພົມມະບຸດ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ນາງ ສຸດສະດາ ຕົ່ນທອງໃສ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ໄພວັນ ແສງພະຈັນ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ສຸລິວັນ ຈັນທະວົງ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ນາງ ບົວພັນ ອິງຮັກນຸດ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ສອນໄຊ ວົງພິເດດ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ສຸລິຍາ ໝື່ນວິເສດ, ຮອງຫົວໜ້າພະແນກ, ສຄຄຊ;

ທ່ານ ນາງ ເພັດວິໄລ ວັນນະບົວທອງ, ວິຊາການ, ສຄຄຊ;

ທ່ານ ນາງ ພອນສະຫວັນ ພອນປະເສີດ, ວິຊາການ, ສຄຄຊ.

| ລ/ດ | ບັນດາແຜນງານ, ໂຄງການ ແລະ ແຜນວຽກ | ແຜນຈັດຕັ້ງປະຕິບັດ 2021 | 2022 | 2023 | 2024 | 2025 | ພາກສ່ວນຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|---|---|---|
| I | ແຜນງານ: ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ຄຸ້ມຄອງວຽກງານຫຼັກຊັບ | | | | | | | |
| 1.1 | ໂຄງການ: ສ້າງຄວາມເຂັ້ມແຂງ ດ້ານກົນໄກ ແລະ ເຄື່ອງມື ໃນການຄຸ້ມຄອງວຽກງານຫຼັກຊັບ | | | | | | | |
| 1.1.1 | ແຜນວຽກ: ຄົ້ນຄວ້າກົນໄກໃນການຄຸ້ມຄອງ, ຕິດຕາມ, ກວດກາ ຕລຊລ ໃຫ້ຮັດກຸມ, ທົ່ວເຖິງ ແລະ ທັນເວລາ | | | | | | | |
| | ໜ້າວຽກ 1: ຄົ້ນຄວ້າການປັບປຸງລະບົບວິເຄາະ ແລະ ລາຍງານ ການຊື້ ຂາຍ ຮຸ້ນຂອງ ຕລຊລ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | ໜ້າວຽກ 2: ຄົ້ນຄວ້າການສ້າງລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງ ຕລຊລ (ໃບດຸ່ນດ່ຽງ, ໃບສະຫຼຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງຂອງທຶນ) | | | | | | | |
| 1.1.2 | ແຜນວຽກ: ຄົ້ນຄວ້າການປັບປຸງລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຫຼັກຊັບ | | | | | | | |
| | ໜ້າວຽກ 1: ຄົ້ນຄວ້າການປັບປຸງລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຫຼັກຊັບ (ໃບດຸ່ນດ່ຽງ, ໃບສະຫຼຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງຂອງທຶນ), ອັດຕາສ່ວນຄວາມພຽງພໍຂອງທຶນ (NCR), ການຕິດຕາມ ແລະ ປະເມີນຄວາມສ່ຽງຂອງບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk Based Supervision ) ແລະ ການຕິດຕາມ, ກວດກາ ແລະ ປະເມີນ AML ສຳລັບບໍລິສັດຫຼັກຊັບທີ່ເຄື່ອນໄຫວບໍລິການເຕັມຮູບແບບ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| 1.1.3 | ແຜນວຽກ: ຄົ້ນຄວ້າການປັບປຸງລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຈົດທະບຽນ | | | | | | | |
| | ໜ້າວຽກ 1: ຄົ້ນຄວ້າການປັບປຸງລະບົບຮັບ-ສົ່ງ ລາຍງານຂອງບໍລິສັດຈົດທະບຽນ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |

| | | | | | | | | | |
|---|---|---|---|---|---|---|---|---|---|
| | 1.1.4 | **ແຜນວຽກ: ສ້າງຄວາມເຂັ້ມແຂງ ໃຫ້ແກ່ບຸກຄະລາກອນສໍາລັບຄຸ້ມຄອງວຽກງານຫຼັກຊັບ** | | | | | | | |
| | | ໜ້າວຽກ 1: ຊຸກຍູ້ ແລະ ກໍ່ສ້າງພະນັກງານຄຸ້ມຄອງວຽກງານຫຼັກຊັບ ໃຫ້ເຂັ້ມແຂງທາງດ້ານວຽກງານວິຊາສະເພາະ, ການຄຸ້ມຄອງວຽກງານຫຼັກຊັບ, ມີຄວາມຮູ້ ແລະ ຊ່ຽວຊານສະເພາະດ້ານ ຄື: ດ້ານບັນຊີ, ເສດຖະສາດ, ບໍລິຫານທຸລະກິດ, ການເງິນ-ການທະນາຄານ, ການປະເມີນມູນຄ່າຊັບສິນ, ຫຼັກສູດນັກວິຊາຊີບທາງການເງິນ ແລະ ການລົງທຶນ, ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ, ຫຼັກສູດນັກວິຊາຊີບຜູ້ບໍລິຫານກອງທຶນ, ຫຼັກສູດນັກວິຊາຊີບດ້ານບັນຊີ, ການສືບສວນ-ສອບສວນວຽກງານຫຼັກຊັບ, ວຽກງານໄອທີ, ພາສາຕ່າງປະເທດ ແລະ ວຽກງານດ້ານຕ່າງໆທີ່ຕິດພັນກັບຫຼັກຊັບ ໂດຍການນໍາສົ່ງພະນັກງານ ເຂົ້າຮ່ວມຝຶກອົບຮົມ, ສໍາມະນາ ຢູ່ພາຍໃນ ແລະ ຕ່າງປະເທດ ດ້ວຍການນໍາສົ່ງພະນັກງານໄປ:<br>**o ກໍ່ສ້າງບຸກຄະລາກອນ ໄລຍະສັ້ນ ແລະ ໄລຍະຍາວ:**<br>- ຝຶກອົບຮົມໄລຍະສັ້ນ ຢູ່ພາຍໃນປະເທດ ຢ່າງໜ້ອຍ 10 ເທື່ອຄົນຕໍ່ປີ;<br>- ຝຶກອົບຮົມໄລຍະສັ້ນ ຢູ່ຕ່າງປະເທດ ຢ່າງໜ້ອຍ 20 ເທື່ອຄົນຕໍ່ປີ;<br>- ຍົກລະດັບການສຶກສາວິຊາສະເພາະ ຢູ່ພາຍໃນປະເທດ ຢ່າງໜ້ອຍ 2 ເທື່ອຄົນຕໍ່ 5 ປີ;<br>- ຍົກລະດັບການສຶກສາວິຊາສະເພາະ ຢູ່ຕ່າງປະເທດ ຢ່າງໜ້ອຍ 1 ຄົນຕໍ່ປີ;<br>**o ກໍ່ສ້າງຊ່ຽວຊານສະເພາະດ້ານ:**<br>- ນັກວິຊາຊີບທຸລະກິດຫຼັກຊັບ (ນາຍໜ້າຊື້ຂາຍຫຼັກຊັບ, ທີ່ປຶກສາທາງການເງິນ, ທີ່ປຶກສາທາງດ້ານການລົງທຶນ, ນັກວິເຄາະຫຼັກຊັບ) ຢ່າງໜ້ອຍ 2 ເທື່ອຄົນຕໍ່ປີ;<br>- ນັກວິຊາຊີບຜູ້ບໍລິຫານກອງທຶນ ຢ່າງໜ້ອຍ 1 ຄົນຕໍ່ 5 ປີ;<br>- ນັກວິຊາຊີບດ້ານບັນຊີ ແລະ ກວດສອບ ຢ່າງໜ້ອຍ 5 ເທື່ອຄົນຕໍ່ 5 ປີ;<br>- ນັກວິຊາຊີບດ້ານການປະເມີນມູນຄ່າຊັບສິນ ຢ່າງໜ້ອຍ 1 ເທື່ອຄົນຕໍ່ 5 ປີ;<br>- ຊ່ຽວຊານດ້ານໄອທີ (ດ້ານຂຽນໂປຣແກຣມ, ຖານຂໍ້ມູນ, ດ້ານລະບົບເຄືອຂ່າຍ ແລະ ຄວາມປອດໄພ ແລະ ການສະໜັບສະໜູນເຕັກນິກຄອມພິວເຕີ ແລະ ສ້ອມແປງ) ຢ່າງໜ້ອຍ 3 ເທື່ອຄົນຕໍ່ 5 ປີ;<br>- ຊ່ຽວຊານອອກແບບ ແລະ ຕັດຕໍ່ ຂັ້ນສູງ ຢ່າງໜ້ອຍ 2 ເທື່ອຄົນຕໍ່ 5 ປີ;<br>(ໝາຍເຫດ: ອາດເຂົ້າຮ່ວມກັບທີ່ ຫຼື ອອນລາຍ) | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |

| | | | | | | | | | |
|---|---|---|---|---|---|---|---|---|---|
| 1.2 | ໂຄງການ: ພັດທະນາລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານ | | | | | | | | ແຜນວຽກ 9.4.1 ຂອງ ທຫລ |
| | 1.2.1 | ແຜນວຽກ: ພັດທະນາລະບົບເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານຂອງ ສຄຄຊ | | | | | | | |
| | | ໜ້າວຽກ 1: ສ້າງ ແລະ ປັບປຸງ ລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານ ເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງວຽກງານຫຼັກຊັບຂອງ ສຄຄຊ ຢ່າງໜ້ອຍປີລະ 1 ລະບົບ | | | | | | ທຫລ, ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 1.1: ຄົ້ນຄວ້າປັບປຸງ ລະບົບບັນຊີຂອງ ສຄຄຊ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 1.2: ຄົ້ນຄວ້າປັບປຸງ ລະບົບເວັບໄຊທ໌ ຂອງ ຄຄຊ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 1.3: ປັບປຸງລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງບໍລິສັດຫຼັກຊັບ (ໃບດຸ່ນດ່ຽງ, ໃບສະຫຼຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງຂອງທຶນ), ອັດຕາສ່ວນຄວາມພຽງພໍຂອງທຶນ (NCR) ແລະ ການຕິດຕາມ ແລະ ປະເມີນຄວາມສ່ຽງຂອງບໍລິສັດຫຼັກຊັບ ຕາມແບບຕີລາຄາຄວາມສ່ຽງ (Risk Based Supervision ) | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 1.4: ປັບປຸງ ລະບົບວິເຄາະ ແລະ ລາຍງານ ການຊື້ ຂາຍ ຮຸ້ນຂອງ ຕລຊລ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 1.5: ສ້າງລະບົບຕິດຕາມ ແລະ ວິເຄາະເອກະສານລາຍງານການເງິນຂອງ ຕລຊລ (ໃບດຸ່ນດ່ຽງ, ໃບສະຫຼຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງຂອງທຶນ) | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 1.6: ປັບປຸງລະບົບຮັບ-ສົ່ງ ລາຍງານຂອງບໍລິສັດຈົດທະບຽນ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| 1.3 | ໂຄງການ: ຮ່ວມມືສາກົນ | | | | | | | | ແຜນງານ X ຂອງ ທຫລ |
| | 1.3.1 | ແຜນວຽກ: ການເຂົ້າເປັນສະມາຊິກຂອງ IOSCO | | | | | | | |
| | | ໜ້າວຽກ 1: ກະກຽມເງື່ອນໄຂຕ່າງໆ ເພື່ອໃຫ້ສາມາດລົງນາມໃສ່ MMOU (A signatory) ຂອງອົງການ IOSCO | | | | | | (ສຄຄຊ, ທຫລ, ກະຊວງອຸດສະຫະກຳ ແລະ ການຄ້າ, ກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສານ | |
| | 1.3.2 | ແຜນວຽກ: ການຮ່ວມມືກັບການຈັດຕັ້ງສາກົນ | | | | | | | |
| | | ໜ້າວຽກ 1: ຍາດແຍ່ງ ແລະ ຈັດຕັ້ງປະຕິບັດການຮ່ວມມືກັບການຈັດຕັ້ງສາກົນ ເຊັ່ນ: ທະນາຄານໂລກ (WB), ອົງການການເງິນສາກົນ (IFC), ທະນາຄານພັດທະນາອາຊີ (ADB) ຕາມການຕົກລົງກັນໃນແຕ່ລະໄລຍະ ເພື່ອຍາດແຍ່ງການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ຖອດຖອນບົດຮຽນ ແລະ ກໍ່ສ້າງບຸກຄະລາກອນ, ຜະລິດຕະພັນຫຼັກຊັບ, ການປັບປຸງວຽກງານການຄຸ້ມຄອງບໍລິຫານ (CG) ແລະ ການຂ້າມຜ່ານສູ່ການຈັດຕັ້ງປະຕິບັດມາດຕະຖານລາຍງານການເງິນສາກົນ (IFRS) ແລະ ອື່ນໆ | | | | | | ສຄຄຊ | |

| | | | | | | | | |
|---|---|---|---|---|---|---|---|---|
| 1.3.3 | ແຜນວຽກ: ການຮ່ວມມືຫຼາຍຝ່າຍ (ການເຊື່ອມໂຍງຕະຫຼາດທຶນ ແລະ ຮ່ວມມືໃນພາກພື້ນອາຊຽນ ແລະ 5 ປະເທດເຂດອ່າງແມ່ນ້ຳຂອງ) | | | | | | | |
| | ໜ້າວຽກ 1: ສຶກສາຄົ້ນຄວ້າຄວາມເປັນໄປໄດ້ໃນການມີສ່ວນຮ່ວມໃນໂຄງການຕ່າງໆຂອງ ASEAN (ASEAN Initiatives) ໂດຍເລີ່ມຈາກໂຄງການທີ່ມີຄວາມເປັນໄປໄດ້ກ່ອນ | | | | | | ສຄຄຊ | |
| | ໜ້າວຽກ 1.1: ຄົ້ນຄວ້າກ່ຽວກັບ ມາດຕະຖານການເປີດເຜີຍຂໍ້ມູນ, ການຮັບຮູ້ຮ່ວມກັນທາງດ້ານໜັງສືຊວນຊື້ ແລະ ຄົ້ນຄວ້າກ່ຽວກັບການຈົດທະບຽນຄັ້ງທີ 2 ຢູ່ຕະຫຼາດຫຼັກຊັບລະຫວ່າງປະເທດອາຊຽນ ສຳລັບປະເພດທຶນ ແລະ ໜີ້ ແລະ ອື່ນໆ ພາຍໃຕ້ວຽກງານຂອງໜ່ວຍງານວິຊາການ A (Working Group A: ASEAN Disclosure Framework) ພາຍໃຕ້ກອບກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ACMF) | | | | | | | |
| | ໜ້າວຽກ 1.2: ຄົ້ນຄວ້າກ່ຽວກັບການອອກຈຳໜ່າຍກອງທຶນ ເພື່ອການລົງທຶນຂ້າມແດນໃນຂອບອາຊຽນ ພາຍໃຕ້ວຽກງານຂອງໜ່ວຍງານວິຊາການ B (Working Group B: ASEAN Collective Investment Sheme Framework) ພາຍໃຕ້ກອບກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ACMF) | | | | | | | |
| | ໜ້າວຽກ 1.3: ຄົ້ນຄວ້າກ່ຽວກັບການຄຸ້ມຄອງບໍລິຫານໃນກອບອາຊຽນ ພາຍໃຕ້ວຽກງານຂອງໜ່ວຍງານຄົ້ນຄວ້າວຽກງານບໍລິຫານ (Corporate Governance Task Force) ພາຍໃຕ້ກອບກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ACMF) | | | | | | | |
| | ໜ້າວຽກ 1.4: ຄົ້ນຄວ້າກ່ຽວກັບວຽກງານຂອງໜ່ວຍງານຊຸກຍູ້ການຮັບຮູ້ການເຄື່ອນໄຫວຂອງນັກວິຊາຊີບທຸລະກິດຫຼັກຊັບ ໃນການໃຫ້ບໍລິການວຽກງານຫຼັກຊັບລະຫວ່າງປະເທດ (Professional Mobility Framework) ພາຍໃຕ້ກອບກອງປະຊຸມພັດທະນາຕະຫຼາດທຶນອາຊຽນ (ACMF) | | | | | | | |
| | ໜ້າວຽກ 1.5: ຄົ້ນຄວ້າວຽກງານການເງິນແບບຍືນຍົງຂອງໜ່ວຍງານວິຊາການ ການເງິນແບບຍືນຍົງ (Sustainable Finance Working Group) ແລະ ໜ່ວຍງານຮ່ວມການເງິນແບບຍືນຍົງ (Joint Sustainable Working Group) | | | | | | | |
| | ໜ້າວຽກ 1.6: ຄົ້ນຄວ້າວຽກງານຂອງ ຄະນະກຳມະການເປີດເສລີການບໍລິການທາງດ້ານການເງິນ (WC-FSL) ຕິດພັນກັບວຽກງານຕະຫຼາດທຶນ | | | | | | | |
| | ໜ້າວຽກ 1.7: ຄົ້ນຄວ້າວຽກງານຂອງ ຄະນະກຳມະການເປີດເສລີບັນຊີທຶນ (WC-CAL) ຕິດພັນກັບວຽກງານຕະຫຼາດທຶນ | | | | | | | |
| | ໜ້າວຽກ 1.8: ຄົ້ນຄວ້າວຽກງານຂອງ ຄະນະກຳມະການພັດທະນາຕະຫຼາດທຶນ (WC-CMD) | | | | | | | |
| | ໜ້າວຽກ 1.9: ຄົ້ນຄວ້າກ່ຽວກັບໂຄງການອອກຈຳໜ່າຍພັນທະບັດຫຼາຍສະກຸນເງິນ ໃນກອບອາຊຽນ+3 (ABMIF) | | | | | | | |
| | ໜ້າວຽກ 1.10: ຄົ້ນຄວ້າກ່ຽວກັບການສ້າງຕັ້ງກອງທຶນ ACMEC ແລະ ກອງທຶນພື້ນຖານໂຄງລ່າງ ACMEC | | | | | | | |
| | ໜ້າວຽກ 2: ຍາດແຍ່ງ ແລະ ຈັດຕັ້ງປະຕິບັດການຮ່ວມມືຫຼາຍຝ່າຍ ໃນພາກພື້ນອາຊຽນ ແລະ 5 ປະເທດ ເຂດອ່າງແມ່ນ້ຳຂອງຕາມການຕົກລົງກັນ ເພື່ອຄຸ້ມຄອງ ແລະ ພັດທະນາວຽກງານຕະຫຼາດທຶນໃນແຕ່ລະໄລຍະ | | | | | | | |

| | | | | | | | | |
|---|---|---|---|---|---|---|---|---|
| 1.3.4 | ແຜນວຽກ: ການຮ່ວມມືສອງຝ່າຍ ແລະ ອື່ນໆ | | | | | | | |
| | ໜ້າວຽກ 1: ຍາດແຍ່ງ ແລະ ຈັດຕັ້ງປະຕິບັດການຮ່ວມມືສອງຝ່າຍ ກັບປະເທດເພື່ອນມິດຍຸດທະສາດ ແລະ ຄົ້ນຄວ້າຂະຫຍາຍການຮ່ວມມືສອງຝ່າຍ ກັບປະເທດທີ່ມີຄວາມຈຳເປັນ ເປັນຕົ້ນ ຄຄຊ ສສ.ຫວຽດນາມ, ຄຄຊ ສປ.ຈີນ, ກລຕ ໄທ, ຄຄຊ ຍີ່ປຸ່ນ, ຄຄຊ ສ.ເກົາຫຼີ, ສະຖານທູດລຸກຊຳບວກ, CPA Australia, ສະຖາບັນ IOD, ສະຖາບັນຄົ້ນຄວ້າ ໂນມູຣະ ແລະ ອື່ນໆ ເພື່ອຍາດແຍ່ງການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ຖອດຖອນບົດຮຽນ ແລະ ກໍ່ສ້າງບຸກຄະລາກອນ | | | | | | ສຄຄຊ | |
| | ໜ້າວຽກ 2: ຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນຮອນ ແລະ ຈັດຕັ້ງປະຕິບັດການຮ່ວມມືກັບ ສະຖານທູດລຸກຊຳບວກ ກ່ຽວກັບໂຄງການສະໜັບສະໜູນການຮ່ວມມື 3 ຝ່າຍ ໃນຂະແໜງການຕະຫຼາດທຶນຂອງ ສປປ ລາວ, ສສ.ຫວຽດນາມ ແລະ ລຸກຊຳບວກ (LAO/032) ເພື່ອກະກຽມເສັ້ນທາງສູ່ການຈົດທະບຽນໃນຕະຫຼາດຫຼັກຊັບສຳລັບບໍລິສັດເປົ້າໝາຍ, ຄວາມຮັບຮູ້ຂອງປະຊາຊົນກ່ຽວກັບວຽກງານຕະຫຼາດທຶນ ແລະ ການລົງທຶນ ແລະ ການສ້າງນັກວິຊາຊີບທຸລະກິດຫຼັກຊັບ. | | | | | | ສຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | ໜ້າວຽກ 2.1: ກະກຽມເສັ້ນທາງສູ່ການຈົດທະບຽນໃນຕະຫຼາດຫຼັກຊັບສຳລັບບໍລິສັດເປົ້າໝາຍ ລວມທັງ ສ້າງມາດຕະຖານການຈົດທະບຽນ ແລະ ແຜນຈັດຕັ້ງປະຕິບັດການອອກຈຳໜ່າຍຫຼັກຊັບ, ກະກຽມຄວາມພ້ອມໃຫ້ແກ່ລັດວິສາຫະກິດໃນການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ | | | | | | ສຄຄຊ, ຕລຊລ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ | ໜ້າວຽກລະອຽດກຳນົດຢູ່ໃນ ຂໍ້ 4.1.1 ແລະ 4.1.2 |
| | ໜ້າວຽກ 2.2: ເພີ່ມຄວາມຮັບຮູ້ຂອງປະຊາຊົນກ່ຽວກັບວຽກງານຕະຫຼາດທຶນ ແລະ ການລົງທຶນ ລວມທັງ ການພັດທະນາເນື້ອໃນ ແລະ ຊ່ອງທາງເຜີຍແຜ່ຂໍ້ມູນໃຫ້ແກ່ຜູ້ລົງທຶນ ເປັນຕົ້ນ ສ້າງກາຕູນເອນິເມຊັນ, ວິດີໂອສັ້ນ, ສະປອດໂຄສະນາ. ຜ່ານຊ່ອງທາງ ເຟສບຸກ, ໂທລະພາບ, ວິທະຍຸ ແລະ ການຈັດງານໃຫ້ຄວາມຮູ້ຜູ້ລົງທຶນ | | | | | | ສຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ | ໜ້າວຽກລະອຽດກຳນົດຢູ່ໃນ ຂໍ້ 5.2.2 |
| | ໜ້າວຽກ 2.3: ສ້າງນັກວິຊາຊີບທຸລະກິດຫຼັກຊັບ: ການສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ການສ້າງຄູຝຶກ, ການສະໜອງເຕັກນິກອຸປະກອນສຳລັບຫ້ອງຝຶກອົບຮົມ | | | | | | ສຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ | ໜ້າວຽກລະອຽດກຳນົດຢູ່ໃນ ຂໍ້ 5.2.1 ແລະ 5.2.3 |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| II | ແຜນງານສ້າງ ແລະ ປັບປຸງນິຕິກຳ ແລະ ນະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ | | | | | | | | | ແຜນວຽກທີ 4.1.3 ຂອງ ທຫລ |
| 2.1 | ໂຄງການ: ສ້າງ ແລະ ປັບປຸງນິຕິກຳກ່ຽວກັບວຽກງານຫຼັກຊັບ | | | | | | | | | |
| | 2.1.1 | ແຜນວຽກ: ສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ | | | | | | | | |
| | | ໜ້າວຽກ 1: ສຶກສາຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ໃຫ້ໄດ້ຢ່າງໜ້ອຍ 20 ສະບັບ | | | | | | ສຄຄຊ, ທຫລ, ກະຊວງຍຸຕິທຳ, ທສນຍ | ໃນນີ້ໃຫ້ປະກອບມີນິຕິກຳກ່ຽວກັບການຊື້ຮຸ້ນຄືນ (Buy back) |
| 2.2 | ໂຄງການ: ນະໂຍບາຍມະຫາພາກກ່ຽວກັບວຽກງານຫຼັກຊັບ | | | | | | | | | |
| | 2.2.1 | ແຜນວຽກ: ຄົ້ນຄວ້ານະໂຍບາຍມະຫາພາກ ກ່ຽວກັບວຽກງານຫຼັກຊັບ ແລະ ຊຸກຍູ້ການແກ້ໄຂຂໍ້ຄົງຄ້າງດ້ານມະຫາພາກ ທີ່ເປັນສິ່ງກີດຂວາງການພັດທະນາຕະຫຼາດທຶນ | | | | | | | | |
| | | ໜ້າວຽກ 1: ຄົ້ນຄວ້ານະໂຍບາຍ ອາກອນ ແລະ ບໍ່ແມ່ນອາກອນ ສຳລັບຜູ້ລະດົມທຶນ ແລະ ຜູ້ລົງທຶນ ເພື່ອສະເໜີລັດຖະບານພິຈາລະນາ | | | | | | ສຄຄຊ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງ ສປປ ລາວ, ກະຊວງອຸດສາຫະກຳ ແລະ | |
| | | ໜ້າວຽກ 1.1 ນະໂຍບາຍອາກອນລາຍໄດ້ ສຳລັບບໍລິສັດຈົດທະບຽນ | | | | | | ສຄຄຊ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 1.2: ນະໂຍບາຍອາກອນລາຍໄດ້ ແລະ ອາກອນມູນຄ່າເພີ່ມ ສຳລັບກອງທຶນເພື່ອການລົງທຶນ, ກອງທຶນເພື່ອການລົງທຶນໃນບໍລິສັດ (PE Fund), ທຸລະກິດຮ່ວມລົງທຶນ (Venture Capital Fund) ແລະ ຜູ້ລົງທຶນ | | | | | | ສຄຄຊ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 1.3: ນະໂຍບາຍອາກອນສຳລັບບໍລິສັດອອກຈຳໜ່າຍຮຸ້ນກູ້ ແລະ ຜູ້ລົງທຶນໃນຮຸ້ນກູ້, | | | | | | ສຄຄຊ, ຕລຊລ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 1.4: ນະໂຍບາຍການປະຕິຮູບລັດວິສາຫະກິດ ເພື່ອອອກຈຳໜ່າຍຫຼັກຊັບ | | | | | | ສຄຄຊ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 1.5: ນະໂຍບາຍດຶງດູດບັນດາໂຄງການລົງທຶນໂດຍກົງຈາກຕ່າງປະເທດຢູ່ ສປປ ລາວ ເພື່ອລະດົມທຶນຜ່ານຕະຫຼາດທຶນ | | | | | | ສຄຄຊ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 1.6: ນະໂຍບາຍອັດຕາດອກເບ້ຍ ເພື່ອຊຸກຍູ້ການພັດທະນາຕະຫຼາດພັນທະບັດ | | | | | | ສຄຄຊ, ທະນາຄານແຫ່ງ ສປປ ລາວ, ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 1.7: ການດຸ່ນດ່ຽງເງິນຕາໃນການລົງທຶນໃນຫຼັກຊັບ | | | | | | ສຄຄຊ, ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 2: ຊຸກຍູ້ອີງການຄຸ້ມຄອງພາກລັດທີ່ກ່ຽວຂ້ອງ ເຂັ້ມງວດ ຊຸກຍູ້ ການຖືບັນຊີ, ການປະຕິບັດມາດຕະການແກ້ໄຂ ແລະ ອັດຊ່ອງຫວ່າງການແຈ້ງເສຍພາສີ, ອາກອນ ແລະ ການລັກລອບນຳເຂົ້າສິນຄ້າບໍ່ຖືກຕ້ອງຕາມລະບຽບການ ລວມທັງ ການປະຕິບັດມາດຕະການຕໍ່ຜູ້ລະເມີດ ຢ່າງເຂັ້ມງວດ | | | | | | ສຄຄຊ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | 2.3 | | ໂຄງການ: ການສືບສວນ-ສອບສວນ | | | | | | | |
| | | 2.3.1 | ແຜນວຽກ: ຄົ້ນຄວ້າມາດຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບວຽກງານຫຼັກຊັບ | | | | | | ສຄຄຊ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການ, ສານປະຊາຊົນສູງສຸດ ແລະ ພາກສ່ວນກ່ຽວຂ້ອງ | |
| | | | ໜ້າວຽກ 1: ຄົ້ນຄວ້າມາດຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບວຽກງານຫຼັກຊັບ | | | | | | | |
| | | | ໜ້າວຽກ 2: ແຕ່ງຕັ້ງເຈົ້າໜ້າທີ່ສືບສວນ-ສອບສວນ ກ່ຽວກັບວຽກງານຫຼັກຊັບ ເພື່ອເຄື່ອນໄຫວວຽກງານຫຼັກຊັບ | | | | | | | |
| III | | | ແຜນງານ: ສ້າງຄວາມເຂັ້ມແຂງພື້ນຖານໂຄງລ່າງຕະຫຼາດທຶນ | | | | | | | ໂຄງການ 9.3 ຂອງ ທຫລ |
| | 3.1 | | ໂຄງການ: ພັດທະນາຕະຫຼາດຫຼັກຊັບລາວ | | | | | | | |
| | | 3.1.1 | ແຜນວຽກ: ສ້າງຄວາມເຂັ້ມແຂງຂອງຕະຫຼາດຫຼັກຊັບລາວ | | | | | | | |
| | | | ໜ້າວຽກ 1: ແຍກພາລະບົດບາດ ແລະ ໜ້າທີ່ ລະຫວ່າງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ ໃຫ້ລະອຽດຈະແຈ້ງ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | ສຳເລັດ ການເຊັນ MOU ລະຫວ່າງ ສຄຄຊ ແລະ ຕລຊລ ປີ 2021 |
| | | | ໜ້າວຽກ 2: ຊຸກຍູ້ປັບປຸງໂຄງສ້າງຜູ້ຖືຮຸ້ນຂອງ ຕລຊລ | | | | | | | |
| | | | ໜ້າວຽກ 3.1: ສຶກສາ ແລະ ຄົ້ນຄວ້າກ່ຽວກັບເງື່ອນໄຂການເປັນອົງກອນຄຸ້ມຄອງຕົນເອງ (Self Regilatory Organization : SRO) | | | | | | | ສຳເລັດຄົ້ນຄວ້າປີ 2021 |
| | | | ໜ້າວຽກ 3.2: ຊຸກຍູ້ ຕລຊລ ເປັນອົງການຄຸ້ມຄອງຕົນເອງເທື່ອລະບາດກ້າວ ເພື່ອໃຫ້ບັນລຸໃນປີ 2030 | | | | | | | |
| | | | ໜ້າວຽກ 3.3: ສຶກສາຄົ້ນຄວ້າຫຼັກການປະເມີນການເປັນ SRO ຂອງ ຕລຊລ | | | | | | | |
| | | | ໜ້າວຽກ 3.4: ກະກຽມຄວາມພ້ອມໃນການປະເມີນການເປັນ SRO ຂອງ ຕລຊລ | | | | | | | |
| | | | ໜ້າວຽກ 4: ຄົ້ນຄວ້າສ້າງ ແລະ ປັບປຸງ ກົນໄກ, ເງື່ອນໄຂ ເພື່ອຮອງຮັບການລະດົມທຶນຂອງວິສາຫະກິດທີ່ບໍ່ຄົບເງື່ອນໄຂໃນກະດານຫຼັກ (Main Board), ກະດານຮອງ (People's Alternative Market: PAM) | | | | | | | ມີກະດານຮອງຮັບໃນການຊື້-ຂາຍ |
| | | | ໜ້າວຽກ 5: ສຶກສາ ແລະ ຄົ້ນຄວ້າກ່ຽວກັບການຖອນຈົດທະບຽນ ຈາກຕະຫຼາດຫຼັກຊັບຂອງຕ່າງປະເທດ ແລະ ກຳນົດຮູບແບບກ່ຽວກັບການຖອນຈົດທະບຽນ ຈາກ ຕລຊລ | | | | | | | |
| | | | ໜ້າວຽກ 6: ສ້າງກົນໄກ ແລະ ເງື່ອນໄຂ ເພື່ອຮອງຮັບ ການຖອນ ແລະ ຫຼັງຖອນ ຈົດທະບຽນຮຸ້ນ (Delisting) ອອກຈາກ ຕລຊລ | | | | | | | ນິຕິກຳຂອງ ສຄຄຊ |
| | | | ໜ້າວຽກ 7: ຊຸກຍູ້ ຕລຊລ ສ້າງກົນໄກ ແລະ ເງື່ອນໄຂ ເພື່ອຮອງຮັບ ການຖອນຈົດທະບຽນຮຸ້ນ (Delisting) ອອກຈາກ ຕລຊລ | | | | | | | ນິຕິກຳຂອງ ຕລຊລ |

| | | | | | | | | |
|---|---|---|---|---|---|---|---|---|
| | ໜ້າວຽກ 8.1: ຊຸກຍູ້ຄົ້ນຄວ້າປັບປຸງ ແລະ ພັດທະນາ ລະບົບເຕັກໂນໂລຊີ-ຂໍ້ມູນຂ່າວສານ ເພື່ອຮອງຮັບຜະລິດຕະພັນໃໝ່ ເຊັ່ນ: ລະບົບສົ່ງຄຳສັ່ງຜ່ານມືຖື (Mobile App), ລະບົບເຊື່ອມຕໍ່ທະນາຄານຕົວແທນເພື່ອການຊຳລະ (Multiple Banklink), ລະບົບເປີດບັນຊີອອນລາຍ ແລະ ອື່ນໆ | | | | | | | |
| | ໜ້າວຽກ 8.2: ຊຸກຍູ້ການປັບທົ່ວໜ່ວຍພັນທະບັດຈາກ 1.000.000 ກີບ/ໜ່ວຍ ມາເປັນ 100.000 ກີບ/ໜ່ວຍ | | | | | | | |
| | ໜ້າວຽກ 9: ຊຸກຍູ້ຄົ້ນຄວ້າ ແລະ ສ້າງລະບົບຕິດຕາມການຊື້-ຂາຍຫຼັກຊັບ ທີ່ບໍ່ຍຸຕິທຳ (Market Surveillance) | | | | | | | |
| | ໜ້າວຽກ 10: ຊຸກຍູ້ສ້າງລະບົບສຳຮອງຂໍ້ມູນຂອງຕະຫຼາດຫຼັກຊັບ | | | | | | | |
| | ໜ້າວຽກ 11: ຊຸກຍູ້ສ້າງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບແຕ່ລະໄລຍະ | | | | | | | |
| | ໜ້າວຽກ 12: ຊຸກຍູ້ກໍ່ສ້າງພະນັກງານໃຫ້ເຂັ້ມແຂງທາງດ້ານວຽກງານຫຼັກຊັບ, ມີຄວາມຮູ້ ແລະ ຊ່ຽວຊານສະເພາະດ້ານ | | | | | | | |
| | ໜ້າວຽກ 13: ຊຸກຍູ້ການເສີມຂະຫຍາຍການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ທັງພາຍໃນ ແລະ ຕ່າງປະເທດ | | | | | | ສຄຄຊ ,ຕລຊລ, ບໍລິສັດຫຼັກຊັບ ແລະ ທະນາຄານຕົວແທນ ເພື່ອການຊຳລະ | |
| | ໜ້າວຽກ 14: ຊຸກຍູ້ສ້າງ ແລະ ປັບປຸງນິຕິກຳ ໃຫ້ເປັນລະບົບຄົບຊຸດ | | | | | | | |
| | ໜ້າວຽກ 15: ຊຸກຍູ້ປັບປຸງກົນໄກການຄຸ້ມຄອງບໍລິຫານພາຍໃນ ໃຫ້ມີປະສິດທິຜົນ | | | | | | | |
| | ໜ້າວຽກ 16: ຊຸກຍູ້ ຕລຊລ ເພີ່ມຜະລິດຕະພັນໃນ ຕລຊລ ໃຫ້ມີຄວາມຫຼາກຫຼາຍ ແລະ ປັບປຸງການບໍລິການ ໃຫ້ດີຂຶ້ນ ເປັນຕົ້ນແມ່ນ ການເປີດບັນຊີເງິນຝາກ ແລະ ບັນຊີຫຼັກຊັບ, ການໂອນເງິນ ເປັນຕົ້ນ ມີກົນໄກຮອງຮັບຜະລິດຕະພັນໃໝ່, ມີລະບົບເປີດບັນຊີອອນລາຍ, ມີລະບົບການເຊື່ອມຕໍ່ຫຼາຍທະນາຄານຕົວແທນເພື່ອການຊຳລະ | | | | | | | |
| | ໜ້າວຽກ 17: ຊຸກຍູ້ປັບປຸງແກ້ໄຂບັນຫາສະພາບຄ່ອງ ຂອງ ຕລຊລ | | | | | | | |
| | ໜ້າວຽກ 18: ສູ້ຊົນໃຫ້ມູນຄ່າການຊື້-ຂາຍໃນຕະຫຼາດຫຼັກຊັບເພີ່ມຂຶ້ນ ຢ່າງໜ້ອຍ 5% ຕໍ່ປີ | | | | | | | |
| | ໜ້າວຽກ 19: ຊຸກຍູ້ເພີ່ມທະວີການໃຫ້ຄວາມຮູ້ແກ່ ມວນຊົນ/ຜູ້ລົງທຶນ | | | | | | | |
| **3.1.2** | **ແຜນວຽກ: ສ້າງຕັ້ງສູນຮັບຝາກຫຼັກຊັບ** | | | | | | | |
| | ໜ້າວຽກ 1: ສຶກສາ ແລະ ຄົ້ນຄວ້າ ກ່ຽວກັບສູນຮັບຝາກຫຼັກຊັບ ຂອງຕ່າງປະເທດ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | |
| | ໜ້າວຽກ 2: ຄົ້ນຄວ້າກຳນົດຮູບແບບສູນຮັບຝາກຫຼັກຊັບຢູ່ ສປປ ລາວ | | | | | | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| 3.2 | ໂຄງການ: ສ້າງ ແລະ ພັດທະນາສະຖາບັນສີກາງດ້ານຫຼັກຊັບ | | | | | | | | |
| | 3.2.1 | ແຜນວຽກ: ສະຖາບັນສີກາງດ້ານຫຼັກຊັບ | | | | | | | |
| | | ໜ້າວຽກ 1: ຊຸກຍູ້ການຂະຫຍາຍຂອບເຂດການດຳເນີນທຸລະກິດ ແລະ ການບໍລິການຂອງບາງປະເພດສະຖາບັນສີກາງດ້ານຫຼັກຊັບ | | | | | | ສຄຄຊ, ຕລຊລ ແລະ ສະຖາບັນສີກາງດ້ານຫຼັກຊັບ | |
| | | ໜ້າວຽກ 2: ຊຸກຍູ້ການຍົກລະດັບຂີດຄວາມສາມາດຂອງບຸກຄະລາກອນ ຂອງສະຖາບັນສີກາງດ້ານຫຼັກຊັບ ເປັນຕົ້ນແມ່ນ ການສົ່ງພະນັກງານໄປຝຶກອົບຮົມວຽກງານສະເພາະດ້ານກ່ຽວກັບວຽກງານຕະຫຼາດທຶນ ທັງພາຍໃນ ແລະ ຕ່າງປະເທດ ແລະ ເຂົ້າຮ່ວມຝຶກອົບຮົມຫຼັກສູດນັກວິຊາຊີບຫຼັກຊັບ ທີ່ຈັດຂຶ້ນໃນແຕ່ລະໄລຍະ; | | | | | | | |
| | | ໜ້າວຽກ 3: ຊຸກຍູ້ສະຖາບັນສີກາງ ພັດທະນາດ້ານການຄຸ້ມຄອງບໍລິຫານພາຍໃນ ໃຫ້ມີປະສິດທິພາບ ແລະ ເຂັ້ມແຂງ ເປັນຕົ້ນ ຮັບປະກັນຄວາມສະຖຽນຂອງລະບົບການໃຫ້ບໍລິການຂອງຕົນ, ສ້າງລະບຽບ ແລະ ຄູ່ມືປະຕິບັດງານພາຍໃນ ໃຫ້ຄົບຖ້ວນ | | | | | | | |
| | 3.2.2 | ແຜນວຽກ: ບໍລິສັດຫຼັກຊັບ | | | | | | | |
| | | ໜ້າວຽກ 1: ຄົ້ນຄວ້າສ້າງກົນໄກ, ເງື່ອນໄຂ ເພື່ອຮອງຮັບການໃຫ້ບໍລິການສິນເຊື່ອເພື່ອຊື້ຫຼັກຊັບ (Margin Trading), ຢືມຫຼັກຊັບເພື່ອຂາຍ (Short Sell) ແລະ ການກູ້ຢືມໂດຍໃຊ້ຫຼັກຊັບຄໍ້າປະກັນ (Securities Borrowing and Lending ) | | | | | | ສຄຄຊ | |
| | | ໜ້າວຽກ 2: ຊຸກຍູ້ ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ ໃນການຄົ້ນຄວ້າກົນໄກ, ເງື່ອນໄຂ, ພັດທະນາລະບົບ ແລະ ການໃຫ້ບໍລິການ ສິນເຊື່ອເພື່ອຊື້ຫຼັກຊັບ (Margin Trading), ຢືມຫຼັກຊັບເພື່ອຂາຍ (Short Sell) ແລະ ການກູ້ຢືມໂດຍໃຊ້ຫຼັກຊັບຄໍ້າປະກັນ (Securities Borrowing and Lending ) | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 3: ຊຸກຍູ້ການຄົ້ນຄວ້າ ແລະ ພັດທະນາລະບົບເຊື່ອມຕໍ່ການຊຳລະກັບຫຼາຍທະນາຄານ (multiple bank link) | | | | | | ສຄຄຊ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 4: ຊຸກຍູ້ການຄົ້ນຄວ້າ ແລະ ພັດທະນາລະບົບການຊື້-ຂາຍຫຼັກຊັບ ຜ່ານມືຖື (mobile trading app) | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 5: ຊຸກຍູ້ການຄົ້ນຄວ້າ ແລະ ພັດທະນາລະບົບເຊື່ອມຕໍ່ການຊື້-ຂາຍຮຸ້ນຂອງບໍລິສັດຫຼັກຊັບ (ledger system) | | | | | | | |
| | | ໜ້າວຽກ 6: ສຶກສາຄົ້ນຄວ້າ ກົນໄກ ແລະ ເງື່ອນໄຂ ເພື່ອຮອງຮັບໃຫ້ແກ່ການເຮັດໜ້າທີ່ເປັນຜູ້ສ້າງສະພາບຄ່ອງໃຫ້ແກ່ຕະຫຼາດ (liquidity provider) | | | | | | | |
| | | ໜ້າວຽກ 7: ຊຸກຍູ້ການເຮັດໜ້າທີ່ເປັນຜູ້ສ້າງສະພາບຄ່ອງໃຫ້ແກ່ຕະຫຼາດ (liquidity provider) | | | | | | | |
| | | ໜ້າວຽກ 8: ຊຸກຍູ້ບໍລິສັດຫຼັກຊັບສ້າງກົນໄກເພື່ອຮອງຮັບໃຫ້ແກ່ການເຮັດໜ້າທີ່ເປັນຜູ້ສ້າງສະພາບຄ່ອງໃຫ້ແກ່ຕະຫຼາດ (market maker) | | | | | | | |

| | | | | | | | | |
|---|---|---|---|---|---|---|---|---|
| | ໜ້າວຽກ 9: ຊຸກຍູ້ບໍລິສັດຫຼັກຊັບຊອກຫາລູກຄ້າ ໃຫ້ກວ້າງຂວາງຂຶ້ນ ດ້ວຍການ ໂຄສະນາເຜີຍແຜ່ກັບທີ່ໃຫ້ໄດ້ຢ່າງໜ້ອຍ 30 ຄັ້ງ/ປີ ແລະ ມີຈຳນວນບັນຊີຫຼັກຊັບເພີ່ມຂຶ້ນ ຢ່າງໜ້ອຍ 660 ບັນຊີຕໍ່ປີ ແລະ ບັນຊີຊື້ ຂາຍພັນທະບັດລັດຖະບານ ມີຈຳນວນເພີ່ມຂຶ້ນ ຢ່າງໜ້ອຍ 550 ບັນຊີຕໍ່ປີ ແລະ ເພີ່ມຊ່ອງທາງອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ ເປັນຕົ້ນ ການເປີດບັນຊີອອນລາຍ, ການພັດທະນາລະບົບຊື້ ຂາຍຜ່ານມືຖື, ການເຊື່ອມຕໍ່ທະນາຄານເພື່ອການຊຳລະ, ລະບົບຊື້ ຂາຍຫຼັກຊັບທີ່ເຊື່ອມຕໍ່ກັບຕະຫຼາດຫຼັກຊັບລາວ | | | | | | | |
| 3.2.3 | **ແຜນວຽກ: ທະນາຄານດູແລຊັບສິນ (Custodian Bank)** | | | | | | | |
| | ໜ້າວຽກ 1: ຊຸກຍູ້ທະນາຄານດູແລຊັບສິນສ້າງກົນໄກ ເພື່ອຮອງຮັບໃຫ້ແກ່ການບໍລິການຂອງກອງທຶນເພື່ອການລົງທຶນ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| 3.2.4 | **ແຜນວຽກ: ບໍລິສັດກວດສອບ** | | | | | | | |
| | ໜ້າວຽກ 1: ຊຸກຍູ້ບໍລິສັດກວດສອບ ພາຍໃນ ເພື່ອໃຫ້ເຂົ້າມາເຄື່ອນໄຫວໃນວຽກງານຫຼັກຊັບ ຢ່າງໜ້ອຍ 1 ບໍລິສັດ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| 3.2.5 | **ແຜນວຽກ: ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ** | | | | | | | |
| | ໜ້າວຽກ 1: ຊຸກຍູ້ບໍລິສັດພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຕັ້ງບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຢ່າງໜ້ອຍ 1 ບໍລິສັດ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | ໜ້າວຽກ 2: ຄົ້ນຄວ້າເງື່ອນໄຂການເຂົ້າຮ່ວມໂຄງການ ASEAN CIS Operator | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | |
| 3.2.6 | **ແຜນວຽກ: ສະມາຄົມທຸລະກິດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ** | | | | | | | |
| | ໜ້າວຽກ 1: ຊຸກຍູ້ຊົມລົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ສ້າງຕັ້ງສະມາຄົມບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | ໜ້າວຽກ 2: ຄົ້ນຄວ້າລະບຽບຄຸ້ມຄອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ | | | | | | | |
| | ໜ້າວຽກ 3: ຮັບຮອງຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 2-4 ຫຼັກສູດ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| 3.2.7 | **ແຜນວຽກ: ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື (Credit Rating Agency)** | | | | | | | |
| | ໜ້າວຽກ 1: ຄົ້ນຄວ້າປັບປຸງເງື່ອນໄຂ, ກົນໄກ ແລະ ລະບຽບການ ເພື່ອຮອງຮັບການເຄື່ອນໄຫວຂອງບໍລິສັດຈັດອັນດັບຄວາມໜ້າເຊື່ອຖືໃນແຕ່ລະໄລຍະ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | | 3.2.8 | **ແຜນວຽກ: ຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ** | | | | | | | |
| | | | ໜ້າວຽກ 1: ຊຸກຍູ້ທະນາຄານທຸລະກິດ ຫຼື ບໍລິສັດຫຼັກຊັບ ເພື່ອເປັນຕົວແທນຜູ້ຖືຮຸ້ນກູ້ ແລະ ພັນທະບັດລັດຖະບານ ຢ່າງໜ້ອຍ 1 ແຫ່ງ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | 3.2.9 | **ແຜນວຽກ: ບໍລິສັດປະເມີນມູນຄ່າຊັບສິນ** | | | | | | | |
| | | | ໜ້າວຽກ 1: ຊຸກຍູ້ກະຊວງກ່ຽວຂ້ອງ ຄົ້ນຄວ້າກົນໄກ ແລະ ລະບຽບການ ເພື່ອຮອງຮັບໃຫ້ແກ່ການຄຸ້ມຄອງບໍລິສັດປະເມີນມູນຄ່າຊັບສິນ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | | ໜ້າວຽກ 2: ຊຸກຍູ້ໃຫ້ມີຜູ້ຄຸ້ມຄອງຫຼັກ ບໍລິສັດປະເມີນມູນຄ່າຊັບສິນ ແລະ ຄົ້ນຄວ້າຊຸກຍູ້ຍົກລະດັບກິດຈະການປະເມີນມູນຄ່າຊັບສິນ ຈາກ ກິດຈະການທົ່ວໄປ ເປັນກິດຈະການໃນບັນຊີຄວບຄຸມ ແລະ ແຍກເປັນກິດຈະການຍ່ອຍ ອີງຕາມປະເພດຊັບສິນ; | | | | | | | |
| | | | ໜ້າວຽກ 3: ຊຸກຍູ້ຊົມລົມບໍລິສັດປະເມີນມູນຄ່າຊັບໃນການສ້າງຕັ້ງ ສະມາຄົມບໍລິສັດປະເມີນມູນຄ່າຊັບສິນ ແລະ ນັກປະເມີນມູນຄ່າຊັບສິນ | | | | | | | |
| | | 3.2.10 | **ແຜນວຽກ: ທະນາຄານຕົວແທນເພື່ອການຊໍາລະ** | | | | | | | |
| | | | ໜ້າວຽກ 1: ສຶກສາຄົ້ນຄວ້າເງື່ອນໄຂການເປັນທະນາຄານຕົວແທນເພື່ອການຊໍາລະ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | | ໜ້າວຽກ 2: ຊຸກຍູ້ການເຊື່ອມຕໍ່ລະບົບ Multiple Bank Link | | | | | | | |
| | | 3.2.11 | **ແຜນວຽກ: ບໍລິສັດໃຫ້ບໍລິການຂໍ້ມູນຂ່າວສານດ້ານຫຼັກຊັບ** | | | | | | | |
| | | | ໜ້າວຽກ 1: ຄົ້ນຄວ້າສ້າງກົນໄກ, ເງື່ອນໄຂ ເພື່ອຮັບຮອງການເຄື່ອນໄຫວຂອງບໍລິສັດໃຫ້ບໍລິການຂໍ້ມູນຂ່າວສານດ້ານຫຼັກຊັບ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| IV | **ແຜນງານ: ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ບໍລິສັດຈົດທະບຽນ ແລະ ພັດທະນາຜະລິດຕະພັນຫຼັກຊັບ** | | | | | | | | | ໂຄງການ 9.1 ຂອງ ທຫລ |
| | 4.1 | | ໂຄງການ: ຂະຫຍາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບໍລິສັດຈົດທະບຽນ | | | | | | | |
| | | 4.1.1 | ແຜນວຽກ: ສ້າງບັນຊີເປົ້າໝາຍບໍລິສັດຈົດທະບຽນ | | | | | | | |
| | | | ໜ້າວຽກ 1: ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າລາຍຊື່ເປົ້າໝາຍບໍລິສັດຈົດທະບຽນ ເພື່ອຂຶ້ນແຜນປັບປຸງຄວາມເຂັ້ມແຂງ ແລະ ຈັດລຽງບຸລິມະສິດ ເພື່ອກະກຽມຄວາມພ້ອມໃນການລະດົມທຶນຜ່ານຕະຫຼາດທຶນ ໃນແຕ່ລະໄລຍະ. | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ, ຊົມລົມທຸລະກິດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ. | |
| | | | ໜ້າວຽກ 2: ເຂົ້າພົບວິສາຫະກິດ ເພື່ອນໍາສະເໜີກ່ຽວກັບການລະດົມທຶນ ຜ່ານຕະຫຼາດທຶນ ຢ່າງໜ້ອຍ 20 ແຫ່ງຕໍ່ປີ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ | |

| | | | | | | | | |
|---|---|---|---|---|---|---|---|---|
| 4.1.2 | **ແຜນວຽກ: ກະກຽມຄວາມພ້ອມໃຫ້ແກ່ເປົ້າໝາຍບໍລິສັດຈົດທະບຽນ** | | | | | | | |
| | ໜ້າວຽກ 1: ຄົ້ນຄວ້າສ້າງເງື່ອນໄຂ ແລະ ສ້າງຄວາມເຂັ້ມແຂງຮອບດ້ານ ໃຫ້ແກ່ວິສາຫະກິດທີ່ເປັນເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ດ້ວຍການຝຶກອົບຮົມ ແລະ ເຜີຍແຜ່ກ່ຽວກັບແນວທາງ, ນະໂຍບາຍ, ລະບຽບການ, ເງື່ອນໄຂ, ຂັ້ນຕອນ ແລະ ວິຊາການສະເພາະດ້ານ ຕິດພັນກັບການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ, ການບັນຊີ, ການຄຸ້ມຄອງບໍລິຫານ ແລະ ອື່ນໆ | | | | | | ສຄຄຊ, ຕະຫຼາດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ | |
| | ໜ້າວຽກ 2: ສຶກສາຄົ້ນຄວ້າການສ້າງເງື່ອນໄຂ ແລະ ກົນໄກ ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ທີ່ເປັນທ່າແຮງໃນການຂັບເຄື່ອນເສດຖະກິດຂອງ ສປປ ລາວ ສາມາດລະດົມທຶນຜ່ານຕະຫຼາດທຶນ ດ້ວຍການອອກຈຳໜ່າຍຫຼັກຊັບ ຫຼື ລະດົມທຶນຜ່ານກອງທຶນເພື່ອການລົງທຶນ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ. | |
| | ໜ້າວຽກ 3: ຊຸກຍູ້ສະຖາບັນສື່ກາງ ແລະ ເປົ້າໝາຍບໍລິສັດຈົດທະບຽນ ຮ່ວມກັນຈັດຕັ້ງປະຕິບັດແຜນປັບປຸງຄວາມເຂັ້ມແຂງ ເພື່ອກະກຽມຄວາມພ້ອມໃນການລະດົມທຶນ ຜ່ານຕະຫຼາດທຶນ ໃຫ້ສຳເລັດຕາມກຳນົດເວລາ | | | | | | ສຄຄຊ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ເປົ້າໝາຍບໍລິສັດຈົດທະບຽນ | |
| | ໜ້າວຽກ 4: ຊຸກຍູ້, ຕິດຕາມ ແລະ ລາຍງານ ກ່ຽວກັບການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ເປົ້າໝາຍບໍລິສັດຈົດທະບຽນ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ:<br>1. ຈັດຝຶກອົບຮົມໃຫ້ແກ່ເປົ້າໝາຍບໍລິສັດຈົດທະບຽນ ກ່ຽວກັບການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ, ການຄຸ້ມຄອງບໍລິຫານ (CG) ແລະ ອື່ນໆ.<br>2. ວິເຄາະຊ່ອງຫວ່າງ (Gap Analysis) ໂດຍອີງໃສ່ເງື່ອນໄຂການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ.<br>3. ຈັດລຽງບຸລິມະສິດເປົ້າໝາຍບໍລິສັດຈົດທະບຽນ ກ່ຽວກັບການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ.<br>4. ສ້າງແຜນປັບປຸງຄວາມພ້ອມຮອບດ້ານ ກ່ຽວກັບການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ພ້ອມທັງ ໃຫ້ສະຖາບັນສື່ກາງດ້ານຫຼັກຊັບທີ່ກ່ຽວຂ້ອງ ແລະ ເປົ້າໝາຍບໍລິສັດຈົດທະບຽນ ຮ່ວມກັນຈັດຕັ້ງປະຕິບັດແຜນດັ່ງກ່າວ.<br>5. ຄົ້ນຄວ້າ ແລະ ລາຍງານ ຄຄຊ ກ່ຽວກັບການປັບປຸງຄວາມພ້ອມຮອບດ້ານ ໃນການອອກຈຳໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ. | | | | | | | |
| 4.1.3 | **ແຜນວຽກ: ຂະຫຍາຍການອອກຈຳໜ່າຍຫຼັກຊັບ** | | | | | | | |
| | ໜ້າວຽກ 1: ສ້າງເງື່ອນໄຂໃຫ້ວິສາຫະກິດ ທີ່ມີຄວາມພ້ອມ, ມີຜົນການດຳເນີນງານທີ່ດີ ແລະ ມີທ່າແຮງ ໃຫ້ສາມາດລະດົມທຶນຜ່ານຕະຫຼາດທຶນ ຢ່າງໜ້ອຍ 5 ກໍລະນີ ຫຼື ລະດົມທຶນສະສົມໃຫ້ໄດ້ 15-18% ຂອງ GDP | | | | | | ຕລຊລ ແລະ ພາກສ່ວນທີ່ກ່ຽວຂ້ອງ | |

| | | | | | | | | |
|---|---|---|---|---|---|---|---|---|
| | ໜ້າວຽກ 2: ຊຸກຍູ້ໃຫ້ວິສາຫະກິດ ທີ່ມີເງື່ອນໄຂ ແລະ ຄວາມພ້ອມໃນການອອກຮຸ້ນ, ຮຸ້ນກູ້ ແລະ ຈົດທະບຽນຢູ່ຕະຫຼາດຫຼັກຊັບຕ່າງປະເທດ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນທີ່ກ່ຽວຂ້ອງ | ວາລະແຫ່ງຊາດ |
| | ໜ້າວຽກ 3: ຄົ້ນຄວ້າສ້າງກົນໄກ ແລະ ເງື່ອນໄຂໃນການຄຸ້ມຄອງບໍລິສັດທີ່ໄປອອກຈຳໜ່າຍຮຸ້ນ, ຮຸ້ນກູ້ ແລະ ຈົດທະບຽນຢູ່ຕະຫຼາດຫຼັກຊັບຕ່າງປະເທດ | | | | | | | ວາລະແຫ່ງຊາດ |
| 4.1.4 | **ແຜນວຽກ: ນຳໃຊ້ມາດຕະຖານສາກົນດ້ານການລາຍງານການເງິນ (IFRS)** | | | | | | | |
| | ໜ້າວຽກ 1: ຄົ້ນຄວ້າສ້າງແຜນຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ສຳລັບຂະແໜງຫຼັກຊັບ (IFRS Roadmap) | | | | | | ສຄຄຊ, ຕລຊລ, ກະຊວງການເງິນ, ທຫລ, ສະພານັກບັນຊີ ແລະ ນັກກວດສອບລາວ , ບໍລິສັດກວດສອບ 4 ແຫ່ງ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ. | |
| | ໜ້າວຽກ 2: ຊຸກຍູ້ ແລະ ຕິດຕາມ ສ້າງຄຳແນະນຳການຈັດຕັ້ງປະຕິບັດ ແລະ ຖານຄວາມຮູ້ທົ່ວໄປ (Common knowledge pool ) | | | | | | | |
| | ໜ້າວຽກ 3: ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຝຶກອົບຮົມໄລຍະສັ້ນ ກ່ຽວກັບນັກບັນຊີການເງິນ (Financial Accountants ' tranning and certification program ) | | | | | | | |
| | ໜ້າວຽກ 4: ຊຸກຍູ້ ແລະ ຕິດຕາມ ການວິເຄາະຊ່ອງຫວ່າງການຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS (Gap Analysis) ຂອງ ບໍລິສັດຈົດທະບຽນແຕ່ລະແຫ່ງ | | | | | | | |
| | ໜ້າວຽກ 5: ຊຸກຍູ້ ແລະ ຕິດຕາມ ການສ້າງແຜນຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS (IFRS Implementation plan ) ຂອງບໍລິສັດຈົດທະບຽນ ແລະ ໃຫ້ສາມາດຈັດຕັ້ງປະຕິບັດ IFRS ພາຍໃນປີ 2026 | | | | | | | |
| | ໜ້າວຽກ 6: ຊຸກຍູ້, ຕິດຕາມ ແລະ ປະເມີນການປະຕິບັດແຜນຂ້າມຜ່ານ ສູ່ການຈັດຕັ້ງປະຕິບັດ IFRS ຂອງບໍລິສັດຈົດທະບຽນ | | | | | | | |
| | ໜ້າວຽກ 7: ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຂໍການຊ່ວຍເຫຼືອຈາກ ທະນາຄານໂລກ ກ່ຽວກັບການສະໜັບສະໜູນການຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS ຂອງບໍລິສັດຈົດທະບຽນ | | | | | | | |
| 4.1.5 | **ແຜນວຽກ: ປັບປຸງການຄຸ້ມຄອງບໍລິຫານ (Corporate Governance - CG)** | | | | | | | |
| | ໜ້າວຽກ 1: ຈັດຝຶກອົບຮົມກ່ຽວກັບ ຜົນປະໂຫຍດຂອງການຄຸ້ມຄອງບໍລິຫານ ແລະ ການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ໂດຍນຳໃຊ້ Lao CG Scorecard ເປັນຕົ້ນ ກົນໄກ ແລະ ມາດຕະຖານ ການປະເມີນ, ວິທີການໃຫ້ຄະແນນ, ຊ່ອງທາງການຕອບຂໍ້ມູນ ແລະ ການລາຍງານຜົນການປະເມີນ. | | | | | | | |
| | ໜ້າວຽກ 2: ຊຸກຍູ້ ແລະ ຕິດຕາມ ບໍລິສັດຈົດທະບຽນທີ່ສະໝັກໃຈ ດຳເນີນການທົດລອງການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ໂດຍນຳໃຊ້ Lao CG Scorecard | | | | | | | |

| | | | | | | | | | |
|---|---|---|---|---|---|---|---|---|---|
| | | ໜ້າວຽກ 3: ຄົ້ນຄວ້າສ້າງປຶ້ມຄູ່ມື ຫຼື ຄຳແນະນຳກ່ຽວກັບ Lao CG Scorecard | | | | | | | |
| | | ໜ້າວຽກ 4: ບໍລິສັດຈົດທະບຽນ ດຳເນີນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ໂດຍນຳໃຊ້ Lao CG Scorecard ດ້ວຍຕົນເອງ ຈາກນັ້ນ ໃຫ້ ສຄຄຊ ແລະ ຕລຊລ ປະເມີນເພື່ອຢັ້ງຢືນຄືນ (Peer review). | | | | | | ສຄຄຊ, ຕລຊລ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ | |
| | | ໜ້າວຽກ 5: ການປະເມີນຄຸ້ມຄອງບໍລິຫານຂອງບໍລິສັດຈົດທະບຽນດັ່ງກ່າວ ໃຫ້ໄດ້ໃນລະດັບ "ດີເລີດ" ກວມເອົາ 80% ຂອງບໍລິສັດຈົດທະບຽນທັງໝົດ. ພ້ອມທັງ ສາມາດລາຍງານ ແລະ ເປີດເຜີຍຂໍ້ມູນທັນຕາມເວລາທີ່ກຳນົດ | | | | | | | |
| | | ໜ້າວຽກ 6: ຊຸກຍູ້ ຕລຊລ ຄົ້ນຄວ້າກ່ຽວກັບ ການສ້າງຊ່ອງທາງເກັບກຳຂໍ້ມູນໃໝ່ (Platform) ສຳລັບ Lao CG Scorecard | | | | | | | |
| | | ໜ້າວຽກ 7: ຄົ້ນຄວ້າສ້າງກົນໄກຮັບຮອງ ຜູ້ປະເມີນຈາກພາກສ່ວນພາຍນອກ ໃນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ໂດຍນຳໃຊ້ Lao CG Scorecard | | | | | | | |
| | | ໜ້າວຽກ 8: ສະມາຊິກສະພາບໍລິຫານຂອງບໍລິສັດຈົດທະບຽນເຂົ້າຮ່ວມຝຶກອົບຮົມກ່ຽວກັບ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຈຳນວນ 50 ເທື່ອຄົນ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ | |
| | 4.1.6 | ແຜນວຽກ: ສະມາຄົມບໍລິສັດຈົດທະບຽນ | | | | | | | |
| | | ໜ້າວຽກ 1: ສຶກສາຄົ້ນຄວ້າສ້າງກົນໄກ ແລະ ເງື່ອນໄຂ ການຄຸ້ມຄອງການເຄື່ອນໄຫວຂອງສະມາຄົມບໍລິສັດຈົດທະບຽນ ໃຫ້ສອດຄ່ອງກັບລະບຽບກົດໝາຍ | | | | | | ສຄຄຊ, ຕລຊລ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ | |
| 4.2 | ໂຄງການ: ການພັດທະນາຜະລິດຕະພັນຫຼັກຊັບ | | | | | | | | |
| | 4.2.1 | ແຜນວຽກ: ພັດທະນາຕະຫຼາດພັນທະບັດລັດຖະບານ | | | | | | | |
| | | ໜ້າວຽກ 1: ຊຸກຍູ້ສ້າງເງື່ອນໄຂໃຫ້ກະຊວງການເງິນເອົາພັນທະບັດລັດຖະບານທີ່ອອກໂດຍກົງ ໃຫ້ບັນດາວິສາຫະກິດ ເຂົ້າມາຈົດທະບຽນໃນ ຕລຊລ | | | | | | ສຄຄຊ, ກ/ຊ ການເງິນ, ຕລຊລ,ບໍລິສັດຫຼັກຊັບ | |
| | | ໜ້າວຽກ 2: ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າ ສ້າງ ແລະ ປັບປຸງ ວິທີການ ແລະ ຂັ້ນຕອນ ເພື່ອຮອງຮັບການຊື້-ຂາຍພັດທະນາພັນທະບັດລັດຖະບານຜ່ານຕະຫຼາດທຶນ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ | |
| | 4.2.2 | ແຜນວຽກ: ຮຸ້ນກູ້ (ການອອກຮຸ້ນກູ້ພາຍໃນ ແລະ ຕ່າງປະເທດ) | | | | | | | |
| | | ໜ້າວຽກ 1: ຄົ້ນຄວ້າ ສ້າງ ແລະ ປັບປຸງ ເງື່ອນໄຂ, ກົນໄກ ແລະ ລະບຽບການເພື່ອອຳນວຍຄວາມສະດວກໃຫ້ແກ່ການອອກຈຳໜ່າຍຮຸ້ນກູ້ພາຍໃນປະເທດ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 2: ຊຸກຍູ້ການອອກຈຳໜ່າຍຮຸ້ນກູ້ພາຍໃນປະເທດ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 3: ສຶກສາຄົ້ນຄວ້າເງື່ອນໄຂການອອກຮຸ້ນກູ້ ໃນກອບ ASEAN+3 ຫຼາຍສະກຸນເງິນ ແລະ ອື່ນໆ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 4: ສຶກສາຄົ້ນຄວ້າ, ກະກຽມເງື່ອນໄຂ ແລະ ຊຸກຍູ້ ການອອກພັນທະບັດ ແພນດ້າ ຢູ່ ສປ.ຈີນ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | ວາລະແຫ່ງຊາດ |

| | | | | | | | | |
|---|---|---|---|---|---|---|---|---|
| 4.2.3 | **ແຜນວຽກ: ຄົ້ນຄວ້າກ່ຽວກັບວຽກຂໍ້ມູນຂ່າວສານພັນທະບັດລັດຖະບານ (Bond Information Center)** | | | | | | | |
| | ໜ້າວຽກ 1: ສຶກສາ ສ້າງກົນໄກ, ລະບຽບການ ແລະ ຮູບແບບການເກັບກຳຂໍ້ມູນພັນທະບັດລັດຖະບານ | | | | | | ສຄຄຊ, ຕລຊລ, ກະຊວງການເງິນ | |
| | ໜ້າວຽກ 2: ຊຸກຍູ້ໃຫ້ ຕລຊລ ຄົ້ນຄວ້າຂຶ້ນແຜນການສ້າງກົນໄກເກັບກຳຂໍ້ມູນພັນທະບັດ ເພື່ອເປັນບ່ອນອີງໃນການຄົ້ນຄວ້າສ້າງເສັ້ນສະແດງອັດຕາຜົນຕອບແທນ (Yield Curve) | | | | | | | |
| 4.2.4 | **ແຜນວຽກ: ກອງທຶນຮ່ວມ** | | | | | | | |
| | ໜ້າວຽກ 1: ຄົ້ນຄວ້າສ້າງ ແລະ ປັບປຸງ ເງື່ອນໄຂ, ກົນໄກ, ລະບຽບການ ເພື່ອຮອງຮັບການເຄື່ອນໄຫວຂອງກອງທຶນຮ່ວມ | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | ສຳເລັດໃນປີ 2021 |
| | ໜ້າວຽກ 2: ຊຸກຍູ້ ຕລຊລ ສ້າງລະບຽບການ ແລະ ລະບົບ ເພື່ອຮອງຮັບການຊື້ ຂາຍ ໜ່ວຍລົງທຶນ | | | | | | ສຄຄຊ, ຕລຊລ | |
| | ໜ້າວຽກ 3: ຊຸກຍູ້ໃຫ້ມີການໃຫ້ບໍລິການກ່ຽວກັບຜະລິດຕະພັນກອງທຶນຮ່ວມ | | | | | | | ວາລະແຫ່ງຊາດ |
| 4.2.5 | **ແຜນວຽກ: ກອງທຶນສ່ວນບຸກຄົນ** | | | | | | | |
| | ໜ້າວຽກ 1: ສຶກສາ ແລະ ຄົ້ນຄວ້າ ກ່ຽວກັບກອງທຶນສ່ວນບຸກຄົນ ຂອງຕ່າງປະເທດ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | |
| | ໜ້າວຽກ 2: ຄົ້ນຄວ້າກຳນົດຮູບແບບກອງທຶນສ່ວນບຸກຄົນ ຢູ່ ສປປ ລາວ | | | | | | | |
| | ໜ້າວຽກ 3: ຊຸກຍູ້ ຕລຊລ ສ້າງລະບຽບການ ແລະ ລະບົບເພື່ອຮອງຮັບການຊື້-ຂາຍກອງທຶນສ່ວນບຸກຄົນ | | | | | | ສຄຄຊ ແລະ ຕລຊລ | ວາລະແຫ່ງຊາດ |
| | ໜ້າວຽກ 4: ຊຸກຍູ້ໃຫ້ມີການໃຫ້ບໍລິການກ່ຽວກັບຜະລິດຕະພັນກອງທຶນສ່ວນບຸກຄົນ | | | | | | ສຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ | ວາລະແຫ່ງຊາດ |
| 4.2.6 | **ແຜນວຽກ: ກອງທຶນພື້ນຖານໂຄງລ່າງ** | | | | | | | |
| | ໜ້າວຽກ 1: ສຶກສາຄົ້ນຄວ້າ ແລະ ສ້າງກົນໄກ, ເງື່ອນໄຂ ຂອງກອງທຶນພື້ນຖານໂຄງລ່າງ (Infrastructure Fund) ຂອງ ສປປ ລາວ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | |
| | ໜ້າວຽກ 2: ຊຸກຍູ້ການສ້າງຕັ້ງກອງທຶນພື້ນຖານໂຄງລ່າງ (Infrastructure Fund) ຢູ່ ສປປ ລາວ | | | | | | | |
| 4.2.7 | **ແຜນວຽກ: ຄຸ້ມຄອງການເຄື່ອນໄຫວຂອງກອງທຶນເພື່ອການລົງທຶນໃນບໍລິສັດ (Private Equity Fund "PE Fund") ແລະ ທຸລະກິດຮ່ວມລົງທຶນ (Venture Capital "VC")** | | | | | | ສຄຄຊ, ກ/ຊ ແຜນການ ແລະ ການລົງທຶນ, ກະຊວງອຸດສະຫະກຳ ແລະ ການຄ້າ | |
| | ໜ້າວຽກ 1: ສຶກສາຄົ້ນຄວ້າ ແລະ ສ້າງກົນໄກ, ເງື່ອນໄຂ ກ່ຽວກັບກອງທຶນເພື່ອການລົງທຶນໃນບໍລິສັດ (PE Fund) ແລະ ທຸລະກິດຮ່ວມລົງທຶນ (Venture Capital) ຂອງຕ່າງປະເທດ | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | | | ໜ້າວຽກ 2: ຊຸກຍູ້ການສ້າງຕັ້ງ ແລະ ເຄື່ອນໄຫວກ່ຽວກັບ ກອງທຶນເພື່ອການລົງທຶນໃນບໍລິສັດ (PE Fund) ແລະ ທຸລະກິດຮ່ວມລົງທຶນ (Venture Capital) ຢູ່ ສປປ ລາວ | | | | | | ສຄຄຊ ແລະ ພາກສ່ວນທີ່ກ່ຽວຂ້ອງ | ວາລະແຫ່ງຊາດ |
| | | 4.2.8 | ແຜນວຽກ: ຫຼັກຊັບອື່ນ | | | | | | | |
| | | | ໜ້າວຽກ 1: ຄົ້ນຄວ້າສ້າງຜະລິດຕະພັນໃໝ່ ເຊັ່ນ: ຮຸ້ນບຸລິມະສິດ, ຮຸ້ນກູ້ແປສະພາບ | | | | | | ສຄຄຊ, ຕລຊລ, ທຫລ, ຊ່ຽວຊານສາກົນ ແລະ ພາກສ່ວນກ່ຽວຂ້ອງ | |
| | | | ໜ້າວຽກ 2: ຊຸກຍູ້ໃຫ້ມີການໃຫ້ບໍລິການກ່ຽວກັບຜະລິດຕະພັນທີ່ມີລະບຽບການຮອງຮັບແລ້ວ ຄື: ການນຳເອົາຮຸ້ນເປັນຫຼັກຊັບອ້າງອີງ ເພື່ອອອກໃບຢັ້ງຢືນສິດຢູ່ຕ່າງປະເທດ (Depositary Receipt: DR) | | | | | | ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ | |
| | | | ໜ້າວຽກ 3: ສຶກສາການເງິນແບບຍືນຍົງ Sustainable Finance ໃນກອບຂອງວຽກງານຫຼັກຊັບ: ລວມມີການ ສຶກສາກົນໄກ, ນິຕິກຳ ກ່ຽວກັບພັນທະບັດເພື່ອສັງຄົມ (Social Bond), ພັນທະບັດເພື່ອຄວາມຍືນຍົງ (Sustainable Bond) ແລະ ພັນທະບັດສີຂຽວ (Green Bond) ຂອງບັນດາປະເທດໃນອາຊຽນ ເພື່ອຄົ້ນຄວ້າຄວາມເປັນໄປໄດ້ໃນການອອກພັນທະບັດດັ່ງກ່າວຢູ່ ສປປ ລາວ | | | | | | | |
| | | | ໜ້າວຽກ 4: ສຶກສາ, ຄົ້ນຄວ້າ ແລະ ສ້າງກົນໄກ ການອອກຈຳໜ່າຍຫຼັກຊັບ ໃນຮູບແບບການຈົດທະບຽນຄວບ (Dual Listing) ແລະ ການອອກຈຳໜ່າຍຂ້າມແດນ (Cross border issuing) | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນກ່ຽວຂ້ອງ | ວາລະແຫ່ງຊາດ |
| | | | ໜ້າວຽກ 5: ຊຸກຍູ້ການອອກຈຳໜ່າຍຫຼັກຊັບ ໃນຮູບແບບ ການຈົດທະບຽນຄວບ (Dual Listing) ແລະ ການອອກຈຳໜ່າຍຂ້າມແດນ (Cross border issuing) | | | | | | | ວາລະແຫ່ງຊາດ |
| V | **ແຜນງານ: ຂະຫຍາຍ, ປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ** | | | | | | | | | ໂຄງການ 9.2 ຂອງ ທຫລ |
| | 5.1 | ໂຄງການ: ຂະຫຍາຍ ແລະ ປົກປ້ອງຜູ້ລົງທຶນ | | | | | | | | |
| | | 5.1.1 | ແຜນວຽກ: ສົ່ງເສີມການປະກອບສ່ວນຂອງຜູ້ລົງທຶນພາຍໃນ | | | | | | | |
| | | | ໜ້າວຽກ 1: ຊຸກຍູ້ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອສົ່ງເສີມທະນາຄານທຸລະກິດ, ບໍລິສັດປະກັນໄພ, ຄັງສະຫວັດດີການສັງຄົມ, ຄັງບໍານານ-ບໍານານ ແລະ ບໍລິສັດຕ່າງໆ ປະກອບສ່ວນລົງທຶນໃນຫຼັກຊັບໃຫ້ຫຼາຍຂຶ້ນ | | | | | | ສຄຄຊ, ກ/ຊ ການເງິນ, ກ/ຊ ແຮງງານ ແລະ ສະຫວັດດີການສັງຄົມ, ກອງທຶນປະກັນສັງຄົມ, ຕລຊລ, ຊົມລົມທຸລະກິດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ | |
| | | | ໜ້າວຽກ 2: ຊຸກຍູ້ການຂະຫຍາຍຕົວແທນຈຳໜ່າຍພັນທະບັດລັດຖະບານໃນຕະຫຼາດຂັ້ນໜຶ່ງ ເປັນຕົ້ນ ບໍລິສັດຫຼັກຊັບ, ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ, ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ບໍລິສັດປະກັນໄພ | | | | | | ສຄຄຊ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ | |
| | | 5.1.2 | ແຜນວຽກ: ຂະຫຍາຍ ແລະ ຄຸ້ມຄອງຜູ້ລົງທຶນຕ່າງປະເທດ | | | | | | | |
| | | | ໜ້າວຽກ 1.1: ຄົ້ນຄວ້າ ແລະ ກຳນົດນະໂຍບາຍສົ່ງເສີມຜູ້ລົງທຶນຕ່າງປະເທດ ເຂົ້າມາລົງທຶນໃນຕະຫຼາດຫຼັກຊັບ ໃຫ້ຫຼາຍຂຶ້ນ | | | | | | ສຄຄຊ, ຕລຊລ ແລະ ບໍລິສັດຫຼັກຊັບ | |
| | | | ໜ້າວຽກ 1.2: ສຶກສາຄົ້ນຄວ້າ ແລະ ສ້າງກົນໄກ, ເງື່ອນໄຂ ເພື່ອຄຸ້ມຄອງຜູ້ລົງທຶນຕ່າງປະເທດລວມທັງບຸກຄົນ ແລະ ສະຖາບັນ | | | | | | ສຄຄຊ, ຕລຊລ ແລະ ບໍລິສັດຫຼັກຊັບ | |

| | | | | | | | | | |
|---|---|---|---|---|---|---|---|---|---|
| | 5.1.3 | ແຜນວຽກ: ກອງທຶນປົກປ້ອງຜູ້ລົງທຶນ | | | | | | | |
| | | ໜ້າວຽກ 1: ສຶກສາຄົ້ນຄວ້າ ແລະ ສ້າງກົນໄກ, ເງື່ອນໄຂ ກ່ຽວກັບການສ້າງຕັ້ງກອງທຶນປົກປ້ອງຜູ້ລົງທຶນ | | | | | | ສຄຄຊ, ຕລຊລ ແລະ ບໍລິສັດຫຼັກຊັບ | |
| | | ໜ້າວຽກ 2: ຊຸກຍູ້ການສ້າງຕັ້ງກອງທຶນປົກປ້ອງຜູ້ລົງທຶນ ຢູ່ ສປປ ລາວ | | | | | | | |
| 5.2 | ໂຄງການ: ສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ | | | | | | | | |
| | 5.2.1 | ແຜນວຽກ: ຝຶກອົບຮົມວຽກງານຕະຫຼາດທຶນ | | | | | | | |
| | | ໜ້າວຽກ 1: ຊຸກຍູ້ ຕລຊລ ແລະ/ຫຼື ບໍລິສັດຫຼັກຊັບ ຄົ້ນຄວ້າສ້າງ ແລະ ປັບປຸງ ຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ແລະ ຝຶກອົບຮົມວຽກງານຫຼັກຊັບອື່ນໆ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | |
| | | ໜ້າວຽກ 2: ຊຸກຍູ້ ຕລຊລ ຈັດຝຶກອົບຮົມຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບ ຢ່າງໜ້ອຍ 1 ຄັ້ງຕໍ່ປີ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ | |
| | | ໜ້າວຽກ 3: ຄົ້ນຄວ້າກຳນົດໂຄງການຝຶກອົບຮົມເພື່ອສ້າງຄູຝຶກໃນວຽກງານຫຼັກຊັບ (Training to Trainers) ຢ່າງໜ້ອຍ 1 ຄັ້ງຕໍ່ປີ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | |
| | | ໜ້າວຽກ 4: ຈັດຝຶກອົບຮົມໃນຫົວຂໍ້ຕ່າງໆ ກ່ຽວກັບວຽກງານຕະຫຼາດທຶນ ໃຫ້ໄດ້ຢ່າງໜ້ອຍ 1 ຄັ້ງ/ປີ | | | | | | ສຄຄຊ, ຕລຊລ ແລະ ບໍລິສັດຫຼັກຊັບ | |
| | 5.2.2 | ແຜນວຽກ: ໂຄສະນາເຜີຍແຜ່ | | | | | | | |
| | | ໜ້າວຽກ 1: ຈັດຕັ້ງ, ຊຸກຍູ້ ແລະ ປະກອບສ່ວນ ໂຄສະນາເຜີຍແຜ່ກັບທີ່ໃຫ້ໄດ້ ຢ່າງໜ້ອຍ 3 ຄັ້ງ/ປີ ແລະ ມີຜູ້ເຂົ້າຮ່ວມ ຢ່າງໜ້ອຍ 200 ເທື່ອຄົນ/ປີ ລວມທັງ ຫົວຂໍ້ທີ່ດີດພັນກັບຄວາມຮູ້ວຽກງານຕະຫຼາດທຶນ, ການຄຸ້ມຄອງຜູ້ມີສ່ວນຮ່ວມໃນຕະຫຼາດທຶນ, ການອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບຕ່າງປະເທດ, ການອອກພັນທະບັດແພນດ້າ ຢູ່ ສປ.ຈີນ, ການຈົດທະບຽນຄວບ (Dual Listing) ແລະ ການອອກຈຳໜ່າຍຂ້າມແດນ (Cross border issuing) | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ, ບໍລິສັດຈົດທະບຽນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | ວາລະແຫ່ງຊາດ |
| | | ໜ້າວຽກ 2: ສ້າງ ແລະ ພັດທະນາການໂຄສະນາເຜີຍແຜ່ ໃຫ້ຫຼາກຫຼາຍສີສັນ ມີຄຸນນະພາບ ແລະ ກຳນົດເປົ້າໝາຍ ຢ່າງມີຈຸດສຸມ (ເປັນຕົ້ນແມ່ນ: ໂຄສະນາເຜີຍແຜ່ຜ່ານສື່ອອນລາຍ ເປັນຕົ້ນ Podcast ຢ່າງນ້ອຍ 4 ເລື່ອງຕໍ່ປີ, Info-Graphic ຢ່າງນ້ອຍ 12 ຫົວຂໍ້ຕໍ່ປີ, ກາຕູນເອນິເມຊັນ ຢ່າງນ້ອຍ 4 ເລື່ອງຕໍ່ປີ, ສະປອດໂຄສະນາ ຢ່າງນ້ອຍ 5 ເລື່ອງຕໍ່ປີ ແລະ ອື່ນໆ) | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | |
| | | ໜ້າວຽກ 3: ສ້າງ, ປັບປຸງ ແລະ ພັດທະນາວິທີການ ແລະ ຊ່ອງທາງ ການໂຄສະນາເຜີຍແຜ່ ໃຫ້ມີຄວາມຫຼາກຫຼາຍ ແລະ ທົ່ວເຖິງ (ເປັນຕົ້ນແມ່ນ: ຊ່ອງທາງ Youtube, Facebook, ວິທະຍຸ, ໂທລະພາບ ແລະ ອື່ນໆ) | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | |
| | | ໜ້າວຽກ 4: ພັດທະນາໂຄງສ້າງ ລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ" ແທດເໝາະກັບສະພາບຕົວຈິງໃນແຕ່ລະໄລຍະ ຢ່າງໜ້ອຍ 48 ເທັບ ຕໍ່ປີ | | | | | | ສຄຄຊ | |
| | | ໜ້າວຽກ 5: ພັດທະນາ ຫ້ອງສະໝຸດ ສຄຄຊ | | | | | | ສຄຄຊ | |
| | | ໜ້າວຽກ 6: ສຶກສາຄົ້ນຄວ້າການຫັນຫ້ອງສະໝຸດ ສຄຄຊ ໄປສູ່ຫ້ອງສະໝຸດອອນລາຍ | | | | | | ສຄຄຊ | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| | | 5.2.3 | **ແຜນວຽກ: ສ້າງສຸນໃຫ້ຄວາມຮູ້ກ່ຽວກັບຕະຫຼາດທຶນ** | | | | | | | |
| | | | ໜ້າວຽກ 1: ສຶກສາຄົ້ນຄວ້າ ກົນໄກ, ຮຸບແບບ ແລະ ເງື່ອນໄຂ ການສ້າງສຸນໃຫ້ຄວາມຮູ້ກ່ຽວກັບຕະຫຼາດທຶນ ຢູ່ ສປປ ລາວ | | | | | | ສຄຄຊ, ຕລຊລ, ບໍລິສັດຫຼັກຊັບ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | |
| | | | ໜ້າວຽກ 2: ຄົ້ນຄວ້າກຳນົດຮຸບແບບ ແລະ ຕິດຕັ້ງ ອຸປະກອນສິ່ງອຳນວຍຄວາມສະດວກເຂົ້າໃນຫ້ອງຝຶກອົບຮົມວຽກງານຫຼັກຊັບ | | | | | | ສຄຄຊ, ຕລຊລ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ | ສຳເລັດໃ |